ຕະຫຼາດທຶນລາວ
ANNIVERSARY
2010 - 2020

# 10 ປີ

## ແຫ່ງ

# ການກຳເນີດ ແລະ ເຕີບໃຫຍ່

## ຂອງ

# ຕະຫຼາດທຶນລາວ

## (10/2010-10/2020)

| | | |
|---|---|---|
| ຊື່ປຶ້ມ | : | 10 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂອງຕະຫຼາດທຶນລາວ (10/2010-10/2020) |
| ພິມຄັ້ງທີ | : | I |
| ປີພິມ | : | 2021 |
| ປະເພດປຶ້ມ | : | ເອກະສານສຳລັບຄົ້ນຄວ້າ |
| ພາສາພິມ | : | ລາວ |
| ເຈົ້າຂອງລິຂະສິດ (ດ້ານເນື້ອໃນ ແລະ ການຈັດພິມ) | : | ຄະນະກຳມະການຄຸ້ມຄອງຫຼັກຊັບ |
| ຂະໜາດປຶ້ມ | : | 21 ຊມ x 29 ຊມ |
| ຈຳນວນໜ້າ | : | 184 ໜ້າ |
| ຈຳນວນປຶ້ມ | : | 50 ຫົວ |
| ຈຸດປະສົງໃນການພິມ | : | ແຈກຢາຍ ແລະ ເຜີຍແຜ່ |

## ຄະນະຮັບຜິດຊອບດ້ານເນື້ອໃນ

## ຮ່າງປຶ້ມ 10 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂອງຕະຫຼາດທຶນລາວ (10/2010-10/2020)

ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເປັນຫົວໜ້າຄະນະ;

ທ່ານ ອ໊ອດ ພົນຊຽງດີ, ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ເປັນຮອງຫົວໜ້າຄະນະ;

ທ່ານ ວຽງຄຳ ວັນສີລາລົມ, ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເປັນຄະນະ;

ທ່ານ ວັນນະສັກ ກອງວົງສາ, ຫົວໜ້າພະແນກຫ້ອງການ ແລະ ບໍລິຫານ, ຕລຊລ ເປັນຄະນະ;

ທ່ານ ນາງ ອາລຸນນາ ສີວົງທອງ, ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ, ສຄຄຊ ເປັນຄະນະ;

ທ່ານ ວິລະເດດ ທອງວັນຄຳ, ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ, ສຄຄຊ ເປັນຄະນະ;

ທ່ານ ນາງ ສັນສະນີ ເພີມມະສານສັກ, ຮອງຫົວໜ້າພະແນກສັງລວມ, ຫ້ອງການ ທຫລ ເປັນຄະນະ;

ທ່ານ ວັນໄຊ ຫົງວິຈິດ, ຫົວໜ້າຂະແໜງ, ຕລຊລ ເປັນຄະນະ;

ທ່ານ ນາງ ພານິກອນ ແກ້ວລະຄອນ, ວິຊາການອາວຸໂສ, ຕລຊລ ເປັນຄະນະ;

ທ່ານ ນາງ ປະກາຍແກ້ວ ວຽງວິໄລ, ວິຊາການ, ສຄຄຊ ເປັນຄະນະ.

# ສາລະບານ


ຄຳເຫັນ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ........ 1

ຄຳເຫັນ ທ່ານ ສົມສະຫວາດ ເລັ່ງສະຫວັດ, ອະດີດຮອງນາຍົກລັດຖະມົນຕີ, ປະທານ ຄະນະຊີ້ນຳລວມ ການສ້າງຕັ້ງຕະຫຼາດຫຼັກຊັບ ແລະ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ........ 3

ຄຳເຫັນ ທ່ານ ຮສ ເດດພູວັງ ມູລຣັຕນ໌, ຫົວໜ້າຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບລາວ, ປະທານສະພາບໍລິຫານ ແລະ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ຜູ້ທຳອິດ ........ 5

ຄຳເຫັນ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ........ 7

ຄຳເຫັນ ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຜູ້ຊີ້ນຳວຽກງານຕະຫຼາດທຶນ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ ........ 9

ຄຳເຫັນ ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ........ 11

ຄຳເຫັນ ທ່ານ ອ໊ອດ ພົນຊຽງດີ, ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ........ 13

ພາກທີ I ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ (10/2010-102020)... 15

I. ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ........ 15

1. ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ........ 15
2. ໂຄງຮ່າງການຈັດຕັ້ງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)........ 18
3. ໂຄງຮ່າງການຈັດຕັ້ງ ຂອງຕະຫຼາດຫຼັກຊັບລາວ (ຕລຊລ)........ 21

II. ພາລະບົດບາດຂອງ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ........ 23

1. ບໍລິສັດຈົດທະບຽນ ........ 23
2. ບໍລິສັດຫຼັກຊັບ........ 24
3. ບໍລິສັດບໍລິຫານກອງທຶນ ເພື່ອການລົງທຶນ ........ 24
4. ບໍລິສັດປະເມີນມູນຄ່າຊັບສິນ ........ 25

5. ບໍລິສັດກວດສອບ ... 25
6. ທະນາຄານດູແລຊັບສິນ ... 25
7. ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ... 26
8. ທະນາຄານຕົວແທນເພື່ອການຊຳລະ ... 26
9. ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ... 26
10. ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມທຸລະກິດຫຼັກຊັບ ... 26
**ພາກທີ II ການກຳເນີດ ແລະ ການເຕີບໃຫຍ່ຂອງຕະຫຼາດທຶນ ສປປ ລາວ (2010-2020) ... 29**
I. ການກຳເນີດຂອງຕະຫຼາດທຶນ ສປປ ລາວ ... 29
II. ການເຕີບໃຫຍ່ຂອງຕະຫຼາດທຶນ ສປປ ລາວ (2010-2020) ... 31
1. ການຈັດຕັ້ງ ແລະ ການກໍ່ສ້າງພະນັກງານ ... 31
2. ການພັດທະນາວຽກງານຕະຫຼາດທຶນໃນໄລຍະ ປີ 2010-2020 ... 32
II. ຂໍ້ຄົງຄ້າງ ... 43
**ພາກທີ III ຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໄສທັດຮອດປີ 2035 ... 47**
I. ວິໄສທັດ ແລະ ທິດທາງລວມ ... 47
1. ວິໄສທັດຮອດປີ 2035 ... 47
2. ທິດທາງລວມ ... 47
II. ສະຫຼຸບການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຕະຫຼາດທຶນ 10 ປີ (ປີ 2011-2020) ... 47
III. ແຜນຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ... 49
IV. ແຜນພັດທະນາຂອງ ຕລຊລ ... 49
V. ແຜນພັດທະນາຂອງ ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ສະຖາບັນສີ່ກາງດ້ານຫຼັກຊັບອື່ນ ... 50
**ພາກທີ IV ພິທີສະຫຼຸບຜົນງານ ຂອງຕະຫຼາດທຶນລາວ ຄົບຮອບ 10 ປີ (2010-2020) ... 53**
I. ວາລະດຳເນີນພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ ... 53
II. ບົດດຳເນີນວາລະພິທີ ... 55
III. ບົດລາຍງານຜົນງານການເຄື່ອນໄຫວວຽກງານຕະຫຼາດທຶນ ຄົບຮອບ 10 ປີ ... 61

IV. ບົດຄຳເຫັນ ຂອງ ທ່ານ ອ໊ອດ ພົນຊຽງດີ.......................................................................71
V. ບົດອ່ານຂໍ້ຕົກລົງ ຕໍ່ວາລະຍ້ອງຍໍ-ຊົມເຊີຍ ໂດຍກົມຈັດຕັ້ງ ແລະ ພະນັກງານ, ທະນາຄານແຫ່ງ ສປປ ລາວ 73
VI. ບົດຄຳເຫັນຂອງ ທ່ານ ສອນໄຊ ສິດພະໄຊ, ຕາງໜ້າຂາຮຸ້ນ ຕລຊລ (ຝ່າຍລາວ) .............................75
VII. ບົດຄຳເຫັນຂອງ ທ່ານ ຈອງຈີວອນ ຕາງໜ້າຂາຮຸ້ນຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ (KRX) ................79
VIII. ບົດຄຳເຫັນຂອງ ທ່ານ SHIN Sung-soon ເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມແຫ່ງ ສ.ເກົາຫຼີ ປະຈຳ ສປປ ລາວ ..............................................................................................81
IX. ບົດຄຳເຫັນໂອ້ລົມຂອງຂັ້ນເທິງ.......................................................................85
**ພາກທີ V ຮູບພາບບັນຍາກາດ ພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ (10/2010-10/2020) ............................................................................................... 91**
I. ການເຄື່ອນໄຫວຂະບວນການຕ່າງໆເນື່ອງໃນໂອກາດສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ 91
1. ຂະບວນການວິຊາສະເພາະ .........................................................................91
2. ຂະບວນການກິລາ ..................................................................................91
3. ຂະບວນການຊ່ວຍເຫຼືອສັງຄົມ.......................................................................91
4. ຂະບວນການອື່ນໆ...................................................................................91
II. ຮູບພາບບັນຍາກາດພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ.................................93
**ພາກທີ VI ຕົວເລກສະຖິຕິ ແລະ ເສັ້ນສະແດງ ການເຄື່ອນໄຫວວຽກງານ 10 ປີ ຕະຫຼາດທຶນລາວ............. 129**
I. ຍອດສະສົມການລະດົມທຶນ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2020 (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ) .........................................................................................129
II. ມູນຄ່າການຊື້-ຂາຍ (2010-2020).....................................................................129
III. ມູນຄ່າຕະຫຼາດ (2010-2020).........................................................................130
IV. ດັດຊະນີຕະຫຼາດຫຼັກຊັບລາວ (2010-2020).............................................................130
V. ປະລິມານການຊື້-ຂາຍ ...............................................................................131
VI. ຖານຜູ້ລົງທຶນ .......................................................................................131
VII. ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນໃນ ຕລຊລ.........................................................132
VIII. ກອງທຶນປົກປ້ອງຄວາມສ່ຽງ (Joint Compensation Fund) ..........................................132

**ພາກທີ VII ເອກະສານຊ້ອນທ້າຍ ........................................................................................ 133**

I. ການກະກຽມການສ້າງຕັ້ງຕະຫຼາດທຶນລາວ ........................................................................... 133

II. ການເຕີບໃຫຍ່ຂອງຕະຫຼາດທຶນ ສປປ ລາວ (2010-2020)..................................................... 163

**ຄຳເຫັນ**

**ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

**ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)**

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 02 ທັນວາ 1975 ໂດຍສະເພາະ ພາຍຫຼັງທີ່ ພັກ ແລະ ລັດຖະບານ ໄດ້ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ຢ່າງມີຫຼັກການຂອງພັກ ນັບແຕ່ປີ 1986 ເປັນຕົ້ນມາ, ເສດຖະກິດ ຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ຊຶ່ງຂະແໜງການທະນາຄານ ໄດ້ປະກອບສ່ວນອັນສຳຄັນ ຕໍ່ການຂະຫຍາຍຕົວດັ່ງກ່າວ.

ອີງໃສ່ຄວາມຈຳເປັນ ໃນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່, ການສະໜອງທຶນຈາກທະນາຄານທຸລະກິດພຽງຢ່າງດຽວ ບໍ່ສາມາດຕອບສະໜອງໄດ້. ສະນັ້ນ, ຕະຫຼາດຫຼັກຊັບລາວ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 10 ເດືອນ 10 ປີ 2010 ຫຼື ໜຶ່ງທົດສະວັດກ່ອນໜ້ານີ້. ການສ້າງຕັ້ງຕະຫຼາດຫຼັກຊັບລາວ ແມ່ນຈຸດເລີ່ມຕົ້ນຂອງການສ້າງ ແລະ ພັດທະນາຕະຫຼາດທຶນດ້ວຍກົນໄກໃໝ່ ເພື່ອປະກອບສ່ວນສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ໃນ 10 ປີ ທີ່ຜ່ານມາ ລັດຖະບານ, ວິສາຫະກິດຂອງລັດ ແລະ ເອກະຊົນ ສາມາດລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ຜ່ານກົນໄກຕະຫຼາດທຶນ ໄດ້ເຖິງ 23.018 ຕື້ກີບ ກວມເອົາ 14,03% ຂອງ GDP ໂດຍການອອກຈຳໜ່າຍ ພັນທະບັດລັດຖະບານ, ຮຸ້ນສາມັນ ແລະ ຮຸ້ນກູ້ຢູ່ຕ່າງປະເທດ.

ສະນັ້ນ, ເພື່ອປະກອບສ່ວນຍູ້ແຮງຕະຫຼາດທຶນລາວໃຫ້ມີການພັດທະນາຢ່າງຕໍ່ເນື່ອງ ສາມາດສະໜອງແຫຼ່ງທຶນໄລຍະຍາວ ໃຫ້ແກ່ການຜະລິດທຸລະກິດ, ການຄ້າ ແລະ ການບໍລິການ ເພື່ອຊົມໃຊ້ພາຍໃນ ແລະ ກ້າວໄປເຖິງການຜະລິດເພື່ອທົດແທນການນຳເຂົ້າ ເທື່ອລະກ້າວ ພ້ອມທັງ ສ້າງໃຫ້ຕະຫຼາດທຶນລາວເປັນຕະຫຼາດທີ່ໜ້າລົງທຶນ, ລັດຖະບານ ແລະ ສະພາແຫ່ງຊາດ ໄດ້ອອກນິຕິກຳປົ່ນອ້ອມ ເພື່ອສະໜັບສະໜູນການເຄື່ອນໄຫວວຽກງານຕະຫຼາດທຶນ, ໄດ້ອອກຫຼາຍມາດຕະການເພື່ອປະຕິຮູບລັດວິສາຫະກິດ ໃຫ້ມີຄວາມເຂັ້ມແຂງຮອບດ້ານ ເພື່ອລະດົມທຶນຜ່ານຕະຫຼາດທຶນ. ພ້ອມດຽວກັນນີ້, ລັດຖະບານ ໄດ້ປັບຫຼຸດ ແລະ ຍົກເລີກອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມຈຳນວນໜຶ່ງ ສຳລັບບໍລິສັດຈົດທະບຽນ, ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເພື່ອດຶງດູດ ແລະ ສ້າງຄວາມສົນໃຈ ໃຫ້ແກ່ຜູ້ລະດົມທຶນ ແລະ ຜູ້ລົງທຶນ.

ໃນຊຸມປີຕໍ່ໜ້າ ພັກ ແລະ ລັດຖະບານ ຈະສືບຕໍ່ໃຫ້ການສະໜັບສະໜູນການພັດທະນາຕະຫຼາດທຶນລາວ ດ້ວຍຄວາມເປັນເຈົ້າການກວ່າເກົ່າ ໂດຍຈະເລັ່ງໃສ່ກວດກາຄືນການຈັດຕັ້ງປະຕິບັດບັນດາ ນະໂຍບາຍ ແລະ ມາດຕະການຕິດພັນກັບຕະຫຼາດທຶນ ທີ່ໄດ້ອອກໃນໄລຍະຜ່ານມາ ພ້ອມທັງ ເຂັ້ມງວດການຈັດຕັ້ງປະຕິບັດລະບຽບກົດໝາຍ ລະຫວ່າງ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ບໍລິສັດອື່ນໆ; ສ້າງກົນໄກ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ວິສາຫະກິດ ໂດຍສະເພາະວິສາຫະກິດຂອງລັດ ໂດຍຜ່ານກົນໄກປະຕິຮູບຢ່າງເໝາະສົມ ແລະ ເປັນຮູບປະທຳ ແນໃສ່ເຮັດໃຫ້ຕະຫຼາດທຶນລາວ ສາມາດຕອບສະໜອງດ້ານແຫຼ່ງທຶນຕາມແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ.

ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ, ຂ້າພະເຈົ້າ ຮູ້ສຶກປິຕິຍິນດີ ທີ່ໄດ້ມີຄໍາເຫັນຈໍານວນໜຶ່ງໃນປຶ້ມ **"10 ປີ ແຫ່ງການກໍາເນີດ ແລະ ການເຕີບໃຫຍ່ ຂອງຕະຫຼາດທຶນລາວ"**. ຂ້າພະເຈົ້າ, ຂໍສະແດງຄວາມຍ້ອງຍໍຊົມເຊີຍຕໍ່ ຄະນະກໍາມະການຄຸ້ມຄອງຫຼັກຊັບ, ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ແລະ ທຸກພາກສ່ວນ ພ້ອມທັງສະມາຊິກພັກ-ພະນັກງານທຸກຖ້ອນໜ້າແຕ່ອາດີດຈົນເຖິງປະຈຸບັນ ທີ່ໄດ້ປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນງານອັນໃຫຍ່ຫຼວງ ປະກອບສ່ວນໃຫ້ແກ່ການພັດທະນາຕະຫຼາດທຶນລາວ ກໍ່ຄືການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ຕະຫຼອດໄລຍະ 10 ປີ ທີ່ຜ່ານມາ.

ໃນຕໍ່ໜ້ານີ້ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ໃຫ້ບັນລຸຕາມຄາດໝາຍທີ່ໄດ້ກໍານົດໄວ້, ພວກເຮົາ ຕ້ອງສຸມໃສ່ພັດທະນາຕະຫຼາດທຶນ ໂດຍສະເພາະແມ່ນລະບົບ, ກົນໄກ ແລະ ລະບຽບການ ເພື່ອຮອງຮັບການອອກຈໍາໜ່າຍພັນທະບັດລັດຖະບານ ເພື່ອຊ່ວຍລັດຖະບານລະດົມທຶນ ແກ້ໄຂບັນຫາເສດຖະກິດມະຫາພາກ; ຕ້ອງປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຕລຊລ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ຮັບປະກັນການໃຫ້ບໍລິການມີຄວາມທັນສະໄໝ ແລະ ປອດໄພ; ທຸກພາກສ່ວນ ຕ້ອງພ້ອມກັນອອກແຮງປັບປຸງອົງປະກອບທີ່ປິ່ນອ້ອມໃຫ້ມີຄວາມສຸກງອມ ໂດຍສະເພາະແມ່ນ ການສ້າງຄວາມເຂັ້ມແຂງທາງດ້ານການເງິນ, ການຈັດຕັ້ງ ແລະ ແບບແຜນດໍາເນີນທຸລະກິດຂອງວິສາຫະກິດ ໂດຍສະເພາະແມ່ນ ວິສາຫະກິດຂອງລັດ; ສ້າງສະຖາບັນສື່ກາງດ້ານຫຼັກຊັບ, ຖານຜູ້ລົງທຶນພາຍໃນປະເທດ ລວມທັງຜູ້ລົງທຶນປະເພດບຸກຄົນ ແລະສະຖາບັນ, ບໍລິສັດຈົດທະບຽນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນອື່ນໆ ໃຫ້ມີຄວາມເຂັ້ມແຂງຮອບດ້ານ ໃຫ້ກາຍເປັນປັດໄຈຂັບເຄື່ອນຕະຫຼາດທຶນຢ່າງແຂງແຮງ; ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກໍາໃຫ້ເປັນລະບົບຄົບຊຸດ ບົນພື້ນຖານບົດຮຽນທີ່ດີຈາກສາກົນ ແລະ ເງື່ອນໄຂຕົວຈິງພາຍໃນປະເທດ ພ້ອມທັງ ເຂັ້ມງວດໃນການຄຸ້ມຄອງຕິດຕາມກວດກາການເຄື່ອນໄຫວຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ. ສິ່ງທີ່ຂາດບໍ່ໄດ້ ແມ່ນການພົວພັນຮ່ວມມື ທັງຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງປະສົບການ ແລະ ທຶນຮອນ ເພື່ອມາພັດທະນາຕະຫຼາດທຶນລາວ. ພິເສດ, ເນື່ອງຈາກວ່າຕະຫຼາດຫຼັກຊັບລາວ ເປັນບໍລິສັດຮ່ວມທຶນ ລະຫວ່າງ ລັດຖະບານສປປ ລາວ ກັບຕະຫຼາດຫຼັກຊັບ ສ.ເກົາຫຼີ, ສະນັ້ນ ຈຶ່ງຮຽກຮ້ອງມາຍັງຕະຫຼາດຫຼັກຊັບ ສ.ເກົາຫຼີ ໃນຖານະເປັນຄູ່ຮ່ວມທຶນ ຈົ່ງສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອຮອບດ້ານ ໂດຍສະເພາະແມ່ນ ການກໍ່ສ້າງດ້ານບຸກຄະລາກອນຂອງຕະຫຼາດຫຼັກຊັບລາວ ໃຫ້ມີຄວາມຮູ້ຄວາມສາມາດ ສົມຄູ່ກັບລະດັບການຂະຫຍາຍຕົວຂອງຕະຫຼາດທຶນໃນເງື່ອນໄຂໃໝ່, ສືບຕໍ່ເອົາໃຈໃສ່ພັດທະນາລະບົບໄອທີຂອງຕະຫຼາດຫຼັກຊັບລາວໃຫ້ມີຄວາມທັນສະໄໝ ພ້ອມທັງຕິດຕາມກວດກາຢ່າງໃກ້ສິດ ຮັບປະກັນລະບົບດັ່ງກ່າວໃຫ້ດໍາເນີນການຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

ດ້ວຍມູນເຊື້ອ, ບົດຮຽນ ແລະ ຜົນງານການປະກອບສ່ວນດັ່ງກ່າວນັ້ນ ຂ້າພະເຈົ້າ ເຊື່ອໝັ້ນວ່າ ຕະຫຼາດທຶນລາວ ຈະກາຍເປັນຂໍກະແຈໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ ຕາມວິໄສທັດຮອດປີ 2030 ທີ່ໄດ້ກໍານົດໄວ້ ດ້ວຍຈັງຫວະທີ່ໜັກແໜ້ນ ແລະ ເຂັ້ມແຂງ ແນໃສ່ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ບັນລຸຕາມແຜນການທີ່ໄດ້ວາງໄວ້.

## ຄຳເຫັນ

## ທ່ານ ສົມສະຫວາດ ເລັ່ງສະຫວັດ, ອະດີດຮອງນາຍົກລັດຖະມົນຕີ, ປະທານ ຄະນະຊີ້ນຳລວມ ການສ້າງຕັ້ງຕະຫຼາດຫຼັກຊັບ ແລະ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)

ຂ້າພະເຈົ້າ ໃນນາມຕາງໜ້າ ຄະນະຊີ້ນຳລວມ ການສ້າງຕັ້ງຕະຫຼາດຫຼັກຊັບ ແລະ ທັງເປັນ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ ຮູ້ສຶກເປັນກຽດທີ່ໄດ້ມີຄຳເຫັນ ແລະ ສະແດງຄວາມຮູ້ສຶກຂອງຕົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ໃນຄັ້ງນີ້.

ໃນຖານະທີ່ຂ້າພະເຈົ້າ ເປັນຜູ້ໜຶ່ງທີ່ມີສ່ວນຮ່ວມໃນຂະບວນວິວັດແຫ່ງການກຳເນີດຂອງຕະຫຼາດທຶນລາວ ເຫັນວ່າ ຕະຫຼາດທຶນລາວ ມີບົດບາດສຳຄັນ ແລະ ມີຄວາມຈຳເປັນຢ່າງຍິ່ງຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່ ໂດຍສະເພາະແມ່ນການສະໜອງແຫຼ່ງທຶນໄລຍະກາງ-ຍາວເປັນຈຳນວນຫຼາຍ ໃຫ້ແກ່ຫົວໜ່ວຍວິສາຫະກິດ ທັງພາກລັດ ແລະ ເອກະຊົນ. ຖ້າອີງໃສ່ການສະໜອງແຫຼ່ງທຶນ ຂອງລະບົບທະນາຄານພຽງຢ່າງດຽວຄືໃນເມື່ອກ່ອນ ແມ່ນບໍ່ສາມາດຕອບສະໜອງໄດ້ຢ່າງພຽງພໍກັບຄວາມຕ້ອງການພັດທະນາ ຍ້ອນວ່າ ແຫຼ່ງທຶນ ຂອງລະບົບທະນາຄານ ແມ່ນແຫຼ່ງທຶນໄລຍະສັ້ນເປັນສ່ວນຫຼາຍ ຖ້າຈະລໍຄອຍແຕ່ການຊ່ວຍເຫຼືອ ຫຼື ການກູ້ຢືມໂດຍກົງຈາກຕ່າງປະເທດ ອາດຈະບໍ່ທ່ວງທັນກັບການເລັ່ງທວງຂອງການພັດທະນາປະເທດ. ນອກຈາກນີ້, ຕະຫຼາດທຶນ ຍັງເປັນກົນໄກສ້າງຄວາມເຂັ້ມແຂງທາງດ້ານ ການເງິນ, ການບັນຊີ, ການຈັດຕັ້ງ, ການຄຸ້ມຄອງບໍລິຫານຢ່າງເປັນມືອາຊີບ ແລະ ເປັນເຄື່ອງມືທາງອ້ອມສ້າງຄວາມອາດສາມາດແຂ່ງຂັນ ໃຫ້ແກ່ວິສາຫະກິດ ຕໍ່ພາຍໃນ ແລະ ພາຍນອກຢ່າງຫຼີກລ່ຽງບໍ່ໄດ້.

ພາຍຫຼັງການສະຖາປະນາປະເທດ ເປັນ ສປປ ລາວ ເຫັນວ່າ ເສດຖະກິດຂອງ ສປປ ລາວ ເປັນລັກສະນະເສດຖະກິດແບບທຳມະຊາດ ແລະ ເຄິ່ງທຳມະຊາດເປັນສ່ວນໃຫຍ່ ເຊິ່ງອີງໃສ່ແນວຄິດການພັດທະນາປະເທດຊາດຂອງ ທ່ານປະທານ ໄກສອນ ພົມວິຫານ ເພື່ອນຳພາ ສປປ ລາວ ກ້າວເຂົ້າສູ່ປະເທດສັງຄົມນິຍົມ ພວກເຮົາຈຳເປັນຕ້ອງໄດ້ຂະຫຍາຍເສດຖະກິດສິນຄ້າໃຫ້ນັບມື້ນັບກວ້າງ ທັງນີ້ ຕິດພັນກັບການຂະຫຍາຍຕົວຂອງເສດຖະກິດ ກໍ່ຕ້ອງປະກອບມີຫຼາຍປັດໄຈສະໜັບສະໜູນ ເຊິ່ງປັດໄຈທີ່ສຳຄັນນັ້ນ ກໍ່ຄື ເງິນທຶນ ແລະ ຖ້າຈະອີງໃສ່ແຫຼ່ງທຶນຈາກທະນາຄານ ກໍ່ເຫັນວ່າ ມີຄວາມຈຳກັດ ແລະ ບໍ່ທັນພຽງພໍຕໍ່ຄວາມຕ້ອງການ ຈຶ່ງຈຳເປັນຕ້ອງມີການເປີດກວ້າງລະດົມທຶນຈາກສັງຄົມ. ສະນັ້ນ, ພາຍໃຕ້ການຊີ້ນຳ-ນຳພາຈາກລັດຖະບານ ຂ້າພະເຈົ້າ ພ້ອມດ້ວຍຄະນະ ກໍ່ໄດ້ເອົາໃຈໃສ່ຄົ້ນຄວ້າ ພ້ອມທັງ ຖອດຖອນບົດຮຽນກັບປະເທດເພື່ອນບ້ານ ແລະ ສາກົນ ຈົນສາມາດຮ່ວມທຶນກັບ ຕະຫຼາດຫຼັກຊັບ ສ.ເກົາຫຼີ ສ້າງຕັ້ງຕະຫຼາດຫຼັກຊັບລາວ ຂຶ້ນໃນວັນທີ 10 ເດືອນ 10 ປີ 2010.

ສະນັ້ນ, ອີງໃສ່ຄວາມຈຳເປັນຕົວຈິງຄືດັ່ງກ່າວ ພັກຈຶ່ງໄດ້ກຳນົດທິດທາງຢ່າງຈະແຈ້ງ ໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ ຄື: ໃຫ້ ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າ ສ້າງ ແລະ ພັດທະນາຕະຫຼາດການເງິນ ເພື່ອລະດົມທຶນໄລຍະຍາວ ແລະ ເປີດກວ້າງການໃຫ້ສິນເຊື່ອໄລຍະຍາວ ເພື່ອສ້າງພື້ນຖານໂຄງລ່າງໃຫ້ມີຄວາມໜັກແໜ້ນ. ອີງໃສ່ທິດທາງດັ່ງກ່າວ ລັດຖະບານ ຈຶ່ງໄດ້ກຳນົດໃຫ້ສ້າງຕັ້ງຕະຫຼາດທຶນຂຶ້ນ ໃນໄລຍະທ້າຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010). ສະນັ້ນ, ພາຍຫຼັງກະກຽມຄວາມພ້ອມຮອບດ້ານ ຕະຫຼາດຫຼັກຊັບລາວ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 10 ເດືອນ 10 ປີ 2010 ຫຼື ໜຶ່ງທົດສະວັດກ່ອນໜ້ານີ້. ການສ້າງຕັ້ງ ຕະຫຼາດຫຼັກຊັບລາວ ເປັນຂີດໝາຍທາງປະຫວັດສາດແຫ່ງການສ້າງຄວາມສົມບູນແບບ

ໃຫ້ແກ່ລະບົບຕະຫຼາດການເງິນ ຢູ່ ສປປ ລາວ ພ້ອມທັງ ເປັນການປູພື້ນຖານທີ່ໜັກແໜ້ນ ໃຫ້ແກ່ຫົວໜ່ວຍວິສາຫະກິດ ທັງພາກລັດ ແລະ ເອກະຊົນ ໃນການເຂົ້າຫາແຫຼ່ງທຶນໄລຍະຍາວ ເພື່ອຂະຫຍາຍທຸລະກິດຂອງຕົນ ພ້ອມທັງ ເປັນການສ້າງທາງເລືອກໃໝ່ໃນການລົງທຶນໃຫ້ແກ່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ.

ຂ້າພະເຈົ້າ ເຫັນວ່າ ພະນັກງານ-ສະມາຊິກພັກ ໃນຂົງເຂດຕະຫຼາດທຶນ ນັບແຕ່ຮຸ່ນກໍ່ຕັ້ງ ຈົນເຖິງຮຸ່ນປັດຈຸບັນ ແມ່ນໄດ້ປະກອບສ່ວນຢ່າງສຳຄັນ ເຂົ້າໃນພາລະກິດແຫ່ງການພັດທະນາຕະຫຼາດທຶນ ເຮັດໃຫ້ຕະຫຼາດທຶນເຕີບໃຫຍ່ຂະຫຍາຍຕົວ ເຖິງວ່າໃນຈັງຫວະທີ່ຊ້າ ແຕ່ມີບາດກ້າວເດີນທີ່ໜັກແໜ້ນ. ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍຊົມເຊີຍມາຍັງພະນັກງານ-ສະມາຊິກພັກ ໃນຂົງເຂດຕະຫຼາດທຶນລາວ ທີ່ໄດ້ປະກອບສ່ວນເຂົ້າໃນຜົນສຳເລັດດັ່ງກ່າວ. ພ້ອມນີ້, ກໍ່ຮຽກຮ້ອງໃຫ້ພະນັກງານຮຸ່ນສືບທອດ ຈົ່ງສືບຕໍ່ບຸກບືນຫ້າວຫັນ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ທີ່ໄດ້ຮັບມອບໝາຍ ໃຫ້ມີຜົນສຳເລັດທີ່ຍິ່ງໃຫຍ່ກວ່າເກົ່າ.

**ຄຳເຫັນ**

**ທ່ານ ຮສ ເດດພູວົງ ມູລຣັຕນ໌, ຫົວໜ້າຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບລາວ,**

**ປະທານສະພາບໍລິຫານ ແລະ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ຜູ້ທຳອິດ**

**ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)**

ຂ້າພະເຈົ້າ ໃນນາມຕາງໜ້າ ຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບລາວ, ປະທານສະພາບໍລິຫານ ແລະ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ຜູ້ທຳອິດ ຮູ້ສຶກເປັນກຽດທີ່ໄດ້ມີຄຳເຫັນ ແລະ ສະແດງຄວາມຮູ້ສຶກຂອງຕົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ.

ເວົ້າລວມແລ້ວ, ການສ້າງຕັ້ງຕະຫຼາດຫຼັກຊັບລາວ ໄດ້ມີທ່າແໜງມາຕັ້ງແຕ່ປີ 1997 ໂດຍທ່ານ ນາງ ປານີ ຍາທໍ່ຕູ້, ອາດີດຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ຊີ້ນຳໃຫ້ມີການຄົ້ນຄວ້າ, ປັບປຸງ ແລະ ອອກນິຕິກຳເພີ່ມ ເຕີມ ເພື່ອຂົນຂວາຍຊອກຫາແຫຼ່ງທຶນ ໃຫ້ແກ່ການຜະລິດ ແລະ ການບໍລິການ ໂດຍໄດ້ຊີ້ນຳໂດຍກົງໃຫ້ຂ້າພະເຈົ້າ ຄົ້ນຄວ້າ ແລະ ຮ່າງລະບຽບກ່ຽວກັບຕະຫຼາດການເງິນ ໂດຍໃຫ້ກວມເອົາທັງ ຕະຫຼາດເງິນ ແລະ ຕະຫຼາດທຶນ. ການ ຄົ້ນຄວ້າຮ່າງລະບຽບດັ່ງກ່າວ ເຮັດໃຫ້ພວກເຮົາຮັບຮູ້ ແລະ ເຂົ້າໃຈກ່ຽວກັບຄວາມຈຳເປັນໃນການສ້າງຕັ້ງຕະຫຼາດທຶນ ຫຼາຍຂຶ້ນ. ສະນັ້ນ, ມາຮອດເດືອນ 2 ປີ 2002, ທ່ານ ຜູ້ວ່າການ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າຮ່າງດຳລັດ ວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ໄດ້ປັບປຸງຄະນະດັ່ງກ່າວ ໃນປີ 2005 ແລະ 2006 ຕາມລຳດັບ.

ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການຄົ້ນຄວ້າສ້າງດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ຄະນະ ຮັບຜິດຊອບຄົ້ນຄວ້າຮ່າງດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໄດ້ສຶກສາເບື້ອງຕົ້ນກ່ຽວກັບວຽກງານ ຕະຫຼາດທຶນ ໂດຍໄດ້ສຶກສາຈາກທິດສະດີ ແລະ ພຶດຕິກຳຕົວຈິງ ລວມທັງ ການໄປຖອດຖອນບົດຮຽນຢູ່ຕ່າງປະເທດ ເປັນຕົ້ນແມ່ນ ສສ.ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ປະເທດ ໄທ, ປະເທດ ລຸກຊຳບວກ ແລະ ບ່ອນອື່ນໆຈຳນວນ ໜຶ່ງ ເຊິ່ງນຳໂດຍ ທ່ານ ສົມສະຫວາດ ເລັ່ງສະຫວັດ, ອາດີດຮອງນາຍົກລັດຖະມົນຕີ, ປະທານຄະນະຊີ້ນຳລວມໃນ ການສ້າງຕັ້ງຕະຫຼາດຫຼັກຊັບລາວ. ຈາກຜົນການສຶກສາເບື້ອງຕົ້ນ ເຫັນວ່າ ການສ້າງຕັ້ງຕະຫຼາດຫຼັກຊັບຢູ່ ສປປ ລາວ ແມ່ນຄວາມຈຳເປັນພາວະວິໄສ.

ສະນັ້ນ, ທະນາຄານແຫ່ງ ສປປ ລາວ ໂດຍໄດ້ຮັບການເຫັນດີຈາກລັດຖະບານ ຈຶ່ງໄດ້ເຊັນ ບົດບັນທຶກຄວາມ ເຂົ້າໃຈ (MOU) ຄັ້ງທີ 1 ກັບຕະຫຼາດຫຼັກຊັບ ສ.ເກົາຫຼີ ທີ່ນະຄອນຫຼວງ ເຊອູນ, ປະເທດ ສ.ເກົາຫຼີ ເພື່ອສຶກສາຄວາມ ເປັນໄປໄດ້ຮ່ວມກັນໃນການສ້າງຕັ້ງຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃນເດືອນ 9 ປີ 2007. ບົນພື້ນຖານຜົນຂອງການ ສຶກສາຄວາມເປັນໄປໄດ້ດັ່ງກ່າວ ທັງສອງຝ່າຍ ຈຶ່ງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຄັ້ງທີ 2 ໃນເດືອນ 11 ປີ 2008, ທີ່ນະຄອນຫຼວງວຽງຈັນ ເພື່ອກຳນົດເນື້ອໃນຕົ້ນຕໍໃນການຮ່ວມທຶນສ້າງຕັ້ງຕະຫຼາດຫຼັກຊັບລາວ. ສະນັ້ນ, ມາເຖິງເດືອນ 7 ປີ 2009 ທັງສອງຝ່າຍຈຶ່ງໄດ້ເຊັນບົດບັນທຶກການສ້າງຕັ້ງຕະຫຼາດຫຼັກຊັບລາວ (JVA) ຮ່ວມກັນ, ທີ່ນະຄອນຫຼວງພະບາງ.

ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ລັດຖະບານໄດ້ອອກດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນເດືອນ 5 ປີ 2010. ພ້ອມດຽວກັນນີ້, ອີງໃສ່

ດຳລັດດັ່ງກ່າວ ຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບ ໄດ້ຄົ້ນຄວ້າສ້າງນິຕິກຳໃຕ້ດຳລັດຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ແລະ ສະມາຊິກຂອງຕົນ. ຄຽງຄູ່ກັນນີ້, ຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບ ໄດ້ຮີບຮ້ອນສຸມໃສ່ການສ້າງບຸກຄະລາກອນ ເປັນສຳຄັນ ແລະ ໄດ້ກະກຽມລະບົບໄອທີ ແລະ ສິ່ງຈຳເປັນອື່ນໆ ເປັນອັນຕົ້ນຕໍ ເພື່ອຮັບປະກັນການເຄື່ອນໄຫວທຸລະກິດຂອງຕະຫຼາດຫຼັກຊັບລາວ.

ເຖິງວ່າ ການກະກຽມສ້າງຕັ້ງຕະຫຼາດຫຼັກຊັບລາວ ດຳເນີນມາບົນເສັ້ນທາງທີ່ຍາວໄກ, ລະອິດລະອ້ຽວ, ມີທັງຂໍ້ສະດວກ ແລະ ສິ່ງທ້າທາຍຫຼາຍດ້ານ ແຕ່ຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ສິດຕິດແທດ ຂອງຄະນະຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບລາວ ບວກກັບ ຄວາມມານະອົດທົນ ແລະ ຄວາມຮັບຜິດຊອບສູງຂອງຄະນະສ້າງຕັ້ງຕະຫຼາດຫຼາດຫຼັກຊັບລາວ ຈຶ່ງເຮັດໃຫ້ພວກເຮົາສາມາດສ້າງຕັ້ງຕະຫຼາດຫຼັກຊັບລາວ ຕາມແຜນການໃນວັນທີ 10 ເດືອນ 10 ປີ 2010 ແລະ ສາມາດໃຫ້ບໍລິການຊື້-ຂາຍຫຼັກຊັບ ໃນວັນທີ 11 ເດືອນ 1 ປີ 2011. ອັນນີ້ ເປັນພຽງຈຸດເລີ່ມຕົ້ນ ຂອງການກຳເນີດເກີດຂຶ້ນຂອງຕະຫຼາດທຶນລາວເທົ່ານັ້ນ. ສະນັ້ນ, ເພື່ອຮັບປະກັນການດຳລົງຄົງຕົວ ແລະ ການຂະຫຍາຍຕົວແບບຍືນຍົງຂອງຕະຫຼາດທຶນລາວ ແນໃສ່ຕອບສະໜອງນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ຢ່າງຮອບດ້ານນັ້ນ, ພັກ ແລະ ລັດຖະບານ, ວິສາຫະກິດທັງພາກລັດ ແລະ ເອກະຊົນ, ຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ສະມາຊິກພັກ-ພະນັກງານຂອງຂະແໜງການຕະຫຼາດທຶນ ແລະ ທຸກພາກສ່ວນໃນສັງຄົມ ຕ້ອງເຫັນຄວາມສຳຄັນ ແລະ ຈຳເປັນ ຂອງຕະຫຼາດທຶນລາວ ແລະ ພ້ອມກັນຕັດສິນໃຈສູງ ເພື່ອນຳເອົາຕະຫຼາດທຶນລາວກ້າວໄປຕາມວິໄສທັດພັດທະນາຕະຫຼາດທຶນຂອງຕົນ.

ສະນັ້ນ, ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ, ໃນນາມຕາງໜ້າຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບລາວ ຂ້າພະເຈົ້າຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍຊົມເຊີຍມາຍັງການນຳທຸກຂັ້ນ ທີ່ໄດ້ໃຫ້ການຊີ້ນຳ-ນຳພາການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ດ້ວຍຄວາມຮັບຜິດຊອບສູງ ແລະ ຂໍສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍມາຍັງ ພະນັກງານທຸກຖ້ວນໜ້າ ໃນຂົງເຂດຕະຫຼາດທຶນລາວ ທີ່ໄດ້ປະກອບສ່ວນເຂົ້າໃນວຽກງານດັ່ງກ່າວຢ່າງບໍ່ຮູ້ອິດ ຮູ້ເມື່ອຍ. ຂໍໃຫ້ຕະຫຼາດທຶນລາວ ຈົ່ງດຳລົງຄົງຕົວ ແລະ ຂະຫຍາຍຕົວຄຽງຄູ່ກັບສັງຄົມລາວຕະຫຼອດໄປ.

## ຄໍາເຫັນ

## ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

## ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)

ຂ້າພະເຈົ້າ ໃນນາມຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຮູ້ສຶກເປັນກຽດທີ່ໄດ້ມີຄໍາເຫັນ ແລະ ສະແດງຄວາມຮູ້ສຶກຂອງຕົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ.

ອີງຕາມທິດສະດີ ແລະ ພຶດຕິກໍາຕົວຈິງ ໄດ້ຢັ້ງຢືນວ່າ ຕະຫຼາດທຶນ ມີຄວາມສໍາຄັນ ແລະ ຈໍາເປັນຕໍ່ການພັດທະນາເສດຖະກິດ-ສັງຄົມ ສໍາລັບປະເທດ ທີ່ພັດທະນາແລ້ວ, ກໍາລັງພັດທະນາ ແລະ ປະເທດດ້ອຍພັດທະນາ. ສະນັ້ນ, ພັກ ແລະ ລັດຖະບານ ຂອງ ສປປ ລາວ ຈຶ່ງໄດ້ມີວິໄສທັດຢ່າງຊັດເຈນ ໃຫ້ສ້າງຕັ້ງຕະຫຼາດຫຼັກຊັບລາວຂຶ້ນໃນ 10 ປີກ່ອນໜ້ານີ້. ໂດຍໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກລັດຖະບານແຫ່ງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ໄດ້ຖືກມອບໝາຍຈາກລັດຖະບານ ເປັນຜູ້ຕາງໜ້າຂາຮຸ້ນຝ່າຍລາວ ຮ່ວມທຶນກັບ ຕະຫຼາດຫຼັກຊັບ ສ.ເກົາຫຼີ ເພື່ອສ້າງຕັ້ງຕະຫຼາດຫຼັກຊັບລາວຂຶ້ນໃນວັນທີ 10 ເດືອນ 10 ປີ 2010 ເພື່ອຕອບສະໜອງແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ. ໃນໄລຍະກະກຽມສ້າງຕັ້ງຕະຫຼາດຫຼັກຊັບລາວ, ຄະນະພັກ, ຄະນະຜູ້ວ່າການ ແລະ ພະນັກງານຂອງທະນາຄານແຫ່ງ ສປປ ລາວ ໄດ້ອຸທິດເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການກະກຽມຄວາມພ້ອມຮອບດ້ານ ເຮັດໃຫ້ຕະຫຼາດຫຼັກຊັບລາວສາມາດສ້າງຕັ້ງຂຶ້ນຕາມແຜນການທີ່ໄດ້ກໍານົດໄວ້.

ຕະຫຼອດໄລຍະເວລາ 10 ປີທີ່ຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເປັນເຈົ້າການຄົ້ນຄວ້າບັນຈຸສັບຊ້ອນພະນັກງານວິຊາການ ໃຫ້ແກ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອຮັບປະກັນການປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ ຄະນະກໍາມະການຄຸ້ມຄອງຫຼັກຊັບໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບ; ໄດ້ບໍາລຸງສ້າງພະນັກງານທາງດ້ານ ທິດສະດີການເມືອງ, ວິຊາສະເພາະຕະຫຼາດທຶນ ແລະ ພາສາຕ່າງປະເທດ ທັງຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ດ້ວຍທຶນຊ່ວຍເຫຼືອລ້າ ຈາກປະເທດເພື່ອນມິດ ແລະ ສາກົນ ແລະ ທຶນສົມທົບຂອງທະນາຄານແຫ່ງ ສປປ ລາວ ຈໍານວນຫຼາຍສົມຄວນ. ນອກຈາກນີ້, ທະນາຄານແຫ່ງ ສປປ ລາວ ໄດ້ຕອບສະໜອງງົບປະມານໃຫ້ແກ່ການເຄື່ອນໄຫວວຽກງານຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຢ່າງພຽງພໍ ແລະ ທັນເວລາ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສາມາດເຄື່ອນໄຫວວຽກງານຂອງຕົນໄດ້ຢ່າງຄ່ອງຕົວ, ຕະຫຼາດທຶນລາວ ສາມາດເຄື່ອນໄຫວບົນພື້ນຖານລະບຽບການ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນໄດ້ໂດຍພື້ນຖານ.

ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຢ່າງສູງມາຍັງການນໍາທຸກຂັ້ນ ທີ່ໄດ້ໃຫ້ການຊີ້ນໍາຢ່າງໃກ້ສິດ ແລະ ຕໍ່ເນື່ອງ ຈົນເຮັດໃຫ້ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດທຶນລາວມີຜົນສໍາເລັດ. ຂໍຂອບໃຈຄະນະນໍາ ແລະ ພະນັກງານຈາກທຸກພາກສ່ວນທີ່ໄດ້ປະກອບສ່ວນເຂົ້າໃນການເຄື່ອນໄຫວ ວຽກງານຕະຫຼາດທຶນ ໃນໄລຍະຜ່ານມາ. ຂໍອວຍພອນໃຫ້ຕະຫຼາດທຶນລາວ ປະສົບຜົນສໍາເລັດຢ່າງຈົບງາມ.

**ຄຳເຫັນ**

**ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຜູ້ຊີ້ນຳວຽກງານຕະຫຼາດທຶນ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)**

ຂ້າພະເຈົ້າ ໃນນາມເປັນຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຜູ້ທຳອິດ, ຮູ້ສຶກເປັນກຽດທີ່ໄດ້ມີຄຳເຫັນ ແລະ ສະແດງຄວາມຮູ້ສຶກຂອງຕົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ໃນຄັ້ງນີ້.

ເພື່ອປະກອບສ່ວນປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ແນໃສ່ພັດທະນາປະເທດ ໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ໂດຍຊຸກຍູ້ການເຕີບໂຕຢ່າງຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ຢ່າງຂາດຕົວໃນປີ 2025 ພ້ອມທັງ ສ້າງບາດລ້ຽວໃໝ່ໃນການພັດທະນາປະເທດ ໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງລະດັບສູງ (High-Middle Income Country) ຕາມທິດສະດີເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ. ຜ່ານມາຂະແໜງການທະນາຄານ ໄດ້ມີບົດບາດສຳຄັນໃນການສະໜອງແຫຼ່ງທຶນ ໃຫ້ແກ່ລະບົບເສດຖະກິດ ນັບແຕ່ໄລຍະຕໍ່ສູ້ປົດປ່ອຍຊາດ ກໍຄື ໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ແຕ່ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ ການສະໜອງແຫຼ່ງທຶນຈາກຂະແໜງການທະນາຄານພຽງຢ່າງດຽວເຫັນວ່າບໍ່ແທດເໝາະກັບຄວາມຮຽກຮ້ອງຕ້ອງການເທົ່າທີ່ຄວນ. ສະນັ້ນ, ການສ້າງຕັ້ງຕະຫຼາດຫຼັກຊັບລາວ ກໍ່ຄືການພັດທະນາກົນໄກຕະຫຼາດທຶນ ຈຶ່ງກາຍເປັນວຽກບູລິມະສິດໜຶ່ງ ທີ່ຫຼີກລ່ຽງບໍ່ໄດ້ ໃນການພັດທະນາລະບົບການເງິນ-ເງິນຕາຂອງ ສປປ ລາວ.

ຕະຫຼອດໄລຍະເວລາ 10 ປີຜ່ານມາ, ຕະຫຼາດທຶນລາວ ເວົ້າລວມ, ເວົ້າສະເພາະ ແມ່ນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຜ່ານຫົນທາງອັນລະອຽດລະອ້ຽວພໍສົມຄວນ ໃນການສ້າງຕັ້ງກົງຈັກ, ການບັນຈຸຊັບຊ້ອນ ແລະ ກໍ່ສ້າງບຸກຄະລາກອນທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນຄວາມຮູ້ຄວາມສາມາດດ້ານວຽກງານຕະຫຼາດທຶນ, ການສ້າງລະບົບ ແລະ ກົນໄກປະຕິບັດງານ ແລະ ນິຕິກຳໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

ຕະຫຼອດໄລຍະເວລາ 4 ປີກວ່າ ທີ່ຂ້າພະເຈົ້າໄດ້ປະຕິບັດໜ້າທີ່ ໃນຖານະເປັນຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຜູ້ທຳອິດ, ຂ້າພະເຈົ້າ ໄດ້ສຸມໃສ່ການສ້າງນິຕິກຳ ເປັນອັນຕົ້ນຕໍ ເປັນຕົ້ນແມ່ນ: ຍົກດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ມາເປັນ ກົດໝາຍວ່າດ້ວຍຫຼັກຊັບ ໃນເດືອນ ທັນວາ ປີ 2012 ເນື່ອງຈາກວ່າ ດຳລັດສະບັບດັ່ງກ່າວ ຂາດບັນດາຂໍ້ກຳນົດກ່ຽວກັບ ການສ້າງຕັ້ງ ແລະ ເຄື່ອນໄຫວຂອງສະຖາບັນສີ່ກາງດ້ານຫຼັກຊັບ, ການອອກຈຳໜ່າຍຮຸ້ນກູ້, ການສ້າງຕັ້ງ ແລະ ເຄື່ອນໄຫວຂອງກອງທຶນຮ່ວມ ທີ່ເປັນກົນໄກສົ່ງເສີມການລົງທຶນຂອງຜູ້ລົງທຶນລາຍຍ່ອຍ ແລະ ຍັງຂາດເນື້ອໃນທີ່ສ່ອງແສງເຖິງການປົກປ້ອງຜູ້ລົງທຶນ; ໄດ້ຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍ ຫຼັກຊັບ ຈຳນວນຫຼາຍສະບັບ ເພື່ອຮອງຮັບໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແລະ ສະຖາບັນ

ສີ່ກາງດ້ານຫຼັກຊັບ. ໃນໄລຍະຕົ້ນຂອງການສ້າງຕັ້ງຕະຫຼາດຫຼັກຊັບລາວ, ໄດ້ອະນຸຍາດດຳເນີນທຸລະກິດຫຼັກຊັບ ໃຫ້ບໍລິສັດຫຼັກຊັບຈຳນວນໜຶ່ງ ເພື່ອເຮັດໜ້າທີ່ກະກຽມຄວາມພ້ອມຮອບດ້ານ ໃຫ້ແກ່ວິສາຫະກິດ ເພື່ອອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ; ໄດ້ຮັບຮອງທະນາຄານທຸລະກິດ ເພື່ອເຮັດໜ້າທີ່ເປັນທະນາຄານຕົວແທນເພື່ອການຊຳລະ ແລະ ໄດ້ຮັບຮອງບໍລິສັດກວດສອບ ເພື່ອເຮັດໜ້າທີ່ກວດສອບກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ແລະ ໄດ້ຮັບຮອງທະນາຄານດູແລຊັບສິນ ເພື່ອເຮັດໜ້າທີ່ດູແລບັນຊີເງິນ ແລະ ບັນຊີຫຼັກຊັບຂອງຜູ້ລົງທຶນ ໂດຍສະເພາະແມ່ນ ຜູ້ລົງທຶນປະເພດສະຖາບັນ. ພ້ອມດຽວກັນນີ້, ໄດ້ສຸມໃສ່ກະກຽມຄວາມພ້ອມຂອງລັດວິສາຫະກິດ 2 ແຫ່ງ ເພື່ອຫັນເປັນມະຫາຊົນ, ອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ທະນາຄານການຄ້າຕ່າງປະເທດລາວ ແລະ ບໍລິສັດ ລັດວິສາຫະກິດໄຟຟ້າ ລາວ. ສຳລັບລັດວິສາຫະກິດໄຟຟ້າລາວ ໄດ້ແຍກອອກເປັນ 2 ນິຕິບຸກຄົນຄື: ລັດວິສາຫະກິດໄຟຟ້າ ລາວ ແລະ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ເຊິ່ງລັດວິສາຫະກິດໄຟຟ້າ ລາວ ຍັງເປັນລັດວິສາຫະກິດໂດຍລົງເລິກທຸລະກິດດ້ານລະບົບສາຍສົ່ງ ເປັນຕົ້ນຕໍ. ສ່ວນບໍລິສັດຜະລິດ-ໄຟຟ້າ ລາວ ມະຫາຊົນ ໄດ້ລົງເລິກການຜະລິດກະແສໄຟຟ້າ ແລະ ການໃຫ້ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາເຂື່ອນ. ຜ່ານການກະກຽມຕົວຈິງ ເຫັນວ່າ ມີທັງຂໍ້ສະດວກ ແລະ ສິ່ງທ້າທາຍຈຳນວນບໍ່ໜ້ອຍ ເນື່ອງຈາກເປັນວຽກງານໃໝ່ ແລະ ຂາດປະສົບການ. ແຕ່ດ້ວຍຄວາມເປັນເຈົ້າການ ແລະ ການສະໜັບສະໜູນຈາກທຸກພາກສ່ວນ ເຮັດໃຫ້ພວກເຮົາສາມາດຫັນທັງສອງລັດວິສາຫະກິດ ລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຕາມແຜນການ.

ເຖິງວ່າ ຂ້າພະເຈົ້າປະກອບສ່ວນວຽກງານນຳສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນໄລຍະເວລາບໍ່ຫຼາຍປານໃດ ແຕ່ຂ້າພະເຈົ້າ ຕີລາຄາວ່າ ວຽກງານຕະຫຼາດທຶນ ເປັນວຽກໃໝ່, ມີຄວາມສະຫຼັບສັບຊ້ອນ ແລະ ທ້າທາຍ ແຕ່ເປັນໜ້າທີ່ການເມືອງທີ່ມີກຽດສຳລັບຂ້າພະເຈົ້າ. ພ້ອມດຽວກັນນີ້, ຂ້າພະເຈົ້າ ໄດ້ມີໂອກາດຮຽນຮູ້ກ່ຽວກັບວຽກງານຫຼັກຊັບຫຼາຍພໍສົມຄວນ ແລະ ຮ່ວມເຮັດວຽກກັບຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ມາຈາກຫຼາຍພາກສ່ວນ ແລະ ພະນັກງານຈາກທຸກພາກສ່ວນໃນຂົງເຂດວຽກງານຕະຫຼາດທຶນ ເຖິງວ່າບາງທ່ານມີຄວາມຮັບຮູ້ ແລະ ປະສົບການກ່ຽວກັບວຽກງານຕະຫຼາດທຶນບໍ່ທັນຫຼາຍ ແຕ່ບັນດາທ່ານເຫຼົ່ານັ້ນ ໄດ້ອຸທິດເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນດ້ວຍຄວາມຮັບຜິດຊອບສູງ.

ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຍ້ອງຍໍຊົມເຊີຍມາຍັງການນຳທຸກຂັ້ນ ແລະ ຄະນະນຳ ພ້ອມດ້ວຍພະນັກງານຈາກທຸກພາກສ່ວນ ທີ່ໄດ້ປະກອບສ່ວນເຂົ້າໃນການສ້າງ ແລະ ພັດທະນາຕະຫຼາດທຶນ ໃນໄລຍະຜ່ານມາ. ຂ້າພະເຈົ້າເຊື່ອໝັ້ນຢ່າງໜັກແໜ້ນວ່າ ດ້ວຍກຳລັງແຮງສັງລວມ ແລະ ຄວາມສາມັກຄີເປັນປຶກແຜ່ນ ຂອງຂະແໜງການຕະຫຼາດທຶນ, ຕະຫຼາດທຶນລາວ ຈະສາມາດຍາດໄດ້ຜົນສຳເລັດຕາມວິໄສທັດໃນການພັດທະນາຕະຫຼາດທຶນ ຮອດປີ 2030.

# ຄຳເຫັນ

## ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

## ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/2010-10/2020)

ຂ້າພະເຈົ້າ ໃນນາມຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຮູ້ສຶກເປັນກຽດທີ່ໄດ້ມີຄຳເຫັນ ແລະ ສະແດງຄວາມຮູ້ສຶກຂອງຕົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ.

ການສ້າງຕັ້ງຕະຫຼາດຫຼັກຊັບລາວ ມີຄວາມໝາຍສຳຄັນທີ່ສຸດ ເນື່ອງຈາກວ່າ ມັນໄດ້ເຮັດໃຫ້ຕະຫຼາດການເງິນຂອງ ສປປ ລາວ ມີຄວາມສົມບູນຍິ່ງຂຶ້ນ ເມື່ອທຽບກັບທິດສະດີ ແລະ ພຶດຕິກຳຕົວຈິງ ເຊິ່ງປະກອບມີ ຕະຫຼາດເງິນ ແລະ ຕະຫຼາດທຶນ. ທັງສອງຕະຫຼາດນີ້ ຈະໄດ້ຮ່ວມກັນສະໜອງແຫຼ່ງທຶນໃຫ້ແກ່ລະບົບເສດຖະກິດ ຕາມຄຸນລັກສະນະ ແລະ ຈຸດພິເສດຂອງທຸລະກິດພາຍໃນປະເທດ.

ບັນດາທ່ານອາດຈະຮັບຮູ້ແລ້ວວ່າ ພວກເຮົາ ໄດ້ສຳເລັດການສ້າງຕັ້ງຕະຫຼາດຫຼັກຊັບລາວ ຜູ້ທີ່ເຮັດໜ້າທີ່ໃຫ້ບໍລິການຊື້-ຂາຍຫຼັກຊັບ, ໄລ່ລຽງ ແລະ ຕັດບັນຊີທຸລະກຳຫຼັກຊັບ ແລະ ຮັບຝາກຫຼັກຊັບ; ໄດ້ມີຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ທີ່ເຮັດໜ້າທີ່ສະໜັບສະໜູນການຂັບເຄື່ອນຕະຫຼາດທຶນ; ມີບໍລິສັດຈົດທະບຽນຈຳນວນໜຶ່ງ ແລະ ມີຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດຈຳນວນບໍ່ໜ້ອຍ ໄດ້ມີຄວາມເຊື່ອໝັ້ນ ແລະ ລົງທຶນໃນຕະຫຼາດຫຼັກຊັບລາວ.

ສະນັ້ນ, ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຜູ້ລົງທຶນ ໂດຍສະເພາະແມ່ນ ຜູ້ລົງທຶນລາຍຍ່ອຍ, ການຄຸ້ມຄອງການເຄື່ອນໄຫວຂອງຕະຫຼາດທຶນລາວ ໃຫ້ມີຄວາມໝັ້ນຄົງ, ໂປ່ງໃສ ແລະ ຍຸຕິທຳ ແມ່ນຄວາມຈຳເປັນພາວະວິໄສ ໃນເງື່ອນໄຂໃໝ່. ຕໍ່ບັນຫາດັ່ງກ່າວ ຂ້າພະເຈົ້າ ພ້ອມດ້ວຍສະມາຊິກພັກ-ພະນັກງານຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໄດ້ສືບຕໍ່ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳໃຫ້ຄ່ອຍໆເປັນລະບົບຄົບຊຸດ ທັງສອດຄ່ອງກັບບົດຮຽນທີ່ດີຂອງສາກົນ ແລະ ເງື່ອນໄຂພາຍໃນປະເທດ ເພື່ອເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວໃນວຽກງານຕະຫຼາດທຶນ ເປັນຕົ້ນແມ່ນ ໄດ້ປັບປຸງກົດໝາຍວ່າດ້ວຍ ຫຼັກຊັບ ແລະ ສ້າງນິຕິກຳໃຕ້ກົດໝາຍຈຳນວນຫຼາຍສົມຄວນ; ໄດ້ປະສານສົມທົບກັບກະຊວງກ່ຽວຂ້ອງ ເພື່ອຄົ້ນຄວ້ານະໂຍບາຍດຶງດູດການລະດົມທຶນ ແລະ ລົງທຶນໃນຕະຫຼາດຫຼັກຊັບລາວ ໂດຍສະເພາະແມ່ນ ການຫຼຸດອັດຕາອາກອນກຳໄລ ແລະ ຍົກເວັ້ນອາກອນມູນຄ່າເພີ່ມໃນຂົງເຂດວຽກງານຫຼັກຊັບ; ໄດ້ສົມສົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດເປົ້າໝາຍຈົດທະບຽນ; ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ດ້ວຍການສ້າງເງື່ອນໄຂໃຫ້ ບໍລິສັດຈົດທະບຽນສ້າງເອກະສານລາຍງານການເງິນໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ການໝູນໃຊ້ຫຼັກການຄຸ້ມຄອງບໍລິຫານທີ່ດີຂອງສາກົນ (CG) ເຂົ້າໃນການບໍລິຫານທຸລະກິດຂອງ ບໍລິສັດຈົດທະບຽນ. ນອກຈາກນີ້ ອັນພົ້ນເດັ່ນ ແມ່ນໄດ້ນຳເອົາພັນທະບັດຂອງລັດຖະບານ ມາຊື້-ຂາຍຜ່ານຕະຫຼາດຫຼັກຊັບ ເພື່ອຊ່ວຍລັດຖະບານລະດົມທຶນເພື່ອມາພັດທະນາ; ໄດ້ຖືສຳຄັນວຽກງານໂຄສະນາເຜີຍແຜ່ ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ມວນຊົນ ດ້ວຍຫຼາຍຮູບການ ແລະ ວິທີການທີ່ເໝາະສົມ; ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງ ກົນໄກການຊື້-ຂາຍ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ໃຫ້ສາມາດຕອບສະໜອງຄວາມຈຳເປັນພື້ນຖານສຳລັບຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ; ໄດ້ບັນຈຸ, ກໍ່ສ້າງ ແລະ ຊຸບຊ້ອນ ພະນັກງານພາຍໃນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໄດ້ສ້າງ ແລະ ພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນ

ຂ່າວສານ (ICT) ເພື່ອເປັນເຄື່ອງມືໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃນໄລຍະໃໝ່. ຜ່ານການຄຸ້ມຄອງຕົວຈິງ ເຫັນວ່າ ຕະຫຼາດຫຼັກຊັບລາວ, ບໍລິສັດຈົດທະບຽນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເຄື່ອນໄຫວສອດຄ່ອງກັບ ລະບຽບການ ພໍສົມຄວນ, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາຕະຫຼາດທຶນລາວ ກໍ່ຄື ການພັດທະນາ ເສດຖະກິດ-ສັງຄົມຂອງ ສປປ ລາວ ໄດ້ເປັນຢ່າງດີ.

ເຖິງຢ່າງໃດກໍຕາມ, ວຽກງານຕະຫຼາດທຶນ ຍັງມີສິ່ງທ້າທາຍຫຼາຍດ້ານ ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດ ລະບຽບກົດໝາຍໂດຍລວມ ຍັງບໍ່ເຂັ້ມງວດແທ້; ນະໂຍບາຍຂອງພັກ ແລະ ລັດຖະບານ ຕໍ່ວຽກງານຕະຫຼາດທຶນ ຍັງ ຈະຕ້ອງໄດ້ທົບທວນຕື່ມອີກ ໃນແຕ່ລະໄລຍະ; ພື້ນຖານເສດຖະກິດຂອງ ສປປ ລາວ ຍັງອ່ອນແອ, ຫົວໜ່ວຍການ ຜະລິດ ບໍ່ຫຼາກຫຼາຍ, ບາງວິສາຫະກິດ ຂາດທຶນຕໍ່ເນື່ອງເປັນເວລາດົນ ເຮັດໃຫ້ຖານະການເງິນ ບໍ່ເຂັ້ມແຂງ ສິ່ງຜົນ ໃຫ້ການກະກຽມທັນເປັນມະຫາຊົນ, ລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ໃຊ້ເວລາດົນ ສົມຄວນ; ບໍລິສັດທີ່ຈົດທະບຽນແລ້ວ ຍັງເຄື່ອນໄຫວຂາດທຶນ ແລະ ບາງບໍລິສັດ ຂາດທຶນຕໍ່ເນື່ອງຫຼາຍປີ ແລະ ບໍ່ ສາມາດປັນຜົນໃຫ້ຜູ້ລົງທຶນ; ຄວາມຮັບຮູ້ ແລະ ເຂົ້າໃຈຂອງມວນຊົນ ຕໍ່ວຽກງານຕະຫຼາດທຶນ ຍັງຈຳກັດຫຼາຍດ້ານ ເຮັດໃຫ້ການມີສ່ວນຮ່ວມໃນຮູບແບບລະດົມທຶນ ແລະ ລົງທຶນ ຜ່ານຕະຫຼາດທຶນ ຍັງບໍ່ພົ້ນເດັ່ນແທ້; ກົນໄກການຊື້-ຂາຍຂອງຕະຫຼາດຫຼັກຊັບລາວ ຍັງບໍ່ທັນຄ່ອງຕົວດີ ເມື່ອທຽບກັບຄວາມຕ້ອງການຜູ້ລົງທຶນ; ຄວາມຮູ້, ຄວາມສາມາດ ແລະ ປະສົບການຂອງພະນັກງານທີ່ເຮັດໜ້າທີ່ຄຸ້ມຄອງ ຍັງບໍ່ທັນສົມຄູ່ກັບການຂະຫຍາຍຕົວຂອງຕະຫຼາດທຶນລາວ ແລະ ເຄື່ອງມືທີ່ນຳໃຊ້ເພື່ອຄຸ້ມຄອງ ບາງດ້ານຍັງຈຳກັດ.

ໃນຕໍ່ໜ້ານີ້ ຄາດວ່າສະພາບການທັງພາຍໃນ ແລະ ຕ່າງປະເທດ ຈະມີການຜັນແປຢ່າງຄາດຄະເນໄດ້ຍາກ ຊຶ່ງ ອາດຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ ຕໍ່ການພັດທະນາຕະຫຼາດທຶນລາວ ໂດຍລວມ ບວກກັບ ຂໍ້ຄົງຄ້າງພາຍໃນຈຳນວນໜຶ່ງ. ສະນັ້ນ, ຂ້າພະເຈົ້າ ຈຶ່ງຂໍຮຽກຮ້ອງ ມາຍັງການນຳທຸກຂັ້ນຈາກທຸກພາກສ່ວນ ຈົ່ງສືບຕໍ່ ໃຫ້ການຊີ້ນຳ-ນຳພາຢ່າງໃກ້ສິດຕິດແທດ ແລະ ໃຫ້ການສະໜັບສະໜູນຮອບດ້ານ ເພື່ອແກ້ໄຂທຸກຂໍ້ຄົງຄ້າງໃນໄລຍະ ຜ່ານມາ ແລະ ຈັດຕັ້ງປະຕິບັດແຜນງານ-ໂຄງການ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາຕະຫຼາດທຶນ ປີ 2021-2025 ເຮັດໃຫ້ຕະຫຼາດທຶນລາວ ກາຍເປັນ ຂໍກະແຈໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານ ສາກົນ ຕາມວິໄສທັດໃນການພັດທະນາຕະຫຼາດທຶນ ຮອດປີ 2030 ເພື່ອປະກອບສ່ວນຍູ້ແຮງ ໃນການພັດທະນາ ເສດຖະກິດ-ສັງຄົມ ໃຫ້ບັນລຸຕາມແຜນທີ່ໄດ້ກຳນົດໄວ້. ພ້ອມນີ້ ຂໍຮຽກຮ້ອງມາຍັງ ຜູ້ບໍລິຫານ ແລະ ພະນັກງານ ຂອງ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນທັງໝົດ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບ ຕໍ່ໜ້າທີ່ທີ່ໄດ້ຮັບມອບໝາຍ ແລະ ເຊີດຊູຈັນຍາບັນວິຊາຊີບຂອງຕົນ ໃຫ້ສູງຂຶ້ນ ແນໃສ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ ຕໍ່ຕະຫຼາດທຶນລາວ.

ນະໂອກາດອັນມີຄວາມໝາຍຄວາມສຳຄັນນີ້ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ເປັນຢ່າງສູງ ມາຍັງການນຳ ພັກ-ລັດ ທຸກຂັ້ນ ທັງຮຸ່ນກ່ອນ ແລະ ຮຸ່ນປັດຈຸບັນ ທີ່ຍາມໃດກໍ່ໄດ້ເປັນຫ່ວງເປັນໄຍ ຕໍ່ຊາຕາກຳຂອງຕະຫຼາດທຶນ ລາວ. ຂໍສະແດງຄວາມຂອບໃຈ ຕໍ່ ຜູ້ບໍລິຫານ ແລະ ພະນັກງານ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ທີ່ໄດ້ ປະກອບສ່ວນເຄື່ອນໄຫວໃນວຽກງານຕະຫຼາດທຶນ ດ້ວຍຄວາມຮັບຜິດຊອບສູງ ໃນໄລຍະ 10 ປີ ທີ່ຜ່ານມາ. ຂໍ ອວຍພອນໃຫ້ຕະຫຼາດທຶນລາວ ຈົ່ງກ້າວໄປຂ້າງໜ້າ ດ້ວຍບາດກ້າວທີ່ໜັກແໜ້ນ ແລະ ເຂັ້ມແຂງ ຢ່າງບໍ່ຢຸດຢັ້ງ.

# ຄຳເຫັນ

# ທ່ານ ອ໊ອດ ພົນຊຽງດີ, ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ

# ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020)

ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ເຂົ້າຮ່ວມພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນ ສປປ ລາວ ໃນຄັ້ງນີ້ ແລະ ຕາງໜ້າໃຫ້ ຕະຫຼາດຫຼັກຊັບລາວ (ຕລຊລ) ລາຍງານວິໄສທັດຂອງຕະຫຼາດຫຼັກຊັບລາວ ແລະ ແຜນ 5 ປີ ພັດທະນາຕະຫຼາດຫຼັກຊັບລາວ ຕໍ່ງານພິທີທີ່ເປັນປະຫວັດສາດ ແລະ ມີຄວາມໝາຍຄວາມສຳຄັນສຳລັບຕະຫຼາດທຶນ ສປປ ລາວ ໃນຄັ້ງນີ້. ຕະຫຼາດຫຼັກຊັບ ເປັນເຄື່ອງມືທີ່ສຳຄັນສຳລັບການພັດທະນາເສດຖະກິດ ເຊິ່ງເຫັນໄດ້ຈາກຂະໜາດຂອງມູນຄ່າຕະຫຼາດຫຼັກຊັບ ທີ່ເພີ່ມຂຶ້ນສົ່ງຜົນກະທົບໃຫ້ເສດຖະກິດຂະຫຍາຍຕົວ ຍ້ອນຕະຫຼາດຫຼັກຊັບເຮັດພາລະບົດບາດບໍລິການຊື້-ຂາຍຫຼັກຊັບ ແລະ ບໍລິການຊໍາລະ-ສະສາງຫຼັກຊັບ ດ້ວຍລະບົບທີ່ທັນສະໄໝ ແລະ ເຊື່ອຖືໄດ້. ພ້ອມທັງເຮັດໜ້າທີ່ຄຸ້ມຄອງບໍລິຫານການເຄື່ອນໄຫວຊື້-ຂາຍ ຂອງນັກລົງທຶນຢ່າງເຂັ້ມງວດ ແລະ ຍຸຕິທຳ, ລາຍງານຂໍ້ມູນສະພາບການເຄື່ອນໄຫວຫຼັກຊັບຢ່າງຖືກຕ້ອງ ແລະ ທັນເວລາ. ທຸກຫົວໜ່ວຍທຸລະກິດເຄື່ອນໄຫວຖືກກົດໝາຍທີ່ຕ້ອງການເພີ່ມທຶນ ແຕ່ບໍ່ຢາກສ້າງໜີ້ເພີ່ມ ຫຼື ຄວາມສາມາດໃນການສ້າງໜີ້ດ້ວຍການກູ້ຢືມຍັງເຫຼືອບໍ່ຫຼາຍ ກໍຈະຫັນມານຳໃຊ້ເຄື່ອງມືຕະຫຼາດຫຼັກຊັບ ເປັນທາງເລືອກແທນ. ຜູ້ຕ້ອງການລົງທຶນ ຫຼື ຜູ້ຢາກເປັນເຈົ້າຂອງທຸລະກິດໃນຫຼາຍຂະແໜງການແຕ່ມີເງິນລົງທຶນບໍ່ຫຼາຍ, ຕ້ອງການຈະກະຈາຍຄວາມສ່ຽງໃນການລົງທຶນຂອງຕົນ ແລະ ຕ້ອງການໃຫ້ເງິນລົງທຶນຂອງຕົນສາມາດຖອນເປັນເງິນສົດໄດ້ຢ່າງຄ່ອງໂຕໃນເວລາສັ້ນໆ ໂດຍບໍ່ຈຳເປັນຕ້ອງລໍຖ້າໃຫ້ຄົບກຳນົດກໍຈະຫັນມາລົງທຶນຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບແທນ. ສະນັ້ນ, ຕະຫຼາດຫຼັກຊັບລາວຈຶ່ງສ້າງຕົນເອງໃຫ້ກາຍເປັນເຄື່ອງມືຄືດັ່ງກ່າວມາຂ້າງເທິງ ແລະ ກຳນົດວິໄສທັດຂອງຕະຫຼາດຫຼັກຊັບລາວວ່າ: "ຕະຫຼາດຫຼັກຊັບລາວເປັນຕະຫຼາດທຶນທີ່ມີຄວາມສຳຄັນ ໃນການຂັບເຄື່ອນການພັດທະນາເສດຖະກິດ ສປປ ລາວ" ດ້ວຍການເປັນກົນໄກການລະດົມທຶນ ແລະ ການລົງທຶນຊື້-ຂາຍຫຼັກຊັບ ທີ່ມີຄວາມຍຸຕິທຳ, ໂປ່ງໃສ ແລະ ມີປະສິດທິພາບ ແນໃສ່ສ້າງເງື່ອນໄຂ ແລະ ໂອກາດ ໃຫ້ນັກລົງທຶນ ແລະ ຜູ້ມີສ່ວນຮ່ວມ ໄດ້ຮັບຜົນປະໂຫຍດຢ່າງຍຸຕິທຳ.

ຕໍ່ກັບການກຳນົດວິໄສທັດດັ່ງກ່າວ ຕະຫຼາດຫຼັກຊັບລາວ ໄດ້ກຳນົດແຜນ 5 ປີ ພັດທະນາຕະຫຼາດຫຼັກຊັບລາວດັ່ງນີ້:

1. ພັດທະນາກົນໄກ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ທັນສະໄໝ, ພັດທະນາ ຜະລິດຕະພັນຫຼັກຊັບໃຫ້ມີຄວາມຫຼາກຫລາຍ ແລະ ພັດທະນາບຸກຄະລາກອນໃນຕະຫຼາດທຶນ ເພື່ອການສົ່ງເສີມການລະດົມທຶນໄລຍະຍາວ ແລະ ການລົງທຶນ ເພື່ອອະນາຄົດ;
2. ປະກອບສ່ວນຊ່ວຍລັດຖະບານ ພັດທະນາຕະຫຼາດພັນທະບັດ;
3. ສະໜອງກົນໄກ, ສິ່ງອຳນວຍຄວາມສະດວກຮອບດ້ານ ພ້ອມທັງ ຂໍ້ມູນຂ່າວສານທີ່ຍຸຕິທຳ, ຖືກຕ້ອງ, ໂປ່ງໃສ ແລະ ຄົບຖ້ວນ ເພື່ອເອື້ອອຳນວຍຄວາມສະດວກແລະ ເປີດໂອກາດໃຫ້ທຸກພາກສ່ວນໃນຕະຫຼາດທຶນ ໄດ້ຮັບຜົນປະໂຫຍດຢ່າງຍຸຕິທຳ.

ນະໂອກາດອັນມີຄວາມໝາຍຄວາມສຳຄັນນີ້, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນ ຢ່າງສູງຕໍ່ມາຍັງ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີ ກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ການນຳທຸກຂັ້ນ ທີ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ຊີ້ນຳ-ນຳພາ ຕລຊລ ມາໂດຍຕະຫຼອດ, ຂໍລະນຶກເຖິງຜົນງານ ແລະ ຄຸນງາມຄວາມດີຂອງຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ຕລຊລ ທຸກຮຸ້ນ ທຸກລະດັບທີ່ໄດ້ທຸ້ມເທເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການສ້າງສາ ແລະ ພັດທະນາຕະຫຼາດທຶນ ຂອງພວກເຮົາ ໃຫ້ມີຄວາມເຕີບໃຫຍ່ ເຂັ້ມແຂງ ມາຢ່າງບໍ່ຢຸດຢັ້ງຕະຫຼອດ 10 ປີຜ່ານມາ. ໃນປີ 2020 ນີ້ ເຖິງວ່າຈະມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ບັນຫາການລະບາດ ຂອງພະຍາດ Covid-19 ທີ່ພວມສົ່ງຜົນ ກະທົບຕໍ່ລະບົບເສດຖະກິດຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ແຕ່ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ຕລຊລ ຈະສຸມທຸກສະຕິປັນຍາ ແລະ ກຳລັງແຮງ ເພື່ອຍາດເອົາຜົນງານ ແລະ ການພັດທະນາທີ່ໜ້າເພິ່ງພໍໃຈມາສູ່ສັງຄົມ ແລະ ເສດຖະກິດຂອງ ສປປ ລາວ ຕະຫຼອດໄປ.

# ພາກທີ I

# ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ (10/2010-102020)

## I. ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ

### 1. ໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

### 1.1 ປະທານ ຄຄຊ ໃນແຕ່ລະໄລຍະ



ທ່ານ ສົມສະຫວາດ ເລັ່ງສະຫວັດ,
ຮອງນາຍົກລັດຖະມົນຕີ,
ຜູ້ປະຈຳການລັດຖະບານ
(2009-2016)



ທ່ານ ດຣ. ບຸນປອນ ບຸດຕະນະວົງ,
ຮອງນາຍົກລັດຖະມົນຕີ,
ຜູ້ຊີ້ນຳວຽກງານເສດຖະກິດມະຫາພາກ
ແລະ ບໍລິການ
(2016)



ທ່ານ ສົມດີ ດວງດີ,
ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີກະຊວງການເງິນ
(2016-ປັດຈຸບັນ)

### 1.2 ລາຍຊື່ຄະນະ ຄຄຊ ແຕ່ເລີ່ມຕົ້ນ ຈົນເຖິງ ປັດຈຸບັນ

1. ທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ 2009-2016
2. ທ່ານ ບຸນປອນ ບຸດຕະນະວົງ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ 2016
3. ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ 2016-2020
4. ທ່ານ ພູເພັດ ຄຳພູນວົງ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ 2011-2014
5. ທ່ານ ສົມພາວ ໄຟສິດ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ 2014-2019
6. ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ ຮອງປະທານ ຄຄຊ ຜູ້ປະຈຳການ 2019-2020
   ຮອງຜູ້ວ່າການ ທຫລ, ກຳມະການ ຄຄຊ 2013-2019
7. ທ່ານ ດຣ. ລຽນ ທິແກ້ວ, ລັດຖະມົນຕີ ວ່າການກະຊວງການເງິນ, ຮອງປະທານ ຄຄຊ 2014-2016
8. ທ່ານ ປອ. ອາດສະພັງທອງ ສີພັນດອນ, ຮອງລັດຖະມົນຕີ ກະຊວງການເງິນ, ຮອງປະທານ ຄຄຊ 2016-2019

9. ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກໍາມະການ ຄຄຊ 2020
   ຮອງລັດຖະມົນຕີ ກະຊວງການເງິນ, ຮອງປະທານ ຄຄຊ 2019-2020
10. ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີ ກະຊວງການເງິນ, ຮອງປະທານ ຄຄຊ 2020
11. ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ, ກໍາມະການ ຄຄຊ 2015-2020
   ຫົວໜ້າສໍານັກງານ ຄລຕ, ເລຂາ ຄຄຊ 2011-2015
12. ທ່ານ ໄຊເຊັ່ງລີ ເຕັ່ງເບຼຍຈື, ປະທານຄະນະກໍາມະການປັບປຸງທຸລະກິດແຫຼ່ງຊາດ, ຮອງປະທານ ຄຄຊ 2011-2014
13. ທ່ານ ໝູຮັກ ນະລິໂຄດ, ຜູ້ຊ່ວຍທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນໍາວຽກງານເສດຖະກິດ, ກໍາມະການ ຄຄຊ 2011-2013
14. ທ່ານ ດຣ. ຄໍາພັນ ເຜີຍຍະວົງ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການລັດຖະບານ, ກໍາມະການ ຄຄຊ 2013-2015
15. ທ່ານ ນາງ ບຸນຜາ ເຄນວົງດາລາ, ຮອງຫົວໜ້າຫ້ອງວ່າການລັດຖະບານ, ກໍາມະການ ຄຄຊ 2015-2017
16. ທ່ານ ສົມສະນິດ ສຸວັນນະລາດ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກໍາມະການ ຄຄຊ 2017-2018
17. ທ່ານ ມະໄລທອງ ກົມມະສິດ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກໍາມະການ ຄຄຊ 2018-2020
18. ທ່ານ ນາງ ເຂັມມະນີ ພົນເສນາ, ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ, ກໍາມະການ ຄຄຊ 2011-2014
19. ທ່ານ ສຽວສະຫວາດ ສະແຫວງສຶກສາ, ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ, ກໍາມະການ ຄຄຊ 2014-2015
20. ທ່ານ ສົມຈິດ ອິນທະມິດ, ຮອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ, ກໍາມະການ ຄຄຊ 2015-2020
21. ທ່ານ ບຸນທະວີ ສີສຸພັນທອງ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ກໍາມະການ ຄຄຊ 2011-2017
22. ທ່ານ ປອ. ຄໍາລຽນ ພົນເສນາ, ຮອງລັດລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ກໍາມະການ ຄຄຊ 2017-2019
23. ທ່ານ ນາງ ຄໍາຈັນ ວົງແສນບຸນ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ກໍາມະການ ຄຄຊ 2019-2020
24. ທ່ານ ບຸນສະຫວາດ ບຸບຜາ, ຮອງລັດຖະມົນຕີກະຊວງຍຸຕິທໍາ, ກໍາມະການ ຄຄຊ 2011-2020
25. ທ່ານ ຄໍາມູນ ວິພົງໄຊ, ຮອງລັດຖະມົນຕີກະຊວງພາຍໃນ, ກໍາມະການ ຄຄຊ 2011-2020
26. ທ່ານ ບຸນປອນ ສີສຸລາດ, ຮອງປະທານກໍາມາທິການເສດຖະກິດ ແຜນການ ແລະ ການເງິນ ສະພາແຫ່ງຊາດ, ກໍາມະການ ຄຄຊ 2012-2017

27. ທ່ານ ທັນຕາ ກອງຜາລີ, ຮອງປະທານກໍາມາທິການແຜນການ, ການເງິນ ແລະ ກວດສອບ, ສະພາແຫ່ງຊາດ, ກໍາມະການ ຄຄຊ 2017-2020
28. ທ່ານ ໄຊຊະນະ ໂຄດພູທອນ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ກໍາມະການ ຄຄຊ 2013 -2020
29. ທ່ານ ມະນີໂສ ຊາມຸນຕີ, ຮອງປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ, ກໍາມະການ ຄຄຊ 2017-2020
30. ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າ ສຄຄຊ, ເລຂາ ຄຄຊ 2015-2020

## 1.3 ໂຄງຮ່າງການຈັດຕັ້ງຂອງ ຄຄຊ (ຊຸດປັດຈຸບັນ)




## 1.4 ພາລະບົດບາດ ຂອງ ຄຄຊ

ຄຄຊ ມີພາລະບົດບາດເປັນຜູ້ຄຸ້ມຄອງວຽກງານຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍແມ່ນ ສຄຄຊ ເປັນຜູ້ຮັບຜິດຊອບໂດຍກົງໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບບົນພື້ນຖານການປະ ສານສົມທົບ ແລະ ແລກປ່ຽນຂໍ້ມູນ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

ຄຄຊ ມີສິດ ແລະ ໜ້າທີ່ ໃນການຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ກ່ຽວກັບວຽກງານຫຼັກຊັບ; ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດ

ໝາຍ ແລະ ລະບຽບການກ່ຽວກັບວຽກງານຫຼັກຊັບ; ຮັບຮອງລະບຽບການກ່ຽວກັບວຽກງານຫຼັກຊັບ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 2. ໂຄງຮ່າງການຈັດຕັ້ງຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

### 2.1 ຜູ້ຊີ້ນຳວຽກງານ ສຄຄຊ ໃນແຕ່ລະໄລຍະ



ທ່ານ ສອນໄຊ ສິດພະໄຊ
(2010-2014)



ທ່ານ ນາງ ວັດທະນາ ດາລາລອຍ
(2014-2020)

### 2.2 ຫົວໜ້າ ສຄຄຊ ໃນແຕ່ລະໄລຍະ



ທ່ານ ນາງ ວັດທະນາ ດາລາລອຍ
(2010-2014)



ທ່ານ ນາງ ສາຍສະໝອນ ຈັນທະຈັກ
(2014-2020)

## 2.3 ໂຄງຮ່າງການຈັດຕັ້ງຂອງ ສຄຄຊ



## 2.4 ພາລະບົດບາດ ຂອງ ສຄຄຊ

ສຄຄຊ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ ຄຄຊ ໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບ. ສຄຄຊ ເປັນທັງອີງການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ.

ສຄຄຊ ມີສິດ ແລະ ໜ້າທີ່ໃນການຄົ້ນຄວ້າ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ແລະ ມະຕິຂອງ ຄຄຊ ກ່ຽວກັບການພັດທະນາວຽກງານຫຼັກຊັບ; ຄົ້ນຄວ້າ ສ້າງ ແລະ ປັບປຸງລະບຽບການ ເພື່ອສະເໜີ ຄຄຊ ພິຈາລະນາຮັບຮອງ; ຄົ້ນຄວ້າ ພິຈາລະນາ ການອະນຸຍາດ, ໂຈະ ແລະ ຍົກເລີກ ການອອກຈຳໜ່າຍຫຼັກຊັບ, ການສ້າງຕັ້ງກອງທຶນ ເພື່ອການລົງທຶນ, ຕະຫຼາດຫຼັກຊັບ, ສູນຮັບຝາກ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ; ຄົ້ນຄວ້າ ພິຈາລະນາ ການອະນຸຍາດ ສ້າງຕັ້ງ ຫຼື ຮັບຮອງ ສະຖາບັນສີກາງດ້ານຫຼັກຊັບ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ; ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ; ຄຸ້ມຄອງ ຕິດຕາມ ກວດກາການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ, ສະຖາບັນສີກາງດ້ານຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ສູນຮັບຝາກ; ປະຕິບັດມາດຕະການຕໍ່ຜູ້ລະເມີດລະບຽບການກ່ຽວກັບຫຼັກຊັບ ຕາມກົດໝາຍ ແລະ ລະບຽບການທີ່ ຄຄຊ ວາງອອກໃນແຕ່ລະໄລຍະ.

## 2.5 ຮູບພາບພະນັກງານ ສຄຄຊ



## 3. ໂຄງຮ່າງການຈັດຕັ້ງ ຂອງຕະຫຼາດຫຼັກຊັບລາວ (ຕລຊລ)

### 3.1 ປະທານສະພາບໍລິຫານຂອງ ຕລຊລ ໃນແຕ່ລະໄລຍະ



ທ່ານ ຣສ. ເດດພູວັງ ມູລຣັຕນ໌
(2010-2015)



ທ່ານ ເຜັດສະຖາພອນ ແກ້ວວົງວິຈິດ
(2016-2020)

### 3.2 ຜູ້ອຳນວຍການ ຕລຊລ ໃນແຕ່ລະໄລຍະ



ທ່ານ ຣສ. ເດດພູວັງ ມູລຣັຕນ໌
(2010-2015)



ທ່ານ ວັນຄຳ ວໍຣະວົງ
(2015-2019)



ທ່ານ ອ໊ອດ ພົມຊຽງດີ
(2019-2020)

## 3.3 ໂຄງຮ່າງການຈັດຕັ້ງຂອງ ຕລຊລ




## 3.4 ພາລະບົດບາດ ຂອງ ຕລຊລ

ຕະຫຼາດຫຼັກຊັບ ແມ່ນ ສະຖາບັນການເງິນທີ່ດໍາເນີນທຸລະກິດກ່ຽວກັບການຈົດທະບຽນຫຼັກຊັບ, ເປັນສື່ກາງໃນການຊື້-ຂາຍຫຼັກຊັບ, ໄລ່ລຽງທຸລະກໍາຫຼັກຊັບ ແລະ ເຮັດໜ້າທີ່ເປັນຜູ້ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວຂອງບັນດາສະມາຊິກ, ຕິດຕາມການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນ, ພ້ອມກັນນັ້ນ ຍັງເຮັດໜ້າທີ່ຕິດຕາມການ ຊື້-ຂາຍ ຫຼັກຊັບທີ່ບໍ່ຍຸດຕິທໍາອີກດ້ວຍ. ພ້ອມດຽວກັນນີ້, ຕລຊລ ຍັງເຮັດໜ້າທີ່ ຂຶ້ນທະບຽນຫຼັກຊັບ, ເປັນນາຍທະບຽນຫຼັກຊັບ, ຮັບຝາກຫຼັກຊັບ, ໂອນຫຼັກຊັບ ແລະ ຫັກບັນຊີຫຼັກຊັບ.

### 3.5 ຮູບພາບພະນັກງານ ຕລຊລ




## II. ພາລະບົດບາດຂອງ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ

ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ປະກອບດ້ວຍ ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ບໍລິສັດປະເມີນມູນຄ່າຊັບສິນ, ບໍລິສັດກວດສອບ, ທະນາຄານດູແລຊັບສິນ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານຕົວແທນເພື່ອການຊຳລະ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພົນທະບັດລັດຖະບານ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມວຽກງານຫຼັກຊັບ.

### 1. ບໍລິສັດຈົດທະບຽນ

ບໍລິສັດຈົດທະບຽນ ແມ່ນບໍລິສັດທີ່ນຳເອົາຮຸ້ນຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ ເພື່ອເປົ້າໝາຍໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

- ເພີ່ມທຶນ ຫຼື ລະດົມທຶນ ເພື່ອຂະຫຍາຍກິດຈະການ;
- ປ່ຽນແປງໂຄງສ້າງການຖືຮຸ້ນ;
- ປັນຜົນ ຫຼື ໃຫ້ເປັນລາງວັນ ແລະ ອື່ນໆ.

ປັດຈຸບັນ ມີບໍລິສັດຈົດທະບຽນຢູ່ ຕລຊລ ຈຳນວນ 11 ແຫ່ງ ຄື:

1) ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
2) ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
3) ບໍລິສັດ ລາວເວີນ ມະຫາຊົນ
4) ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
5) ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
6) ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
7) ບໍລິສັດ ຊີມັງລາວ ມະຫາຊົນ

8) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

9) ບໍລິສັດ ລາວອາໂກຣເທັກ ມະຫາຊົນ

10) ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

11) ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ.

## 2. ບໍລິສັດຫຼັກຊັບ

ບໍລິສັດຫຼັກຊັບ ແມ່ນ ສະຖາບັນການເງິນ ທີ່ດຳເນີນທຸລະກິດຫຼັກຊັບ ດັ່ງນີ້:

1) ທີ່ປຶກສາທາງດ້ານການເງິນ ເປັນຕົ້ນ ການປັບປຸງໂຄງສ້າງດ້ານການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ການເງິນ ແລະ ການດຳເນີນທຸລະກິດ;
2) ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ;
3) ນາຍໜ້າຊື້ ຂາຍ ຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ;
4) ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ;
5) ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ;
6) ບໍລິຫານກອງທຶນສ່ວນບຸກຄົນ ແລະ ອື່ນໆ.

ປັດຈຸບັນ ມີບໍລິສັດຫຼັກຊັບ ຈຳນວນ 4 ແຫ່ງ, ໃນນີ້ 3 ແຫ່ງເຮັດໜ້າທີ່ເຕັມສ່ວນ ເຊິ່ງປະກອບມີ: 1. ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ (ຮ່ວມທຶນ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຖືຮຸ້ນ 70% ແລະ ບໍລິສັດ KTZ ຈາກປະເທດ ໄທ ຖືຮຸ້ນ 30%), 2. ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ (ຮ່ວມທຶນລະຫວ່າງ ທະນາຄານພັດທະນາລາວ ຖືຮຸ້ນ 95,5% ແລະ ບຸກຄົນພາຍໃນປະເທດ 0,5%), 3. ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ (ຮ່ວມທຶນລະຫວ່າງ ທະນາຄານສົ່ງເສີມກະສິກຳ ຖືຮຸ້ນ 41%, ບໍລິສັດຫຼັກຊັບປາຊີຟິກ ຈາກ ສປ.ຈີນ ຖືຮຸ້ນ 39% ແລະ ບໍລິສັດ ອຸດສາຫະກຳ-ຂໍ້ມູນຂ່າວສານ ແຫ່ງປະເທດລາວ ຖືຮຸ້ນ 20%). ສ່ວນອີກໜຶ່ງແຫ່ງ ແມ່ນເຮັດໜ້າທີ່ ເປັນທີ່ປຶກສາດ້ານການເງິນ ເທົ່ານັ້ນ ຄື: ບໍລິສັດ ເອພີເອັມ ລາວ ຈຳກັດ (ຮ່ວມທຶນ ລະຫວ່າງ ບໍລິສັດຫຼັກຊັບ ເອພີເອັມ ຈາກປະເທດໄທ ຖືຮຸ້ນ 60%, ບຸກຄົນຕ່າງປະເທດ ຖືຮຸ້ນ 20% ແລະ ບຸກຄົນພາຍໃນ ຖືຮຸ້ນ 20%).

## 3. ບໍລິສັດບໍລິຫານກອງທຶນ ເພື່ອການລົງທຶນ

ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແມ່ນ ສະຖາບັນການເງິນ ທີ່ດຳເນີນທຸລະກິດໃນການສ້າງຕັ້ງ ແລະ ບໍລິຫານກອງທຶນເພື່ອການລົງທຶນ, ມີ ສິດ ແລະ ໜ້າທີ່ ບໍລິຫານກອງທຶນເພື່ອການລົງທຶນທີ່ ຕົນເອງສ້າງຕັ້ງ ແລະ ອອກຈຳໜ່າຍໜ່ວຍລົງທຶນ ຢູ່ພາຍໃນປະເທດ ລວມທັງ ບໍລິຫານກອງທຶນທີ່ສ້າງຕັ້ງ ແລະ ອອກຈຳໜ່າຍໜ່ວຍລົງທຶນ ຢູ່ຕ່າງປະເທດ; ຂາຍ, ໄຖ່ຖອນຄືນໜ່ວຍລົງທຶນ ແລະ ຈົດທະບຽນໜ່ວຍລົງທຶນໃນຕະຫຼາດຫຼັກຊັບ ຫຼື ມອບໃຫ້ຕົວແທນການຂາຍໜ່ວຍລົງທຶນໃດໜຶ່ງດຳເນີນການແທນ ຕາມການອະນຸຍາດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ; ປະຕິບັດຕາມ ສັນຍາດູແລຊັບສິນ, ສັນຍາຄຸ້ມຄອງບໍລິຫານກອງທຶນເພື່ອການລົງທຶນ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ; ຂຶ້ນທະບຽນກອງທຶນເພື່ອການລົງທຶນນຳຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍຫຼັງສຳເລັດການຂາຍໜ່ວຍລົງທຶນໃນແຕ່ລະກອງທຶນຮ່ວມ ແລະ ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ອັນເນື່ອງຈາກການໃຫ້ບໍລິການຂອງຕົນ.

ປັດຈຸບັນ, ໄດ້ມີລະບຽບການຮອງຮັບເປັນທີ່ຮຽບຮ້ອຍ ແຕ່ບໍ່ທັນມີຜູ້ສົນໃຈລົງທຶນສ້າງຕັ້ງບໍລິສັດດັ່ງກ່າວ.

## 4. ບໍລິສັດປະເມີນມູນຄ່າຊັບສິນ

ບໍລິສັດປະເມີນມູນຄ່າຊັບສິນ ແມ່ນ ນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ ທີ່ໃຫ້ບໍລິການປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ. ຂອບເຂດການໃຫ້ບໍລິການປະເມີນຊັບສິນ ປະກອບມີ: ທີ່ດິນ, ສິ່ງກໍ່ສ້າງ, ເຄື່ອງຈັກ, ອຸປະກອນ, ສັນຍາເຊົ່າ, ສັນຍາສຳປະທານ, ຊັບສິນທາງປັນຍາ ແລະ ອື່ນໆ.

ປັດຈຸບັນ, ບໍລິສັດປະເມີນມູນຄ່າຊັບສິນ ທີ່ໄດ້ຮັບການຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກ ສຄຄຊ ມີທັງໝົດ 9 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

1) ບໍລິສັດ ຊິມ ພອບເພີຕີ້ ຄອນເຊົາເທັ້ນ ຈຳກັດ
2) ບໍລິສັດ ລາວປະເມີນຊັບສິນ ຈຳກັດ
3) ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ
4) ບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ
5) ບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ
6) ບໍລິສັດ ລາວ ເຈົ້າຊິນ ປະເມີນມູນຄ່າຊັບສິນ ຈຳກັດ
7) ບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນ ຈຳກັດ
8) ບໍລິສັດ ຣິດແອບໄພຣໂຊ ຈຳກັດ
9) ບໍລິສັດ ເຄເຄ ລາວ ປະເມີນມູນຄ່າຊັບສິນ ຈຳກັດ.

## 5. ບໍລິສັດກວດສອບ

ບໍລິສັດກວດສອບ ແມ່ນ ວິສາຫະກິດທີ່ສ້າງຕັ້ງຂຶ້ນ ແລະ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເພື່ອໃຫ້ບໍລິການກວດສອບເອກະສານລາຍງານການເງິນ, ທົບທວນຄືນເອກະສານລາຍງານການເງິນ ແລະ ໃຫ້ບໍລິການອື່ນ ຕາມການກຳນົດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ.

ປັດຈຸບັນ ມີບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກ ສຄຄຊ ມີທັງໝົດ 4 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

1) ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ)
2) ບໍລິສັດ ເຄພີເອັມຈີລາວ ຈຳກັດ
3) ບໍລິສັດ ເອີນ ແອນ ຍັງ (ລາວ) ຈຳກັດ
4) ບໍລິສັດ ດີລອຍ (ລາວ) ຈຳກັດ.

## 6. ທະນາຄານດູແລຊັບສິນ

ທະນາຄານດູແລຊັບສິນ ແມ່ນ ທະນາຄານທຸລະກິດ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ ຫຼື ທະນາຄານທຸລະກິດຕ່າງປະເທດ ທີ່ໃຫ້ບໍລິການ ເກັບຮັກສາ, ຄຸ້ມຄອງຊັບສິນ ແລະ ເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.

ປັດຈຸບັນ, ທະນາຄານທຸລະກິດ ທີ່ໄດ້ຮັບການຮັບຮອງເປັນທະນາຄານດູແລຊັບສິນ ມີທັງໝົດ 3 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

1) ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ
2) ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ
3) ທະນາຄານ ແຫ່ງປະເທດຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ.

## 7. ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນ ນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂອງຕ່າງປະເທດ ທີ່ໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືກ່ຽວກັບ ລະດັບຄຸນນະພາບ ແລະ ຄວາມສ່ຽງຂອງບໍລິສັດ ແລະ ຫຼັກຊັບ ໃນວຽກງານຫຼັກຊັບ.

ປັດຈຸບັນ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ໄດ້ຮັບການຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກ ສຄຄຊ ມີຈຳນວນ 1 ແຫ່ງ ຄື: ບໍລິສັດ TRIS Rating Co., Ltd ທີ່ມີສຳນັກງານໃຫຍ່ຕັ້ງຢູ່ ບາງກອກ , ປະເທດ ໄທ ແລະ ໄດ້ໃຫ້ບໍລິການປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ ໂດຍໃຫ້ບໍລິການຂ້າມແດນ (Non-Commercial Presence).

## 8. ທະນາຄານຕົວແທນເພື່ອການຊຳລະ

ທະນາຄານຕົວແທນເພື່ອການຊຳລະ ແມ່ນທະນາຄານທຸລະກິດ ທີ່ຖືກສ້າງຕັ້ງຂຶ້ນຢູ່ ສປປ ລາວ ທີ່ໃຫ້ບໍລິການຮັບຝາກ, ຊຳລະ ແລະ ໂອນເງິນ ເພື່ອຈຸດປະສົງຊື້-ຂາຍຫຼັກຊັບ ຢູ່ ຕລຊລ.

ປັດຈຸບັນ, ທະນາຄານຕົວແທນເພື່ອການຊຳລະ ທີ່ໄດ້ຮັບການຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກ ສຄຄຊ ມີຈຳນວນ 2 ແຫ່ງ ຄື:

1) ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
2) ທະນາຄານພັດທະນາລາວ.

## 9. ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ

ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ແມ່ນ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ທະນາຄານທຸລະກິດ, ບໍລິສັດຫຼັກຊັບຕ່າງປະເທດ ທີ່ໃຫ້ບໍລິການເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນ ໃນການຕິດຕາມການປະຕິບັດສິດ ແລະ ໜ້າທີ່ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ. ປັດຈຸບັນ, ໄດ້ມີລະບຽບການຮອງຮັບເປັນທີ່ຮຽບຮ້ອຍ ແຕ່ຍັງບໍ່ທັນມີພາກສ່ວນໃດມີຄວາມສົນໃຈໃຫ້ການບໍລິການດ້ານດັ່ງກ່າວ.

## 10. ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມທຸລະກິດຫຼັກຊັບ

ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນ ພະນັກງານຂອງບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ມີ ວຸດທິການສຶກສາ, ປະສົບການ ແລະ ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ.

ນັກວິຊາຊີບທຸລະກິດຫຼັກຊັບ ປະກອບດ້ວຍ: ນາຍໜ້າຊື້ ຂາຍຫຼັກຊັບ, ຜູ້ຄ້າຫຼັກຊັບ, ທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ, ຜູ້ວິເຄາະຫຼັກຊັບ ແລະ ຜູ້ບໍລິຫານກອງທຶນເພື່ອການລົງທຶນ. ໃນປັດຈຸບັນ, ມີພຽງແຕ່ນັກວິຊາຊີບທຸລະກິດຫຼັກຊັບ ປະເພດ ນາຍໜ້າຊື້ ຂາຍຫຼັກຊັບ, ຜູ້ຄ້າຫຼັກຊັບ, ທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ, ຜູ້ວິເຄາະຫຼັກຊັບ ເຊິ່ງມີຈຳນວນທັງໝົດ 73 ຄົນ.

ສະມາຄົມວຽກງານຫຼັກຊັບ ແມ່ນ ສະມາຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ຊຶ່ງແມ່ນໜຶ່ງໃນປະເພດສະມາຄົມເສດຖະກິດ ແລະ ເຄື່ອນໄຫວບໍ່ຫວັງຜົນກຳໄລ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຄົມ ແລະ ສະມາຊິກສະມາຄົມ ເພື່ອປະກອບສ່ວນພັດທະນາວຽກງານຫຼັກຊັບ.

ສະມາຄົມວຽກງານຫຼັກຊັບ ປະກອບມີ: ສະມາຄົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມບໍລິສັດຈົດທະບຽນ. ປັດຈຸບັນ, ແມ່ນຢູ່ໃນຂັ້ນຕອນການຄົ້ນຄວ້າສ້າງຕັ້ງສະມາຄົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ.

ສະມາຄົມວຽກງານຫຼັກຊັບ ມີໜ້າທີ່ ຄົ້ນຄວ້າ ສ້າງລະບຽບການກ່ຽວກັບການເຄື່ອນໄຫວຂອງສະມາຄົມ, ຄົ້ນຄວ້າ ສ້າງກົດຈັນຍາບັນກ່ຽວກັບການເຄື່ອນໄຫວຂອງ ບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ, ຄົ້ນຄວ້າ ແລະ ຍົກລະດັບຄວາມຮູ້ ກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ສະມາຊິກສະມາຄົມ, ໂຄສະນາເຜີຍແຜ່ກົດໝາຍ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ສະມາຊິກ ແລະ ສັງຄົມ, ຄຸ້ມຄອງ, ຕິດຕາມ ກວດກາການດຳເນີນທຸລະກິດ ຂອງສະມາຊິກຕົນ, ໃຫ້ການຮ່ວມມືກັບຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອພັດທະນາວຽກງານຫຼັກຊັບ, ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ອັນເນື່ອງຈາກການເຄື່ອນໄຫວຂອງຕົນ.

# ພາກທີ II

# ການກຳເນີດ ແລະ ການເຕີບໃຫຍ່ຂອງຕະຫຼາດທຶນ ສປປ ລາວ (2010-2020)

## I. ການກຳເນີດຂອງຕະຫຼາດທຶນ ສປປ ລາວ

ພາຍຫຼັງທີ່ລັດຖະບານ ໄດ້ນຳພາປະເທດຊາດພັດທະນາເສດຖະກິດ-ສັງຄົມ ຕາມແນວທາງປ່ຽນແປງໃໝ່ແຕ່ປີ 1986 ເປັນຕົ້ນມາ, ຕະຫຼາດການເງິນ ຂອງ ສປປ ລາວ ກໍ່ໄດ້ຮັບການພັດທະນາ ແລະ ມີການຫັນປ່ຽນຢ່າງຕັ້ງໜ້າ ໂດຍສະເພາະ ແມ່ນການພັດທະນາລະບົບທະນາຄານ ແລະ ສະຖາບັນການເງິນອື່ນ ເພື່ອຮັບປະກັນໃຫ້ການບໍລິການທາງການເງິນ ມີຄວາມຍືນຍົງ. ເຖິງວ່າບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ສາມາດລະດົມເງິນຝາກຈາກສັງຄົມ ແລະ ສະໜອງສິນເຊື່ອ ໃຫ້ແກ່ພາກສ່ວນເສດຖະກິດ ໄດ້ດີພໍສົມຄວນ ແຕ່ກໍ່ຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການລະດົມທຶນໃນໄລຍະໃໝ່ ເປັນຕົ້ນແມ່ນການລະດົມທຶນໄລຍະຍາວເປັນຈຳນວນຫຼາຍ ດ້ວຍຕົ້ນທຶນທີ່ສົມເຫດສົມຜົນ ເຮັດໃຫ້ການປະກອບສ່ວນເຂົ້າໃນການພັດທະນາພື້ນຖານການຜະລິດ ແລະ ການບໍລິການ ມີຂໍ້ຈຳກັດ.

ໂດຍລວມແລ້ວ, ການສ້າງຕັ້ງຕະຫຼາດຫຼັກຊັບລາວ ໄດ້ມີທ່າແໜງມາຕັ້ງແຕ່ປີ 1997 ໂດຍທ່ານ ນາງ ປານີ ຢາທໍ່ຕູ້, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ຊີ້ນຳໃຫ້ມີການຄົ້ນຄວ້າ, ປັບປຸງ ແລະ ອອກຂໍ້ກຳນົດກົດໝາຍເພີ່ມເຕີມ ເພື່ອຂຶນຂວາຍຊອກຫາແຫຼ່ງທຶນ ໃຫ້ແກ່ການຜະລິດ ແລະ ບໍລິການ ໂດຍໄດ້ຄົ້ນຄວ້າ ແລະ ຮ່າງລະບຽບກ່ຽວກັບຕະຫຼາດການເງິນ ເຊິ່ງກວມເອົາທັງຕະຫຼາດເງິນ ແລະ ຕະຫຼາດທຶນໃນສະບັບດຽວກັນ. ການຄົ້ນຄວ້າຮ່າງລະບຽບການດັ່ງກ່າວ ເຮັດໃຫ້ພວກເຮົາຮັບຮູ້ ແລະ ເຂົ້າໃຈກ່ຽວກັບຕະຫຼາດທຶນຫຼາຍຂຶ້ນ. ສະນັ້ນ, ມາຮອດເດືອນ 2 ປີ 2002, ທ່ານ ຜູ້ວ່າການ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຮ່າງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ໄດ້ປັບປຸງຄະນະດັ່ງກ່າວຄືນໃນເດືອນ 10 ປີ 2005. ແຕ່ການຈັດຕັ້ງປະຕິບັດຕົວຈິງຂອງຄະນະດັ່ງກ່າວ ບໍ່ມີຄວາມຄືບໜ້າເທົ່າທີ່ຄວນ ເນື່ອງຈາກວ່າ ຍັງຂາດແນວທາງກ່ຽວກັບວຽກງານດັ່ງກ່າວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

ຈາກສະພາບດັ່ງກ່າວ ໂດຍສົມທົບກັບບົດຮຽນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງຂອງສາກົນ, ພັກປະຊາຊົນປະຕິວັດລາວ ຈຶ່ງໄດ້ມີມະຕິໃນກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກ (ປີ 2006) ໂດຍໄດ້ກຳນົດໃຫ້ສ້າງຕະຫຼາດການເງິນ (Financial Market) ພາຍໃນປະເທດໃຫ້ມີຄວາມສົມບູນ ແລະ ເປັນລະບົບຄົບຊຸດ ຊຶ່ງປະກອບມີ ຕະຫຼາດເງິນ (Money Market) ແລະ ຕະຫຼາດທຶນ (Capital Market) ເພື່ອເປັນປັດໄຈຊຸກຍູ້ການເຂົ້າເຖິງແຫຼ່ງທຶນຂອງພາກສ່ວນເສດຖະກິດ ແນໃສ່ເຮັດໃຫ້ການດຳເນີນງານ ແລະ ຄວາມສາມາດໃນການແຂ່ງຂັນດ້ານການຜະລິດ, ການຄ້າ ແລະ ການບໍລິການຂອງພາກສ່ວນດັ່ງກ່າວ ມີການຂະຫຍາຍຕົວ ຢ່າງມີຊີວິດຊີວາ. ເພື່ອຜັນຂະຫຍາຍມະຕິດັ່ງກ່າວ ລັດຖະບານ ໄດ້ກຳນົດແຜນການສ້າງຕັ້ງຕະຫຼາດຫຼັກຊັບ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010) ໂດຍໄດ້ແຕ່ງຕັ້ງ ແລະ ມອບໝາຍ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ກະກຽມຄວາມພ້ອມຮອບດ້ານໃນການສ້າງຕັ້ງຕະຫຼາດຫຼັກຊັບ.

ສະນັ້ນ, ເພື່ອສືບຕໍ່ຄົ້ນຄວ້າກະກຽມການສ້າງຕັ້ງຕະຫຼາດຫຼັກຊັບ ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ປັບປຸງຄະນະຮ່າງດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຄືນໃໝ່ໃນເດືອນ 10 ປີ 2006. ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການຄົ້ນຄວ້າສ້າງດຳລັດດັ່ງກ່າວ ຄະນະຮັບຜິດຊອບໄດ້ສຶກສາເບື້ອງຕົ້ນກ່ຽວກັບວຽກງານ

ຕະຫຼາດທຶນ ໂດຍໄດ້ສຶກສາຈາກທິດສະດີ ແລະ ພຶດຕິກຳຕົວຈິງ ລວມທັງ ການໄປຖອດຖອນບົດຮຽນຢູ່ຕ່າງປະເທດ. ສະນັ້ນ, ໂດຍໄດ້ຮັບການເຫັນດີຈາກລັດຖະບານ, ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຄັ້ງທີ 1 ກັບຕະຫຼາດຫຼັກຊັບ ສ.ເກົາຫຼີ ທີ່ນະຄອນຫຼວງເຊອູນ ປະເທດ ສ.ເກົາຫລີ ເພື່ອສຶກສາຄວາມເປັນໄປໄດ້ຮ່ວມກັນໃນການສ້າງຕັ້ງຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃນເດືອນ 9 ປີ 2007.

ພ້ອມດຽວກັນນີ້, ເພື່ອຮັບປະກັນການຊີ້ນຳ-ນຳພາໃນການກະກຽມສ້າງຕັ້ງຕະຫຼາດຫຼັກຊັບ, ລັດຖະບານໄດ້ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບ ໃນເດືອນ 11 ປີ 2007 ໂດຍແມ່ນ ທ່ານ ສົມສະຫວາດ ເລັ່ງສະຫວັດ, ອາດີດຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ. ຄະນະຊີ້ນຳລວມດັ່ງກ່າວ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບ ໃນເດືອນ 1 ປີ 2008 ໂດຍແມ່ນ ທ່ານ ຣສ ເດດພູວັງ ມູລຣັຕນ໌ ເປັນຫົວໜ້າ. ຄະນະດັ່ງກ່າວ ມີໜ້າທີ່ໃນການສ້າງແຜນງານສ້າງຕັ້ງຕະຫຼາດຫຼັກຊັບ, ປະສານງານກັບພາກສ່ວນກ່ຽວຂ້ອງ, ພົວພັນຮ່ວມມືກັບສາກົນ ແລະ ໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃຫ້ມວນຊົນຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ.

ຄຽງຄູ່ກັນນີ້, ເພື່ອເປັນການຢັ້ງຢືນຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມຈຳເປັນໃນການສ້າງຕັ້ງຕະຫຼາດຫຼັກຊັບຢູ່ ສປປ ລາວ ໃຫ້ແກ່ຂັ້ນເທິງ, ການນຳຂັ້ນສູງຂອງ ສປປ ລາວ ເຊິ່ງນຳໂດຍທ່ານ ສົມສະຫວາດ ເລັ່ງສະຫວັດ ໃນຖານະເປັນປະທານຄະນະຮັບຜິດຊອບຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບ ພ້ອມດ້ວຍທີມງານ ໄດ້ໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ຢູ່ຫຼາຍປະເທດ ເປັນຕົ້ນແມ່ນ ສສ.ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ປະເທດ ໄທ, ປະເທດ ລຸກຊຳບວກ ແລະ ບ່ອນອື່ນໆຈຳນວນໜຶ່ງ. ຈາກການສຶກສາຂໍ້ມູນເບື້ອງຕົ້ນ ເຫັນວ່າ ການສ້າງຕັ້ງຕະຫຼາດຫຼັກຊັບຢູ່ ສປປ ລາວ ແມ່ນຄວາມຈຳເປັນພາວະວິໄສ. ສະນັ້ນ, ທັງສອງຝ່າຍ ຈຶ່ງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຄັ້ງທີ 2 ໃນເດືອນ 11 ປີ 2008 ທີ່ນະຄອນຫຼວງວຽງຈັນ ເພື່ອກຳນົດເນື້ອໃນຕົ້ນຕໍໃນການຮ່ວມທຶນສ້າງຕັ້ງຕະຫຼາດຫຼັກຊັບລາວ. ຈາກນັ້ນ, ໃນເດືອນ 7 ປີ 2009 ທັງສອງຝ່າຍຈຶ່ງໄດ້ເຊັນບົດບັນທຶກການສ້າງຕັ້ງຕະຫຼາດຫຼັກຊັບລາວ (JVA) ຮ່ວມກັນ ໂດຍແມ່ນທະນາຄານ ແຫ່ງ ສປປ ລາວ ຖືຮຸ້ນ 51% ແລະ ຕະຫຼາດຫຼັກຊັບເກົາຫຼີ ຖືຮຸ້ນ 49%.

ໃນເດືອນ 5 ປີ 2009, ລັດຖະບານໄດ້ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບເພື່ອປ່ຽນແທນ ຄະນະຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບ. ຄະນະດັ່ງກ່າວ ມີໜ້າທີ່ຄຸ້ມຄອງວຽກງານຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ. ພ້ອມດຽວກັນນີ້, ທ່ານ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ແຕ່ງຕັ້ງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຫຼັກຊັບ ບົນພື້ນຖານການປະສານສົມທົບ ແລະ ແລກປ່ຽນຂໍ້ມູນກັບພາກສ່ວນອື່ນທີ່ກ່ຽວຂ້ອງ. ນອກຈາກນີ້, ຜູ້ອຳນວຍການຕະຫຼາດຫຼັກຊັບລາວຜູ້ທຳອິດໄດ້ຮັບການແຕ່ງຕັ້ງຂຶ້ນ ໃນເດືອນ 2 ປີ 2010 ເພື່ອກະກຽມຂັບເຄື່ອນການດຳເນີນທຸລະກິດຂອງຕະຫຼາດຫຼັກຊັບລາວ.

ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ລັດຖະບານ ໄດ້ອອກດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນເດືອນ 5 ປີ 2010. ພ້ອມດຽວກັນນີ້, ອີງໃສ່ດຳລັດດັ່ງກ່າວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ໄດ້ຄົ້ນຄວ້າສ້າງນິຕິກຳໃຕ້ດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວຂອງວຽກງານຫຼັກຊັບ. ນອກຈາກນີ້, ກໍໄດ້ກະກຽມຄວາມພ້ອມດ້ານຕ່າງໆ ເປັນຕົ້ນແມ່ນ ບຸກ

ຄະລາກອນ, ລະບົບໄອທີ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ຄວາມພ້ອມດ້ານອື່ນໆ. ສະນັ້ນ, ໃນວັນທີ 10 ເດືອນ 10 ປີ 2010 ຕະຫຼາດຫຼັກຊັບລາວ ຈຶ່ງໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະ ໄດ້ເປີດໃຫ້ບໍລິການຊື້-ຂາຍຫຼັກຊັບມື້ທຳອິດ ໃນວັນທີ 11 ເດືອນ 1 ປີ 2011 ຊຶ່ງເປັນຂີດໝາຍທາງດ້ານປະຫວັດສາດຂອງຕະຫຼາດການເງິນຂອງ ສປປ ລາວ, ເຮັດໃຫ້ຕະຫຼາດການເງິນມີຄວາມສົມດູນ ລະຫວ່າງ ລະບົບຕະຫຼາດເງິນ ແລະ ຕະຫຼາດທຶນ, ປະກອບສ່ວນເຂົ້າໃນການລະດົມທຶນໄລຍະຍາວ, ປັບປຸງຄວາມເຂັ້ມແຂງຂອງວິສາຫະກິດທາງດ້ານການເງິນ, ການຈັດຕັ້ງ, ການຄຸ້ມຄອງບໍລິຫານຢ່າງມີອາຊີບ ແນໃສ່ພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວເທື່ອລະກ້າວ.

## II. ການເຕີບໃຫຍ່ຂອງຕະຫຼາດທຶນ ສປປ ລາວ (2010-2020)

## 1. ການຈັດຕັ້ງ ແລະ ການກໍ່ສ້າງພະນັກງານ

### 1.1 ການຈັດຕັ້ງ

#### 1.1.1 ການຈັດຕັ້ງຂອງ ຄຄຊ

ຄຄຊ ປະກອບມີ ປະທານ, ຮອງປະທານ, ກຳມະການຈຳນວນໜຶ່ງ ແລະ ມີຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນເລຂາ. ຮອງນາຍົກລັດຖະມົນຕີ ເປັນປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນ ຮອງປະທານຜູ້ທີໜຶ່ງ ທັງເປັນຜູ້ປະຈຳການ, ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານຜູ້ທີສອງ ແລະ ຮອງລັດຖະມົນຕີ ຫຼື ທຽບເທົ່າຮອງລັດຖະມົນຕີ ຈາກຂະແໜງການ ເສດຖະກິດ, ຍຸຕິທຳ ແລະ ຂະແໜງການ ອື່ນທີ່ກ່ຽວຂ້ອງ ເປັນກຳມະການ. ນັບແຕ່ປີ 2010-2014 ຄະນະ ຄຄຊ ມີທັງໝົດ 11 ທ່ານ (ຍິງ 1 ທ່ານ) , 2014-ປັດຈຸບັນ ມີທັງໝົດ 13 ທ່ານ (ຍິງ 4 ທ່ານ).

#### 1.1.2 ການຈັດຕັ້ງຂອງ ສຄຄຊ

ສຄຄຊ ປະກອບມີ ຫົວໜ້າ, ຮອງຫົວໜ້າ,  ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ ຊຶ່ງໃນໄລຍະຜ່ານມາໄດ້ມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ເທື່ອລະກ້າວ ພ້ອມທັງ ມີການແຕ່ງຕັ້ງ, ປັບປຸງ ແລະ ສັບຊ້ອນຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນແຕ່ລະໄລຍະ ຄື: ໄດ້ສຳເລັດການປັບປຸງການຈັດຕັ້ງ ຂັ້ນກົມ ຈຳນວນ 9 ຄັ້ງ, ຂັ້ນພະແນກ ຈຳນວນ 16 ຄັ້ງ ແລະ ວິຊາການ ຈຳນວນ 11 ຄັ້ງ.

#### 1.1.3 ການຈັດຕັ້ງຂອງ ຕລຊລ

ຕລຊລ ປະກອບມີ: ກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ. ໃນໄລຍະຜ່ານມາ, ຕລຊລ ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງ ພະນັກງານໃນແຕ່ລະຂັ້ນ-ຕຳແໜ່ງງານ ໂດຍໄດ້ຄົ້ນຄວ້ານຳສະເໜີຂັ້ນເທິງ ພິຈາລະນາປັບປຸງການຈັດຕັ້ງ ເພື່ອໃຫ້ແທດເໝາະກັບໜ້າວຽກທີ່ເພີ່ມຂຶ້ນ. ນັບແຕ່ປີ 2011 ເປັນຕົ້ນມາ ໄດ້ສຳເລັດການປັບປຸງສະມາຊິກສະພາບໍລິຫານ 7 ຄັ້ງ 10 ເທື່ອຄົນ, ປັບປຸງຄະນະອຳນວຍການ 6 ຄັ້ງ 6 ເທື່ອຄົນ ແລະ ຄະນະພະແນກ 9 ຄັ້ງ 15 ເທື່ອຄົນ ແລະ ຂັ້ນຂະແໜງ 1 ຄັ້ງ 6 ເທື່ອຄົນ.

### 1.2 ການກໍ່ສ້າງພະນັກງານ

#### 1.2.1 ການກໍ່ສ້າງພະນັກງານຂອງ ສຄຄຊ

ນັບແຕ່ປີ 2010 ມາຮອດ 6 ເດືອນຕົ້ນປີ 2020 ສຄຄຊ ໄດ້ເອົາໃຈໃສບຳລຸງ-ກໍ່ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງ. ການກໍ່ສ້າງພາຍໃນປະເທດ ໄດ້ນຳສົ່ງພະນັກງານເຂົ້າຮຽນບຳລຸງທິດສະດີ-ການເມືອງ ໄລຍະ 5 ເດືອນ ຈຳນວນ 1 ທ່ານ, 4 ເດືອນ ຈຳນວນ 1 ທ່ານ ແລະ 45 ວັນ

ຈຳນວນ 12 ທ່ານ; ຍົກລະດັບການສຶກສາລະດັບປະລິນຍາໂທ ຈຳນວນ 7 ທ່ານ ແລະ ປະລິນຍາຕີ ຈຳນວນ 1 ທ່ານ ແລະ ເຂົ້າຮ່ວມຝຶກອົບຮົມໄລຍະສັ້ນ ຢູ່ພາຍໃນຈຳນວນ 457 ເທື່ອຄົນ.

ນອກນີ້, ຍັງໄດ້ນຳສົ່ງພະນັກງານໄປກໍ່ສ້າງຢູ່ຕ່າງປະເທດຕາມການຈັດສັນທຶນຈາກຂັ້ນເທິງ ແລະ ທຶນຂອງຜູ້ກ່ຽວຢ່າງເປັນປົກກະຕິ ເຊິ່ງໄລຍະຜ່ານມາ ໄດ້ມີພະນັກງານໄປຍົກລະດັບການສຶກສາລະດັບປະລິນຍາໂທ ຈຳນວນ 13 ທ່ານ ແລະ ເຂົ້າຮ່ວມຝຶກອົບຮົມໄລຍະສັ້ນ ຕິດພັນກັບວຽກງານຕະຫຼາດທຶນ ແລະ ການທະນາຄານ ຢູ່ຕ່າງປະເທດ ຈຳນວນ 304 ເທື່ອຄົນ.

### 1.2.2 ການກໍ່ສ້າງພະນັກງານຂອງ ຕລຊລ

ນັບແຕ່ປີ 2010 ເປັນຕົ້ນມາ ຕລຊລ ໄດ້ເອົາໃຈໃສ່ບຳລຸງກໍ່ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງ. ການກໍ່ສ້າງພາຍໃນປະເທດ ໄດ້ສົ່ງພະນັກງານເຂົ້າຮຽນບຳລຸງທິດສະດີ-ການເມືອງ 45 ວັນ ຈຳນວນ 10 ທ່ານ, ຍົກລະດັບການສຶກສາລະດັບປະລິນຍາໂທ ຈຳນວນ 4 ທ່ານ ແລະ ເຂົ້າຮ່ວມຝຶກອົບຮົມສຳມະນາ ຢູ່ພາຍໃນຈຳນວນ 245 ເທື່ອຄົນ.

ນອກນີ້, ຍັງໄດ້ນຳສົ່ງພະນັກງານໄປກໍ່ສ້າງຢູ່ຕ່າງປະເທດຢ່າງເປັນປົກກະຕິ ເຊິ່ງໄລຍະຜ່ານມາ ໄດ້ມີພະນັກງານໄປຍົກລະດັບການສຶກສາລະດັບປະລິນຍາໂທ ຈຳນວນ 9 ທ່ານ ແລະ ເຂົ້າຮ່ວມຝຶກອົບຮົມສຳມະນາ ຕິດພັນກັບວຽກງານຕະຫຼາດທຶນ ແລະ ການທະນາຄານ ຢູ່ຕ່າງປະເທດ ຈຳນວນ 195 ເທື່ອຄົນ

## 2. ການພັດທະນາວຽກງານຕະຫຼາດທຶນໃນໄລຍະ ປີ 2010-2020

### 2.1 ນິຕິກຳ ແລະ ນະໂຍບາຍມະຫາພາກກ່ຽວກັບວຽກງານຕະຫຼາດທຶນ

### 2.1.1 ນິຕິກຳ

ນິຕິກຳສູງສຸດ ທີ່ນຳໃຊ້ໃນການຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບ ແມ່ນ ດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເຊິ່ງໄດ້ຮັບການຮັບຮອງຈາກ ນາຍົກລັດຖະມົນຕີ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010 ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນການຄຸ້ມຄອງວຽກງານຫຼັກຊັບ. ຕໍ່ມາ ສຄຄຊ ໄດ້ຄົ້ນຄວ້າຍົກລະດັບ ດຳລັດດັ່ງກ່າວ ມາເປັນ ກົດໝາຍວ່າດ້ວຍ ຫຼັກຊັບ ເພື່ອໃຫ້ມີຄວາມສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງຈຳນວນໜຶ່ງ ເປັນຕົ້ນ ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຊັບສິນຂອງລັດ ແນໃສ່ເຮັດໃຫ້ວຽກງານຫຼັກຊັບ ມີບ່ອນອີງທີ່ໜັກແໜ້ນ ແລະ ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ. ກົດໝາຍດັ່ງກ່າວ ຖືກຮັບຮອງໃນກອງປະຊຸມ ສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ແລະ ປະທານປະເທດໄດ້ອອກລັດຖະດຳລັດ ສະບັບເລກທີ 027/ປປທ ລົງວັນທີ 17 ມັງກອນ 2013 ເພື່ອປະກາດໃຊ້ຢ່າງເປັນທາງການ. ກົດໝາຍສະບັບດັ່ງກ່າວ ໄດ້ກາຍເປັນ ເຄື່ອງມື ແລະ ບ່ອນອີງທີ່ສຳຄັນ ໃຫ້ແກ່ການຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

ໃນປີ 2019 ສຄຄຊ ໂດຍການຮ່ວມກັບພາກສ່ວນກ່ຽວຂ້ອງໄດ້ສຳເລັດການປັບປຸງກົດໝາຍ ວ່າດ້ວຍຫຼັກຊັບ ແລະ ປະທານປະເທດ ໄດ້ອອກລັດຖະດຳລັດ ສະບັບເລກທີ 032/ປປທ ເພື່ອປະກາດໃຊ້ຢ່າງເປັນທາງການ ໃນວັນທີ 14 ມັງກອນ 2020 ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີຄວາມໜັກແໜ້ນ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ, ສ້າງເງື່ອນໄຂສະດວກໃຫ້ບັນດາບໍລິສັດ ຫຼື ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ປະກອບສ່ວນລົງທຶນໃນຕະຫຼາດທຶນ ແລະ ເຮັດໃຫ້ນິຕິກຳຂອງ ສປປ ລາວ ສອດຄ່ອງກັບຫຼັກການຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ເທື່ອລະກ້າວ.

ນອກຈາກນີ້ ສຄຄຊ ໄດ້ເອົາໃຈໃສ່ ແລະ ສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງ ແລະ ຮັບໃຊ້ໃຫ້ແກ່ການຄຸ້ມຄອງການເຄື່ອນໄຫວ ແລະ ການຕິດຕາມກວດກາວຽກງານຫຼັກຊັບໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ແລະ ໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ແລະ ສອດຄ່ອງກັບຫຼັກການຂອງພາກພື້ນ ແລະ ສາກົນ ໃນແຕ່ລະ

ໄລຍະ. ມາຮອດປີ 2020 ຄຄຊ ແລະ ສຄຄຊ ມີນິຕິກຳທັງໝົດ ຈຳນວນ 73 ສະບັບ (ລາຍລະອຽດຕາມຕາຕະລາງ 1)

**ຕາຕະລາງທີ 1**: ນິຕິກຳນຳໃຊ້ໃນການຄຸ້ມຄອງວຽກງານຫຼັກຊັບ

| ລຳດັບ | ປະເພດ | ຈຳນວນ (ສະບັບ) | ໝາຍເຫດ |
|---|---|---|---|
| 1 | ກົດໝາຍ | 1 | |
| 2 | ດຳລັດ | 3 | |
| 3 | ຂໍ້ຕົກລົງ | 27 | ນຳໃຊ້ພາຍໃນ ສຄຄຊ 6 ສະບັບ |
| 4 | ລະບຽບ | 16 | ນຳໃຊ້ພາຍໃນ ສຄຄຊ 1 ສະບັບ |
| 5 | ຄຳແນະນຳ | 11 | ນຳໃຊ້ພາຍໃນ ສຄຄຊ 2 ສະບັບ |
| 6 | ແຈ້ງການ | 15 | |
| ລວມ | | 73 | |

**(ລາຍຊື່ນິຕິກຳນຳໃຊ້ໃນການຄຸ້ມຄອງວຽກງານຫຼັກຊັບ ຕາມເອກະສານຊ້ອນທ້າຍ 1)**

ນອກຈາກນີ້ ເພື່ອຜັນຂະຫຍາຍ ກົດໝາຍວ່າດ້ວຍຫຼັກຊັບ ແລະ ນິຕິກຳທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານຕະຫຼາດທຶນ, ຕລຊລ ໄດ້ສ້າງ ແລະ ປັບປຸງນິຕິກຳ ເພື່ອນຳໃຊ້ເປັນບ່ອນອີງ ແລະ ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ແນໃສ່ເຮັດໃຫ້ການວຽກງານດັ່ງກ່າວມີປະສິດທິພາບ, ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງ ຮັບປະກັນຄວາມສອດຄ່ອງກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ແລະ ສອດຄ່ອງກັບຫຼັກການຂອງພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ. ມາຮອດປີ 2020 ຕລຊລ ມີນິຕິກຳທັງໝົດ ຈຳນວນ 48 ສະບັບ (ລາຍລະອຽດຕາມຕາຕະລາງ 2).

**ຕາຕະລາງທີ 2**: ນິຕິກຳ ທີ່ອອກໂດຍ ຕລຊລ

| ລຳດັບ | ປະເພດ | ຈຳນວນ (ສະບັບ) | ໝາຍເຫດ |
|---|---|---|---|
| 1 | ລະບຽບ | 25 | ນຳໃຊ້ພາຍໃນ ສຄຄຊ 15 ສະບັບ |
| 2 | ຄຳແນະນຳ | 22 | ນຳໃຊ້ພາຍໃນ ສຄຄຊ 22 ສະບັບ |
| 3 | ຄູ່ມື | 1 | ນຳໃຊ້ພາຍໃນ ສຄຄຊ 1 ສະບັບ |
| ລວມ | | 48 | |

**(ລາຍຊື່ນິຕິກຳ ທີ່ອອກໂດຍ ຕລຊລ ຕາມເອກະສານຊ້ອນທ້າຍ 2)**

### 2.1.2 ນະໂຍບາຍມະຫາພາກ ກ່ຽວກັບວຽກງານຕະຫຼາດທຶນ

ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຫຼັກຊັບ ແນໃສ່ເຮັດໃຫ້ການ ລະດົມທຶນ, ລົງທຶນ ແລະ ພັດທະນາຕະຫຼາດຫຼັກຊັບຂະຫຍາຍຕົວຢ່າງຕໍ່ເນື່ອງ, ຍືນຍົງ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຄຄຊ ໂດຍການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໄດ້ກຳນົດນະໂຍບາຍຊຸກຍູ້ສົ່ງເສີມ ເປັນແຕ່ໄລຍະ ດັ່ງລາຍລະອຽດລຸ່ມນີ້:

- ໃນເດືອນ ທັນວາ ປີ 2010 ປະທານປະເທດໄດ້ອອກລັດຖະບັນຍັດ ວ່າດ້ວຍການກຳນົດອັດຕາອາກອນກຳໄລ ແລະ ຄ່າທຳນຽມສຳລັບການດຳເນີນທຸລະກິດໃນຕະຫຼາດຫຼັກຊັບ ສະບັບເລກທີ 001/ປປທ, ລົງວັນທີ 28 ທັນວາ 2010 ໂດຍກຳນົດນະໂຍບາຍໃຫ້ແກ່ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ໃນການຫຼຸດອັດຕາອາກອນກຳໄລ 5% ຈາກອັດຕາປົກກະຕິ ເປັນໄລຍະເວລາ 4 ປີ ນັບຕັ້ງແຕ່ວັນຈົດທະບຽນໃນຕະຫຼາດຫຼັກຊັບເປັນຕົ້ນໄປ;

- ໃນປີ 2011 ໄດ້ມີການກຳນົດເຂົ້າໃນ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011. ມາດຕາ 46 ລາຍໄດ້ທີ່ຖືກຍົກເວັ້ນອາກອນ ໃນນີ້ ແມ່ນໄດ້ກຳນົດກ່ຽວກັບ "ກຳໄລຈາກການຂາຍຮຸ້ນຂອງ ບຸກຄົນ ຫຼື ນິຕິບຸກຄົນ ໃນຕະຫຼາດຫຼັກຊັບ" ແລະ "ເງິນປັນຜົນໃຫ້ແກ່ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຂອງບໍລິສັດທີ່ຈົດທະບຽນໃນ ຕລຊລ ເວັ້ນເສຍແຕ່ມີລະບຽບການສະເພາະ" ເຊິ່ງກົດໝາຍວ່າດ້ວຍສ່ວຍສາອາກອນ ໄດ້ປັບປຸງ 1 ຄັ້ງໃນປີ 2015 (ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015, ມາດຕາ 47 ລາຍໄດ້ທີ່ຖືກຍົກເວັ້ນອາກອນ) ເຊິ່ງເນື້ອໃນດັ່ງກ່າວ ແມ່ນຍັງຄົງຮັກສາໄວ້ຄືເກົ່າ; ໃນປີ 2019 ໄດ້ມີການກຳນົດເຂົ້າໃນກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ມາດຕາ 35 ລາຍໄດ້ທີ່ຖືກຍົກເວັ້ນອາກອນລາຍໄດ້ ຄື: "ການຂາຍ ຫຼື ໂອນຮຸ້ນ, ເງິນປັນຜົນຂອງຮຸ້ນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ";
- ໃນປີ 2016 ສຳເລັດການນຳສະເໜີ ກົມສ່ວຍສາອາກອນ (ກະຊວງການເງິນ) ເພື່ອພິຈາລະນາເພີ່ມບາງເນື້ອໃນເຂົ້າໃສ່ບົດແນະນຳຂອງລັດຖະມົນຕີກະຊວງການເງິນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເພື່ອໃຫ້ກວມເອົາການບໍລິການໃນຂົງເຂດວຽກງານຫຼັກຊັບ ເຊິ່ງປັດຈຸບັນ ພາກສ່ວນກ່ຽວຂ້ອງ ກຳລັງດຳເນີນການຄົ້ນຄວ້າເພີ່ມເນື້ອໃນດັ່ງກ່າວ;
- ໃນ ເດືອນ ພະຈິກ ປີ 2019 ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ລັດວິສາຫະກິດ, ລັດຖະບານໄດ້ເຫັນດີໃຫ້ ລັດວິສາຫະກິດ ນຳໃຊ້ຄັງຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ ເປັນຕົ້ນ ດ້ານການຈັດຕັ້ງ, ການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານ ແນໃສ່ໃຫ້ລັດວິສາຫະກິດ ມີຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ;
- ໃນເດືອນ ມິຖຸນາ ປີ 2019 ເພື່ອສ້າງສິ່ງຈູງໃຈໃຫ້ແກ່ບໍລິສັດຈົດທະບຽນ ສະພາແຫ່ງຊາດ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍ ອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ໂດຍໄດ້ຫຼຸດອັດຕາອາກອນກຳໄລຈາກ 20% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງໃຫ້ແກ່ບໍລິສັດຈົດທະບຽນ ນັບແຕ່ມື້ຈົດທະບຽນເປັນຕົ້ນໄປ ເຊິ່ງມີຜົນບັງຄັບໃຊ້ ປີ 2020 ເປັນຕົ້ນໄປ;
- ໃນປີ 2020 ຄະນະປະຈຳສະພາແຫ່ງຊາດ ໄດ້ອອກ ມະຕິວ່າດ້ວຍການລົບລ້າງລັດຖະບັນຍັດ ເລກທີ 001/ປປທ, ລົງວັນທີ 28 ທັນວາ 2010 ວ່າດ້ວຍ ການກຳນົດອັດຕາອາກອນກຳໄລ ແລະ ຄ່າທຳນຽມ ສຳລັບການດຳເນີນທຸລະກິດໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 21/ຄປຈ, ລົງວັນທີ 27 ມີນາ 2020 ເຊິ່ງກ່ອນໜ້ານີ້ ລັດຖະບານໄດ້ເກັບຄ່າທຳນຽມ ຊື້-ຂາຍຫຼັກຊັບ 0,3%.

## 2.2 ການລະດົມທຶນຜ່ານຕະຫຼາດທຶນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ, ການຂະຫຍາຍບໍລິສັດຈົດທະບຽນ ແລະ ການພັດທະນາຜະລິດຕະພັນໃໝ່

### 2.2.1 ການລະດົມທຶນຜ່ານຕະຫຼາດທຶນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ

❖ **ການລະດົມທຶນຜ່ານຕະຫຼາດທຶນ**

ພາຍຫຼັງຕະຫຼາດຫຼັກຊັບລາວ ໄດ້ຮັບການສ້າງຕັ້ງຂຶ້ນ, ໃນເບື້ອງຕົ້ນລັດຖະບານ ໄດ້ຫັນລັດວິສາຫະກິດ 2 ແຫ່ງ ຈາກຂະແໜງການທະນາຄານ ແລະ ພະລັງງານໄຟຟ້າ ເປັນບໍລິສັດມະຫາຊົນ, ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງຖືວ່າເປັນຜະລິດຕະພັນຫຼັກຊັບຊຸດທຳອິດໃນປະຫວັດສາດຂອງຕະຫຼາດທຶນ ລາວ. ຈາກຂະແໜງການທະນາຄານ ແມ່ນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL). ຈາກນັ້ນ, ກໍ່ໄດ້ມີວິສາຫະກິດທັງພາກລັດ ແລະ ເອກະຊົນ ເຂົ້າມາລະດົມທຶນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.

ນອກຈາກນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄືເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງ ແລະ ພັດທະນາກົນໄກການຊື້-ຂາຍໃນ ຕລຊລ ເພື່ອໃຫ້ສາມາດຮອງຮັບການອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ນັບແຕ່ທ້າຍປີ 2018 ເປັນຕົ້ນມາ ເພື່ອເຮັດໃຫ້ການ

ອອກຈຳໜ່າຍພັນທະບັດລັດຖະບານ ຄ່ອຍໆຫັນເຂົ້າສູ່ລະບົບຕະຫຼາດທຶນຫຼາຍຂຶ້ນ. ການອອກຈຳໜ່າຍດັ່ງກ່າວ ແມ່ນເລີ່ມຈາກ ສະກຸນເງິນກີບ ແລະ ໄດ້ເລີ່ມທົດລອງອອກຈຳໜ່າຍເປັນ ສະກຸນເງິນໂດລາສະຫະລັດ ໃນເດືອນ ກັນຍາ 2020.

ຮອດເດືອນ ກັນຍາ ປີ 2020, ລັດຖະບານ ແລະ ວິສາຫະກິດ ສາມາດລະດົມແຫຼ່ງທຶນໄລຍະຍາວຜ່ານ ຕະຫຼາດທຶນ ມີຍອດເຫຼືອທັງໝົດ ຈຳນວນ 23.018 ຕື້ກີບ ກວມເອົາ 14% ຂອງ GDP, ໃນນີ້ ພັນທະບັດ ລັດຖະບານ 3.052,06 ຕື້ກີບ, ອອກຮຸ້ນສາມັນ 6.818 ຕື້ກີບ ແລະ ອອກຮຸ້ນກູ້ຢູ່ຕ່າງປະເທດ 13.148 ຕື້ກີບ. ປັດຈຸບັນ ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນ 11 ແຫ່ງ ທີ່ມາຈາກຂະແໜງການເງິນ, ພະລັງງານໄຟຟ້າ, ກະສິກຳ, ອຸດສະຫະກຳ, ການຄ້າ-ການບໍລິການ ແລະ ອື່ນໆ. ແຫຼ່ງທຶນດັ່ງກ່າວ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງໃນການຂະຫຍາຍທຸລະກິດ ແລະ ການບໍລິການຂອງວິສາຫະກິດ ໂດຍໄດ້ຖືກນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ເປັນຕົ້ນ ສ້າງເຂື່ອນໄຟຟ້າ, ສ້າງປໍ້ານໍ້າມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນໍ້າມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. (ລາຍຊື່ຂອງບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ຕາມເອກະສານຊ້ອນທ້າຍ 3).

**ຕາຕະລາງທີ 3:** ສັງລວມການລະດົມທຶນຢູ່ພາຍໃນ ແລະ ຕ່າງປະເທດ ແຕ່ປີ 2010-2020. **ຫົວໜ່ວຍ: ຕື້ກີບ**

| ປີ | 2010 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | ລວມ |
|---|---|---|---|---|---|---|---|---|---|---|---|
| ພາຍໃນ | 1.237 | 1.611 | 40 | 240 | 2.832 | - | 458 | 68 | 332 | - | 6.818 |
| ຕ່າງປະເທດ | - | - | - | 1.625 | - | 2.558 | 1.500 | 5.349 | 1.620 | 496 | 13.148 |
| ພັນທະບັດ | - | - | - | - | - | - | - | 285 | 1.373 | 1.394 | 3.052 |
| **ລວມ** | **1.237** | **1.611** | **40** | **1.865** | **2.832** | **2.558** | **1.958** | **5.702** | **3.325** | **1.890** | **23.018** |

**ຕາຕະລາງທີ 4:** ສັງລວມການລະດົມທຶນຜ່ານການອອກຈຳໜ່າຍພັນທະບັດລັດຖະບານ (12/2018-12/2020)

| ອາຍຸ ພັນທະບັດ (ປີ) | ຜູ້ລົງທຶນພາຍໃນ (ຕື້ກີບ) | ຜູ້ລົງທຶນຕ່າງປະເທດ (ຕື້ກີບ) | ລວມ (ຕື້ກີບ) | ເປີເຊັນ ທີ່ຂາຍໄດ້ຕາມອາຍຸ (%) |
|---|---|---|---|---|
| 1 | 451,68 | 6,96 | 458,63 | 15,03 |
| 2 | 49,86 | 1,88 | 51,74 | 1,70 |
| 3 | 2.385,08 | 4,36 | 2.389,43 | 78,29 |
| 5 | 77,52 | 20,90 | 98,42 | 3,22 |
| 7 | 3,76 | 4,57 | 8,33 | 0,27 |
| 10 | 38,40 | 4,72 | 43,12 | 1,41 |
| 15 | 0,002 | 0,40 | 0,40 | 0,01 |
| 20 | 1,81 | 0,17 | 1,98 | 0,06 |
| **ລວມ** | **3.008,11** | **43,95** | **3.052,06** | **100** |

❖ **ການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ**

ເພື່ອຮັບປະກັນໃຫ້ບໍລິສັດຈົດທະບຽນ ມີຄວາມເຂັ້ມແຂງ ແລະ ປະຕິບັດສອດຄ່ອງກັບລະບຽບການທີ່ ຄຄຊ ກຳນົດອອກ, ສຄຄຊ ຮ່ວມກັບພາກສ່ວນກ່ຽວຂ້ອງ ໄດ້ຕິດຕາມການເຄື່ອນໄຫວຢ່າງໃກ້ສິດ ເປັນຕົ້ນແມ່ນ ການລາຍງານ ແລະ ເປີດເຜີຍຂໍ້ມູນໃຫ້ຖືກຕ້ອງຄົບຖ້ວນ ແລະ ທັນເວລາ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ຖືຮຸ້ນ; ໄດ້ລົງໄປເຜີຍແຜ່ແນະນຳກ່ຽວກັບຂັ້ນຕອນ ແລະ ວິທີການດຳເນີນກອງປະຊຸມຜູ້ຖືຮຸ້ນ; ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ແລະ ການດຳເນີນທຸລະກິດກັບບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ ເພື່ອເຮັດໃຫ້ການເຄື່ອນໄຫວທຸລະກິດຂອງບໍລິສັດຈົດທະບຽນມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

ໄດ້ສ້າງເງື່ອນໄຂ ແລະ ຊຸກຍູ້ໃຫ້ບໍລິສັດຈົດທະບຽນ ສ້າງເອກະສານລາຍງານການເງິນຂອງຕົນໃຫ້ສອດຄ່ອງກັບມາດຕະຖານສາກົນ (IFRS) ລວມທັງ ໄດ້ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດດັ່ງກ່າວ ໂດຍອີງຕາມແຈ້ງການ ທີ່ກະຊວງການເງິນ ແລະ ຄຄຊ ວາງອອກ ເປັນແຕ່ລະໄລຍະ. ພ້ອມທັງ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົບທວນໄລຍະຂ້າມຜ່ານສູ່ IFRS ເປັນແຕ່ລະໄລຍະ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ.

ພ້ອມນີ້, ໃນປີ 2019 ຄຄຊ ໄດ້ສຳເລັດການສ້າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ (CG Guideline) ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ໂດຍໄດ້ກຳນົດເປັນຄຳແນະນຳສະເພາະກ່ຽວກັບຫຼັກການຄຸ້ມຄອງບໍລິຫານທີ່ຈຳເປັນ. ໃນນີ້, ໄດ້ກຳນົດແນວທາງໃນການຈັດຕັ້ງປະຕິບັດ ສຳລັບ ຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະອຳນວຍການ ແລະ ຫົວໜ້າໜ່ວຍງານຕ່າງໆ ຂອງບໍລິສັດຈົດທະບຽນ ໃຫ້ເຄື່ອນໄຫວວຽກງານຢ່າງມີປະສິດທິພາບ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ພ້ອມທັງ ຍົກສູງການປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ບໍລິສຸດສັດຊື່ ເພື່ອຜົນປະໂຫຍດໂດຍລວມຂອງບໍລິສັດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນທັງໝົດ. ພ້ອມນີ້ ຍັງໄດ້ຄົ້ນຄວ້າເຄື່ອງມືເພື່ອວັດແທກການຈັດຕັ້ງປະຕິບັດຫຼັກການດັ່ງກ່າວ ທີ່ເອີ້ນວ່າ Lao CG Score Card ເພື່ອເປັນຂົວຕໍ່ກ້າວໄປສູ່ການມີສ່ວນຮ່ວມໃນໂຄງການ ASEAN CG Score Card ໃນຕໍ່ໜ້າ. ຜ່ານການປະຕິບັດຕົວຈິງ ເຫັນວ່າ ຜູ້ບໍລິຫານຂອງບໍລິສັດຈົດທະບຽນ ໄດ້ຄ່ອຍໆຮັບຮູ້ ແລະ ເຂົ້າໃຈ ພ້ອມທັງ ເຫັນຄວາມສຳຄັນຂອງວຽກງານການຄຸ້ມຄອງບໍລິຫານ ຫຼາຍຂຶ້ນ.

### 2.2.2 ການຂະຫຍາຍບໍລິສັດຈົດທະບຽນ

ອີງຕາມທິດສະດີ ແລະ ພຶດຕິກຳຕົວຈິງ, ຕະຫຼາດຫຼັກຊັບຈະຂະຫຍາຍຕົວ ແລະ ຄົງຕົວຢ່າງໝັ້ນຄົງໄດ້ ຕ້ອງມີບໍລິສັດຈົດທະບຽນ ທີ່ມີຄຸນນະພາບ ແລະ ມີຈຳນວນທີ່ເພີ່ມຂຶ້ນ. ສະນັ້ນ, ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ ໄດ້ປັບປຸງເງື່ອນໄຂການອອກຈຳໜ່າຍຫຼັກຊັບ ແລະ ການຈົດທະບຽນໃນຕະຫຼາດຫຼັກຊັບ. ນອກຈາກນັ້ນ, ສຄຄຊ ຍັງໄດ້ ຄົ້ນຄວ້າຄວາມເປັນໄປໄດ້ໃນການສ້າງຕັ້ງກະດານຊື້-ຂາຍຫຼັກຊັບ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ທີ່ເອີ້ນວ່າ ກະດານທາງເລືອກ ຫຼື ກະດານ PAM (People Alternative Market) ເພື່ອສ້າງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮອງຮັບການລະດົມທຶນ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍສະເພາະແມ່ນ ອັນທີ່ຕິດພັນກັບຂະແໜງທີ່ເປັນທ່າແຮງ ແລະ ເປັນເປົ້າໝາຍບຸລິມະສິດພັດທະນາເສດຖະກິດຂອງລັດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ ຕາມທິດພັດທະນາແບບຍືນຍົງ ແລະ ສີຂຽວ.

ນອກຈາກນີ້, ສຄຄຊ ໄດ້ປະສານສົມທົບກັບບັນດາກະຊວງ ແລະ ຂະແໜງການຕ່າງໆ ເພື່ອລົງເກັບກຳຂໍ້ມູນການເຄື່ອນໄຫວທຸລະກິດ ຂອງວິສາຫະກິດລັດ ແລະ ເອກະຊົນ ຢູ່ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າຄັດເລືອກວິສາຫະກິດ ທີ່ເຫັນວ່າມີທ່າແຮງ ແລະ ຄວາມເປັນໄປໄດ້ ເພື່ອຫັນເປັນບໍລິສັດມະຫາຊົນ ແລະ ກ້າວເຂົ້າສູ່ການຈົດທະບຽນໃນ ຕລຊລ. ອີງຕາມຜົນການຄົ້ນຄວ້າດັ່ງກ່າວ ໄດ້ມີວິສາຫະກິດຈຳນວນໜຶ່ງ ທີ່ຕ້ອງສືບຕໍ່ປັບປຸງໃຫ້ໄດ້

ມາດຖານເງື່ອນໄຂ ເພື່ອລະດົມທຶນຜ່ານຕະຫຼາດທຶນ ເຊິ່ງບັນຫານີ້, ລັດຖະບານ ໄດ້ເຫັນດີໃຫ້ວິສາຫະກິດຂອງລັດ ສາມາດນຳໃຊ້ຄັງສຳຮອງ ເພື່ອໃຊ້ຈ່າຍເຂົ້າໃນການປັບປຸງຄວາມພ້ອມດັ່ງກ່າວ.

**2.2.3 ການພັດທະນາຜະລິດຕະພັນໃໝ່**

ໃນໄລຍະຕົ້ນຂອງການເປີດຕະຫຼາດ, ຜະລິດຕະພັນທີ່ຊື້-ຂາຍໃນ ຕລຊລ ມີພຽງແຕ່ຮຸ້ນສາມັນເທົ່ານັ້ນ. ຕໍ່ມາ, ສຄຄຊ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງກົນໄກ ແລະ ລະບຽບການ ເພື່ອຮອງຮັບການອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ເພື່ອສ້າງຊ່ອງທາງໃໝ່ໃຫ້ແກ່ລັດຖະບານ ໃນການລະດົມທຶນຈາກມວນຊົນທັງພາຍໃນ ແລະ ຕ່າງປະເທດ; ໄດ້ມີກົນໄກຮອງຮັບສຳລັບວິສາຫະກິດທີ່ຕ້ອງການໄປລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ; ໄດ້ສ້າງກົນໄກ ແລະ ລະບຽບການ ເພື່ອຮອງຮັບການອອກຮຸ້ນກູ້ ຢູ່ພາຍໃນປະເທດ ເພື່ອເປັນເຄື່ອງມືບໍລິຫານໂຄງສ້າງດ້ານການເງິນຂອງວິສາຫະກິດໃຫ້ມີຄວາມຄ່ອງຕົວ; ໄດ້ອອກລະບຽບກ່ຽວກັບການນຳເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ (Depository Reciept: DR) ເພື່ອອອກ ແລະ ຂາຍຢູ່ຕ່າງປະເທດ ເພື່ອໃຫ້ຜູ້ລົງທຶນມີຄວາມຄ່ອງຕົວໃນການແລກປ່ຽນຊື້-ຂາຍ.

ມາຮອດປັດຈຸບັນ ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຜະລິດຕະພັນຫຼັກຊັບ ທີ່ສາມາດຊື້-ຂາຍໃນ ຕລຊລ ປະກອບມີ ຮຸ້ນ, ຮຸ້ນກູ້, ພັນທະບັດລັດຖະບານ, ໜ່ວຍລົງທຶນ, ອະນຸພັນ ແລະ ຫຼັກຊັບປະເພດອື່ນ ຕາມການກຳນົດຂອງ ຄຄຊ. ແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງ ປັດຈຸບັນ ຢູ່ ຕລຊລ ມີພຽງແຕ່ ຮຸ້ນ ແລະ ພັນທະບັດລັດຖະບານ ເທົ່ານັ້ນ.

## 2.3 ການຂະຫຍາຍຖານ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ

**2.3.1 ການຂະຫຍາຍຖານ ແລະ ປົກປ້ອງ ຜູ້ລົງທຶນ**

❖ **ການຂະຫຍາຍຖານຜູ້ລົງທຶນ**

ຄຄຊ ແລະ ສຄຄຊ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໄດ້ຖືສຳຄັນວຽກງານຂະຫຍາຍຖານຜູ້ລົງທຶນ ໂດຍໄດ້ຍົກເວັ້ນອາກອນເງິນປັນຜົນ (Dividend Tax) ແລະ ອາກອນລາຍຮັບຈາກການຊື້-ຂາຍຮຸ້ນ (Capital Gain Tax) ໃນປີ 2015; ໄດ້ປັບຫຼຸດຄ່າທຳນຽມຊື້-ຂາຍ ໃນສ່ວນຂອງ ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ ຈາກ 2,1 ມາເປັນ 1,7% ໃນປີ 2015 ແລະ ຈາກ 1,7% ມາເປັນ 1% ໃນປີ 2017 ແລະ ຈາກ 1 ມາເປັນ 0,7% ໃນເດືອນ ກັນຍາ 2020 (ຍ້ອນລັດຖະບານໄດ້ຍົກເວັ້ນຄ່າທຳນຽມຊື້-ຂາຍຫຼັກຊັບ ສ່ວນຂອງລັດຖະບານ 0,3%) ແລະ ຈາກ 0,7% ມາເປັນ 0,68% ໃນເດືອນ ຕຸລາ 2020; ໄດ້ປັບປຸງກົນໄກການຊື້-ຂາຍຂອງ ຕລຊລ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຜູ້ລົງທຶນ (ລາຍລະອຽດໄດ້ລະບຸໄວ້ໃນຂໍ້ 2.4.1 ຂີດໜ້າທີ 2); ໄດ້ອອກນິຕິກຳ ເພື່ອຄຸ້ມຄອງຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງມາລົງທຶນໃນ ຕລຊລ ແລະ ໄດ້ຖືເປັນບຸລິມະສິດທຳອິດ ໃນການສະໜອງເງິນຕາຕ່າງປະເທດ ສຳລັບຜູ້ລົງທຶນຕ່າງປະເທດ ທີ່ຕ້ອງການນຳເງິນປັນຜົນ ແລະ ເງິນລົງທຶນໃນຫຼັກຊັບ ກັບຄືນປະເທດ.

❖ **ການປົກປ້ອງຜູ້ລົງທຶນລາຍຍ່ອຍ**

ເພື່ອປົກປ້ອງຜູ້ລົງທຶນ ທີ່ລົງທຶນໃນ ຕລຊລ ໂດຍສະເພາະແມ່ນ ຜູ້ລົງທຶນລາຍຍ່ອຍ, ຄຄຊ ແລະ ສຄຄຊ ໄດ້ສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງໃນວຽກງານຫຼັກຊັບ ເປັນຕົ້ນແມ່ນ ວຽກງານການເປີດເຜີຍຂໍ້ມູນ, ຄວາມຮັບຜິດຊອບຂອງສະພາບໍລິຫານ, ສິດຂອງຜູ້ຖືຮຸ້ນ, ຄວາມເປັນເຈົ້າຂອງ, ການຄວບຄຸມ ແລະ ຄວາມໂປ່ງໃສ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ. ນອກຈາກນີ້, ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ.

ນອກຈາກນີ້ ສຄຄຊ ໄດ້ສ້າງຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມໃນກໍລະນີສົງໃສ ວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 4 ຊ່ອງທາງ ດັ່ງລຸ່ມນີ້:

- ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
- ສົ່ງຂໍ້ມູນຜ່ານທາງໄປສະນີ;
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

### 2.3.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ລົງທຶນ

ສຄຄຊ ໄດ້ຖືສຳຄັນ ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ເຊິ່ງໃນປີ 2013 ສຄຄຊ ໄດ້ຍົກລະດັບວຽກງານໂຄສະນາເຜີຍແຜ່ ໃຫ້ເປັນພະແນກສະເພາະພາຍໃນ ສຄຄຊ ເພື່ອສຸມໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ມວນຊົນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ.

ພ້ອມນີ້, ໄດ້ສຸມໃສ່ໂຄສະນາເຜີຍແຜ່ລະບຽບການ ແລະ ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ມວນຊົນ ໃນຫຼາຍຮູບການ ແລະ ວິທີການ ຢ່າງມີຈຸດສຸມ ເປັນຕົ້ນແມ່ນ: ເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ຫຼາຍພາກສ່ວນໃນສັງຄົມ ລວມຈຳນວນ 165 ຄັ້ງ ມີຜູ້ເຂົ້າຮ່ວມລວມທັງໝົດ 20.780 ເທື່ອຄົນ, ຈັດກິດຈະກຳສຳມະນາ, ຈັດງານປະຈຳປີ, ສ້າງປຶ້ມ ແລະ ວີດີໂອສົ່ງເສີມຄວາມຮູ້, ຜະລິດສະປອດໂຄສະນາ, ກາຕູນເອນິເມຊັນ, ຂຽນບົດຄວາມ ແລະ ສຳພາດ ຜູ້ຊົງຄຸນວຸດທິ ໃນຫົວຂໍ້ຕ່າງໆຂອງວຽກງານຕະຫຼາດທຶນ ເພື່ອໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນແມ່ນ: ວາລະສານ, ໜັງສືພິມ, ເວັບໄຊທ໌ທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກ, Facebook, Youtube, ວິທະຍຸ ແລະ ລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ”. ພ້ອມນີ້, ໃນປີ 2019 ເພື່ອເປັນການສ້າງພື້ນຖານແຫຼ່ງຂໍ້ມູນ, ບົດຮຽນ ແລະ ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ, ສຄຄຊ ໄດ້ ສ້າງຫໍສະໝຸດຂະໜາດນ້ອຍຂຶ້ນ ແລະ ພ້ອມນຳໃຊ້ຢ່າງເປັນລະບົບ ໃນປີ 2020 ເປັນຕົ້ນມາ.

ສຳລັບ ຕລຊລ ກໍ່ໄດ້ເອົາໃຈໃສ່ໃນວຽກງານໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ ດ້ວຍການຈັດສຳມະນາໃນຫຼາຍຮູບແບບ ແລະ ຫຼາຍຫົວຂໍ້ ຈຳນວນຫຼາຍກວ່າ 152 ຄັ້ງ ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 15.709 ເທື່ອຄົນ; ໄດ້ຈັດກິດຈະກຳເປີດໂລກແຫ່ງການລົງທຶນ (Investment Gate Way) ນັບແຕ່ປີ 2013-2019 ເປັນຈຳນວນ 7 ຄັ້ງ ມີຜູ້ເຂົ້າຮ່ວມຫຼາຍກວ່າ 4.572 ເທື່ອຄົນ; ໄດ້ຈັດພິມປຶ້ມຄູ່ມືເປີດໂລກແຫ່ງການລົງທຶນຈຳນວນ 6 ເຫຼັ້ມ ລວມທັງໝົດ 13.000 ຫົວ ເພື່ອແຈກຢາຍໃຫ້ມວນຊົນ; ໄດ້ຈັດພິມປຶ້ມວັດຈະນານຸກົມຄຳສັບ ແລະ ກຸ່ມຄຳສັບສະເພາະກ່ຽວກັບຕະຫຼາດທຶນ; ໄດ້ສ້າງ ແລະ ເຜີຍແຜ່ວີດີໂອສົ່ງເສີມຄວາມຮູ້ຕະຫຼາດທຶນ ຈຳນວນ 17 ເລື່ອງ; ໄດ້ເຜີຍແຜ່ຂໍ້ມູນກ່ຽວກັບວຽກງານຕະຫຼາດທຶນ ລົງໃນເວັບໄຊທ໌ ແລະ Facebook ຂອງ ຕລຊລ ເຊິ່ງມີຜູ້ເຂົ້າຊົມໜ້າເວັບໄຊຈຳນວນ ຫຼາຍກວ່າ 40.000 ຄັ້ງ ແລະ ມີຈຳນວນຄົນຕິດຕາມການເຄື່ອນໄຫວ Facebook ຈຳນວນຫຼາຍກວ່າ 15.000 ບັນຊີ.

ສຳລັບບໍລິສັດຫຼັກຊັບ ກໍ່ໄດ້ຍົກສູງວຽກງານເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດທຶນໃຫ້ແກ່ມວນຊົນ ເຊັ່ນດຽວກັນ ໂດຍໄດ້ຈັດສຳມະນາໃຫ້ແກ່ມວນຊົນທົ່ວໄປ, ນັກສຶກສາ ແລະ ອາຈານຈາກສະຖາບັນການສຶກສາ ຢູ່ນະຄອນຫຼວງວຽງຈັນ ແລະ ຢູ່ຕ່າງແຂວງ ໃນຫົວຂໍ້ຕ່າງໆເຊັ່ນ: ຂັ້ນຕອນການເປີດບັນຊີ ແລະ ຜົນປະໂຫຍດຈາກການຊື້-ຂາຍຮຸ້ນ, ການເຂົ້າໃຈທຸລະກິດ ກ່ອນການລົງທຶນຊື້ຮຸ້ນ, ຮູ້ຈັກການລົງທຶນໃນຮຸ້ນ, ການວິເຄາະຮຸ້ນ ແລະ ການລົງທຶນໃນຮຸ້ນຢ່າງມືອາຊີບ ແລະ ອື່ນໆ. ນອກຈາກນີ້, ບໍລິສັດຫຼັກຊັບຍັງໄດ້ເຜີຍແຜ່ຄວາມຮູ້ກ່ຽວກັບຕະຫຼາດ

ທຶນ ຜ່ານສື່ສັງຄົມອອນລາຍເຊັ່ນ: Facebook, Youtube. ພິເສດ ບໍລິສັດຫຼັກຊັບໄດ້ຖືສຳຄັນ ການໃຫ້ຄວາມຮູ້ແກ່ລູກຄ້າຂອງຕົນ ໂດຍໄດ້ຈັດສຳມະນາພິເສດກ່ອນ ແລະ ຫຼັງ ເປີດບັນຊີຊື້-ຂາຍຫຼັກຊັບ.

ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຫຼາຍຂຶ້ນ ເປັນຕົ້ນແມ່ນ ຄວາມເຂົ້າໃຈກ່ຽວກັບ ການລະດົມທຶນ, ການລົງທຶນ ແລະ ການເຄື່ອນໄຫວຂອງບໍລິສັດຈົດທະບຽນໃນ ຕລຊລ ຊຶ່ງສາມາດຕີຖອຍປະກົດການຫຍໍ້ທໍ້ຈາກການລະດົມທຶນນອກລະບົບໄປເທື່ອລະກ້າວ.

## 2.4 ການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນລາວ

### 2.4.1 ການສ້າງຄວາມເຂັ້ມແຂງຂອງ ຕລຊລ

❖ **ການປັບປຸງ ແລະ ພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ (ICT)**

ຕລຊລ ໄດ້ຖືລະບົບ ICT ເປັນໝາກຫົວໃຈຫຼັກ ເພື່ອຂັບເຄື່ອນການໃຫ້ບໍລິການຂອງ ຕລຊລ ໃຫ້ມີປະສິດທິພາບ, ທັນສະໄໝ ແລະ ປອດໄພ ໂດຍໄດ້ພັດທະນາ ແລະ ບຳລຸງຮັກສາລະບົບຢ່າງຕໍ່ເນື່ອງ ເປັນຕົ້ນ ລະບົບຮັບຄຳສັ່ງຊື້-ຂາຍ, ລະບົບຈັບຄູ່ຊື້-ຂາຍ, ລະບົບສະສາງ ແລະ ຕັດບັນຊີຫຼັກຊັບ, ລະບົບຮັບຝາກຫຼັກຊັບ, ລະບົບຂໍ້ມູນຂ່າວສານ ແລະ ລະບົບອື່ນໆ ເພື່ອຮັບປະກັນການເຄື່ອນໄຫວໃຫ້ບໍລິການຂອງ ຕລຊລ. ພິເສດ ໃນປີ 2017 ຕລຊລ ໄດ້ພັດທະນາລະບົບເພື່ອຮອງຮັບການຊື້-ຂາຍພັນທະບັດລັດຖະບານຜ່ານ ຕລຊລ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນທ້າຍປີ 2018.

❖ **ການປັບປຸງກົນໄກການຊື້-ຂາຍ**

ຕລຊລ ໄດ້ປັບປຸງ ແລະ ຍົກລະດັບກົນໄກການຊື້-ຂາຍຮຸ້ນ ເພື່ອອຳນວຍຄວາມສະດວກ ແລະ ເພີ່ມໂອກາດໃຫ້ຜູ້ລົງທຶນສາມາດຊື້-ຂາຍຫຼັກຊັບ ຄ່ອງຕົວຍິ່ງຂຶ້ນ ເຊັ່ນ: ໄດ້ເປີດນຳໃຊ້ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ (Home Trading System) ໃນປີ 2013 ເພື່ອໃຫ້ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍ, ຕິດຕາມຍອດເງິນ ແລະ ຍອດຫຼັກຊັບໃນບັນຊີຫຼັກຊັບໄດ້ດ້ວຍຕົນເອງ ຜ່ານລະບົບຄອມພິວເຕີ; ໄດ້ປັບປຸງລະບົບການຈັບຄູ່ຊື້-ຂາຍຈາກການປະມູນແບບຊ່ວງເວລາ (Call Aution)ມາເປັນການປະມູນແບບຕໍ່ເນື່ອງ (Continuous Auction) ແລະ ໄດ້ເພີ່ມຂອບເຂດການປ່ຽນແປງລາຄາລາຍວັນຈາກ ±5% ມາເປັນ ±10% ໃນປີ 2014; ໄດ້ສ້າງລະບົບເພື່ອເຊື່ອມໂຍງກັບທະນາຄານດູແລຊັບສິນໃນປີ 2014 ເພື່ອໃຫ້ບໍລິການດູແລບັນຊີເງິນ ແລະ ບັນຊີຫຼັກຊັບຂອງຜູ້ລົງທຶນ ແລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ; ໄດ້ປັບຫົວໜ່ວຍຊື້-ຂາຍຮຸ້ນຂັ້ນຕ່ຳຈາກ 1 ຮຸ້ນ ມາເປັນ 100 ຮຸ້ນ ໃນປີ 2016; ໄດ້ເພີ່ມປະເພດຄຳສັ່ງຊື້-ຂາຍຕາມລາຄາຕະຫຼາດ (Market Order), ຄຳສັ່ງແບບມີເງື່ອນໄຂ (Conditional Order) ແລະ ຄຳສັ່ງຈອງລ່ວງໜ້າ (Preliminary Reserve Order) ໃນປີ 2018; ໄດ້ຂະຫຍາຍເວລາຊື້-ຂາຍຈາກ 09:00 – 11:30 ມາເປັນ 09:00 – 15:00 ໃນປີ 2019; ໄດ້ມີຮູບແບບການຊື້-ຂາຍຮຸ້ນເປັນຈຳນວນຫຼາຍ (Block Trade) ໃນປີ 2019; ໄດ້ປັບຫົວໜ່ວຍລາຄາ (Tick Size) ໃນປີ 2019; ໄດ້ອະນຸຍາດໃຫ້ຜູ້ລົງທຶນປະເພດສະຖາບັນ ສາມາດຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໃນປີ 2017 ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າຂອງທະນາຄານດູແລຊັບສິນໃຫ້ສາມາດຊື້-ຂາຍ ຄ່ອງຕົວຂຶ້ນ ແລະ ມີເວັບໄຊທ໌ ໃຫ້ຜູ້ລົງທຶນເຂົ້າຫາຂໍ້ມູນກ່ຽວກັບສະພາບການຊື້-ຂາຍຮຸ້ນປະຈຳວັນໄດ້ ເພື່ອໃຫ້ຜູ້ລົງທຶນມີຄວາມຄົບຖ້ວນກ່ອນຕັດສິນໃຈລົງທຶນໃນຕະຫຼາດທຶນລາວ.

❖ **ນິຕິກຳ**

ຕລຊລ ໄດ້ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວທຸລະກິດຂອງ ຕລຊລ ເປັນຕົ້ນແມ່ນ ລະບຽບວ່າດ້ວຍສະມາຊິກກະພາບຂອງ ຕລຊລ, ລະບຽບວ່າດ້ວຍການຈົດທະບຽນຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ, ລະບຽບວ່າດ້ວຍການສະສາງ, ຊຳລະທຸລະກຳຫຼັກຊັບ, ລະບຽບວ່າດ້ວຍການຕິດຕາມຕະຫຼາດຫຼັກຊັບ ແລະ ອື່ນໆ. ນອກຈາກນີ້, ຕລຊລ ໄດ້ສ້າງນິຕິກຳເພື່ອເປັນບ່ອນອີງໃນການບໍລິຫານງານພາຍໃນຂອງຕົນ

ເຊັ່ນ: ລະບຽບວ່າດ້ວຍການຄຸ້ມຄອງພະນັກງານ, ລະບຽບວ່າດ້ວຍການຈັດຕັ້ງ ແລະ ການບໍລິຫານຂອງ ຕລຊລ, ລະບຽບວ່າດ້ວຍການຊື້-ຂາຍຫຼັກຊັບຂອງພະນັກງານ ຕລຊລ ແລະ ອື່ນໆ. ຮອດທ້າຍປີ 2020 ຕລຊລ ມີລະບຽບການທັງໝົດ ຈຳນວນ 48 ສະບັບ (ນຳໃຊ້ພາຍໃນ 38 ສະບັບ). ນິຕິກຳດັ່ງກ່າວ ໄດ້ກາຍເປັນເຄື່ອງມື ແລະ ບ່ອນອີງທີ່ສຳຄັນ ໃຫ້ແກ່ການເຄື່ອນໄຫວຂອງ ຕລຊລ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. (ລາຍລະອຽດຂອງນິຕິກຳແຕ່ລະສະບັບຢູ່ໃນເອກະສານຊ້ອນທ້າຍທີ 2)

❖ **ການຮ່ວມມືສາກົນ**

ຕະຫຼາດຫຼັກຊັບລາວ ໄດ້ເອົາໃຈໃສ່ປະຕິບັດວຽກງານຮ່ວມມືສາກົນ ທັງສອງຝ່າຍ ແລະ ຫຼາຍຝ່າຍ ເປັນຕົ້ນແມ່ນ ໄດ້ເຊັນ MoU ຮ່ວມກັບ ຕະຫຼາດຫຼັກຊັບຮ່າໂນ້ຍ ແລະ ຕະຫຼາດຫຼັກຊັບໂຮຈິມິນ ໃນປີ 2013, ຕະຫຼາດຫຼັກຊັບໄທ ໃນປີ 2015, ຕະຫຼາດຫຼັກຊັບກຳປູເຈຍ ໃນປີ 2016 ແລະ ຕະຫຼາດຫຼັກຊັບເຊີນເຈີ້ນ ໃນປີ 2017 ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອດ້ານວິຊາການກ່ຽວກັບຕະຫຼາດທຶນ ແລະ ເພື່ອຍົກສູງບົດບາດຂອງ ຕລຊລ ໃນເວທີສາກົນ.

ນອກນັ້ນ ໃນຂົງເຂດພາກພື້ນລຸ່ມແມ່ນ້ຳຂອງ, ຕະຫຼາດຫຼັກຊັບລາວ ຍັງໄດ້ເປັນເຈົ້າພາບຈັດກອງປະຊຸມເສີມຂະຫຍາຍການ ຮ່ວມມືໃນການພັດທະນາຄວາມຮູ້ກ່ຽວກັບຕະຫຼາດທຶນໃນກຸ່ມປະເທດລຸ່ມແມ່ນ້ຳຂອງ "GMS: Capital Market Education Forum 2016" ແລະ ປະກອບສ່ວນໃນວຽກງານການເຊື່ອມໂຍງຕະຫຼາດຫຼັກຊັບຂອງປະເທດ CLMV (Cambodia, Lao PDR, Myanmar and Vietnam) ແລະ ປະເທດໃນຂົງເຂດພາກພື້ນແມ່ນ້ຳຂອງ.

### 2.4.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ ສະຖາບັນສື່ກາງດ້ານຫຼັກຊັບ

❖ **ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ**

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະຖາບັນສື່ກາງດ້ານຫຼັກຊັບ ປະກອບດ້ວຍ: ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ບໍລິສັດປະເມີນມູນຄ່າຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມວຽກງານຫຼັກຊັບ. (ລາຍຊື່ສະຖາບັນສື່ກາງດ້ານຫຼັກຊັບ ຢູ່ໃນເອກະສານຊ້ອນທ້າຍ 4)

ສຳລັບບໍລິສັດຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິບົນພື້ນຖານລະບຽບ ວ່າດ້ວຍການການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດຫຼັກຊັບ ໂດຍການກວດກາກັບທີ່ຈຳນວນ 10 ຄັ້ງ (1 ຄັ້ງ/ປີ/ບໍລິສັດ) ແລະ ກວດກາຕາມເອກະສານ. ໃນປີ 2013 ບໍລິສັດຫຼັກຊັບ ໄດ້ສ້າງລະບົບບັນຊີສຳເລັດໂດຍພື້ນຖານ ແລະ ສາມາດລາຍງານເອກະສານລາຍງານການເງິນໃຫ້ ສຄຄຊ ໄດ້ເປັນປົກກະຕິ ແລະ ປີ 2014 ກໍ່ໄດ້ປັບປຸງໂປຣແກຣມບັນຊີ ເພື່ອໃຫ້ສາມາດລາຍງານອັດຕາສ່ວນຄວາມພຽງພໍຂອງທຶນ; ປີ 2019 ບໍລິສັດຫຼັກຊັບ ໄດ້ຫັນມານຳໃຊ້ລະບົບສົ່ງຂໍ້ມູນທາງເອເລັກໂທຣນິກ ເພື່ອລາຍງານຂໍ້ມູນຕາມງວດເວລາໃຫ້ ສຄຄຊ ເຊິ່ງຜ່ານການນຳໃຊ້ລະບົບດັ່ງກ່າວ ໄດ້ຊ່ວຍໃຫ້ຂອດການລາຍງານມີຄວາມຊັດເຈນ, ຄ່ອງຕົວ ແລະ ວ່ອງໄວຂຶ້ນ. ພ້ອມນີ້ ໃນປີ 2019 ເພື່ອໃຫ້ການຄຸ້ມຄອງມີຄວາມຮັດກຸມ ແລະ ຄ່ອງຕົວຍິ່ງຂຶ້ນ ສຄຄຊ ໄດ້ນຳໃຊ້ຫຼັກການຄຸ້ມຄອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision).

ສຳລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບອື່ນ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ເພື່ອໃຫ້ບໍລິການໃນຂົງເຂດວຽກງານຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວຜ່ານທາງເອກະສານ ຢ່າງເປັນປົກກະຕິ ແລະ ໄດ້ປະສານສົມທົບກັບຜູ້ຄຸ້ມຄອງຫຼັກຂອງຫົວໜ່ວຍດັ່ງກ່າວ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃນແຕ່ລະໄລຍະ.

ຜ່ານການຕິດຕາມກວດກາ ເຫັນວ່າ ສະຖາບັນສື່ກາງດ້ານຫຼັກຊັບ ເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສອດຄ່ອງກັບລະບຽບການເປັນຢ່າງດີ ສາມາດປະກອບສ່ວນຂັບເຄື່ອນວຽກງານຕະຫຼາດທຶນໄດ້ດີພໍສົມຄວນ. (ຜົນງານພົ້ນເດັ່ນຂອງບໍລິສັດຫຼັກຊັບ ຢູ່ໃນເອກະສານຊ້ອນທ້າຍ 5)

❖ **ການຝຶກອົບຮົມ ແລະ ການອອກໃບອະນຸຍາດໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ**

ເພື່ອສ້າງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ແກ່ຂົງເຂດຕະຫຼາດທຶນ, ຕລຊລ ໄດ້ຈັດຕັ້ງຫຼັກສູດຝຶກອົບຮົມນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ (Borker) ເຊິ່ງລວມມີຫຼັກສູດ CMIP 1, CMIP 2 (ໂຄງການຮ່ວມມືກັບຕະຫຼາດຫຼັກຊັບແຫ່ງປະເທດໄທ) ແລະ ຫຼັກສູດ Lao PIB (ຫຼັກສູດຂອງ ຕລຊລ) ຈຳນວນ 6 ຄັ້ງ ມີຜູ້ເຂົ້າຮ່ວມ 304 ເທື່ອຄົນ ແລະ ປະເພດທີ່ປຶກສາທາງການເງິນ (Financial Advisor) ຈຳນວນ 1 ຄັ້ງ ມີຜູ້ເຂົ້າຮ່ວມ 49 ຄົນ.

ອີງໃສ່ຜົນການສອບເສັງທີ່ໄດ້ກ່າວຂ້າງເທິງ ສຳລັບຜູ້ເຂົ້າຮ່ວມ ແລະ ເສັງຜ່ານ ທີ່ເປັນພະນັກງານຂອງ ບໍລິສັດຫຼັກຊັບ, ສຄຄຊ ໄດ້ອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ທັງໝົດຈຳນວນ 27 ຄົນ, ໃນນີ້ ປະເພດທີ່ປຶກສາທາງດ້ານການເງິນ 11 ຄົນ, ປະເພດນາຍໜ້າຊື້-ຂາຍຫຼັກຊັບ 7 ຄົນ, ປະເພດຜູ້ຄ້າຫຼັກຊັບ 4 ຄົນ, ປະເພດນັກວິເຄາະ 1 ຄົນ ແລະ ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ 4 ຄົນ. ນອກຈາກນີ້, ສຄຄຊ ໄດ້ຮັບຮອງ ຜູ້ກວດສອບຈຳນວນ 17 ຄົນ ທີ່ສັງກັດຢູ່ບໍລິສັດກວດສອບ 4 ແຫ່ງ ແລະ ຮັບຮອງຜູ້ປະເມີນມູນຄ່າຊັບສິນ ຈຳນວນ 23 ຄົນ ທີ່ສັງກັດຢູ່ບໍລິສັດປະເມີນມູນຄ່າຊັບສິນ 9 ແຫ່ງ. ຈຳນວນນັກວິຊາຊີບທີ່ໄດ້ກ່າວມານີ້, ຖ້າທຽບໃສ່ລະດັບການພັດທະນາຂອງຕະຫຼາດທຶນລາວ ເຫັນວ່າພຽງພໍໂດຍພື້ນຖານ. ຈຳນວນນັກວິຊາຊີບທີ່ໄດ້ກ່າວມານີ້, ຖ້າທຽບໃສ່ລະດັບການພັດທະນາຂອງຕະຫຼາດທຶນລາວ ເຫັນວ່າພຽງພໍໂດຍພື້ນຖານ.

ໃນໄລຍະ 10 ປີ ຜ່ານມາ, ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ຢ່າງເປັນປົກກະຕິດ້ວຍການຈັດຝຶກອົບຮົມ ເພື່ອເຜີຍແຜ່ລະບຽບການທີ່ກ່ຽວຂ້ອງ ທີ່ປັບປຸງ ແລະ ອອກໃໝ່ (Refreshment Course) ໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ ແລະ ຫົວຂໍ້ຕ່າງໆ ທີ່ກ່ຽວຂ້ອງ.

## 2.5 ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ

### 2.5.1 ການພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ

ສຄຄຊ ໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງວຽກງານຫຼັກຊັບ ໂດຍການພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ເພື່ອຮັບປະກັນໃຫ້ການປະຕິບັດວຽກງານຄຸ້ມຄອງຫຼັກຊັບ ມີຄວາມວ່ອງໄວ, ເປັນລະບົບ, ຮັບປະກັນ ແລະ ທັນສະໄໝຍິ່ງຂຶ້ນ. ໃນໄລຍະຜ່ານມາ ສຄຄຊ ບົນພື້ນຖານສົມທົບກັບທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການສ້າງ ແລະ ພັດທະນາລະບົບ ເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ເພື່ອຄຸ້ມຄອງບໍລິຫານຂໍ້ມູນຂ່າວສານວຽກງານຫຼັກຊັບ, ອຳນວຍຄວາມສະດວກວຽກງານບໍລິຫານພາຍໃນ ສຄຄຊ, ຄຸ້ມຄອງຂໍ້ມູນຂອງບໍລິສັດເປົ້າໝາຍຈົດທະບຽນ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ສະຖາບັນສີກາງດ້ານຫຼັກຊັບ ແລະ ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ລວມທັງໝົດ ຈຳນວນ 13 ລະບົບ ດັ່ງນີ້:

| ລຳດັບ | ຊື່ລະບົບ | ປີສຳເລັດ |
|---|---|---|
| 1 | ລະບົບກະດານຂ່າວ ຂອງ ສຄຄຊ | 2014 |
| 2 | ລະບົບຂາອອກ-ຂາເຂົ້າ ຂອງ ສຄຄຊ | 2015 |
| 3 | ລະບົບຈອງຫ້ອງປະຊຸມ ຂອງ ສຄຄຊ | 2015 |
| 4 | ລະບົບຮັບສົ່ງລາຍງານອອນລາຍ ຈາກ ບໍລິສັດຈົດທະບຽນ | 2016 |
| 5 | ລະບົບຈັດເກັບ ແລະ ຄົ້ນຫາເອກະສານ ຂອງ ສຄຄຊ | 2016 |
| 6 | ລະບົບຮັບຄຳຮ້ອງຟ້ອງຮ້ອງຮຽນຈາກສັງຄົມ ຜ່ານທາງອອນລາຍ | 2017 |
| 7 | ລະບົບຮັບສົ່ງລາຍງານການຊື້ຂາຍຮຸ້ນຂອງນັກລົງທຶນຜ່ານບໍລິສັດຫຼັກຊັບ | 2018 |
| 8 | ລະບົບບັນຊີ ຂອງ ສຄຄຊ | 2018 |
| 9 | ລະບົບການຍື່ນຄຳຮ້ອງ ແລະ ອະນຸມັດການອອກຈຳໜ່າຍຫຼັກຊັບ | 2019 |

| | | |
|---|---|---|
| 10 | ລະບົບຄຸ້ມຄອງຊັບສິນ ແລະ ເຄື່ອງໃຊ້ຫ້ອງການ | 2019 |
| 11 | ລະບົບລາຍງານການຊື້-ຂາຍຮຸ້ນ | 2020 |
| 12 | ລະບົບຍື່ນເອກະສານຂໍອະນຸຍາດສ້າງຕັ້ງ ຫຼື ຮັບຮອງສະຖາບັນສື່ກາງດ້ານຫຼັກຊັບ | 2020 |
| 13 | ລະບົບກະດານຂ່າວ ແລະ ອ່ານວຽນ | 2020 |

### 2.5.2 ການຮ່ວມມືສາກົນ

ນັບຕັ້ງແຕ່ຕະຫຼາດທຶນລາວໄດ້ຮັບການສ້າງຕັ້ງຂຶ້ນ, ສຄຄຊ ໄດ້ສືບຕໍ່ເອົາໃຈໃສ່ວຽກງານຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ ຢ່າງເປັນປົກກະຕິ.

ໃນຮູບແບບສອງຝ່າຍ, ໃນປີ 2013 ສຄຄຊ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈສອງຝ່າຍກ່ຽວກັບ ຄຄຊ ສສ. ຫວຽດນາມ, ໄທ ແລະ ສປ.ຈີນ ແລະ ໃນປີ 2018 ໄດ້ເຊັນຂໍ້ຕົກລົງວ່າດ້ວຍການຮ່ວມມືສອງຝ່າຍຮ່ວມກັບ ສະຖາບັນ CPA Australia. ນອກຈາກນີ້, ສຄຄຊ ຍັງໄດ້ຮ່ວມມືສອງຝ່າຍກັບ ຄຄຊ ສ.ເກົາຫຼີ, ຄຄຊ ຍີ່ປຸ່ນ, ສະຖາບັນສົ່ງເສີມກຳມະການບໍລິສັດໄທ (Thai IOD), ສະຖານທູດລຸກຊຳບວກປະຈຳ ສປປ ລາວ, ສະຖາບັນນັກວິຊາຊີບການບັນຊີອົດສະຕາລີ (CPA Australia), ສະຖາບັນຄົ້ນຄວ້າໂນມູລະ, ຕະຫຼາດຫຼັກຊັບໄທ ແລະ ອື່ນໆ. ພ້ອມດຽວກັນນີ້, ກໍ່ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງຈັດສຳມະນາຢູ່ນະຄອນຫຼວງວຽງຈັນ ແລະ ສົ່ງພະນັກງານ ສຄຄຊ ໄປຖອດຖອນບົດຮຽນຢູ່ບັນດາປະເທດດັ່ງກ່າວຢ່າງເປັນປົກກະຕິ. ພ້ອມທັງ ໄດ້ຮັບທຶນສະໜັບສະໜູນຈຳນວນໜຶ່ງເຂົ້າໃນການພັດທະນາຕະຫຼາດທຶນລາວ.

ໃນຮູບແບບຫຼາຍຝ່າຍ, ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ຢູ່ໃນຂອບ ອາຊຽນ (ASEAN), ແລະ ອາຊຽນ+3 (ASEAN+3) ເປັນຕົ້ນແມ່ນ ກອງປະຊຸມໂຄງການການພັດທະນາຕະຫຼາດທຶນອາຊຽນ ຂັ້ນຫົວໜ້າ ສຄຄຊ ແລະ ຮອງຫົວໜ້າ ສຄຄຊ (ACMF Chair ແລະ ACMF Deputies), ກອງປະຊຸມຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ (WC-CMD), ກອງປະຊຸມການພັດທະນາພື້ນຖານໂຄງລ່າງຂອງການຊຳລະ-ສະສາງຂ້າມແດນ (CSIF), ຄະນະເຮັດວຽກພາຍໃຕ້ຂອບການເປີດເສລີການບໍລິການທາງດ້ານການເງິນອາຊຽນ (WC-FSL), ຄະນະເຮັດວຽກການເປີດເສລີບັນຊີທຶນອາຊຽນ (WC-CAL) ແລະ ກອງປະຊຸມການພັດທະນາຕະຫຼາດພັນທະບັດອາຊຽນ (ABMF). ພາຍໃຕ້ການຮ່ວມມືດັ່ງກ່າວ, ພະນັກງານ ສຄຄຊ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງຈັດສຳມະນາຢູ່ນະຄອນຫຼວງວຽງຈັນ ແລະ ສົ່ງພະນັກງານ ສຄຄຊ ໄປຖອດຖອນບົດຮຽນຢູ່ບັນດາປະເທດດັ່ງກ່າວຢ່າງເປັນປົກກະຕິ. ພ້ອມນີ້, ໃນປີ 2014 ສຄຄຊ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືຫຼາຍຝ່າຍລະຫວ່າງ ຄຄຊ 5 ປະເທດ ເຂດອ່າງແມ່ນ້ຳຂອງ.

ໃນຮູບແບບການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ໃນເດືອນ ກັນຍາ 2018 ຄຄຊ ໄດ້ຖືກຮັບຮອງເປັນສະມາຊິກສຳຮອງຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ຊຶ່ງເປັນການຍົກບົດບາດວຽກງານຫຼັກຊັບ ຂອງ ສປປ ລາວ ໃນເວທີສາກົນ. ພ້ອມນີ້ ໃນຂອບການຮ່ວມມືດັ່ງກ່າວ ຄຄຊ ແລະ ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງ ອົງການ IOSCO ແລະ ປະກອບສ່ວນເຂົ້າໃນຄະນະກຳມະການຕ່າງໆຂອງ ອົງການ IOSCO ເປັນຕົ້ນ ຄະນະກຳມະການຕະຫຼາດທີ່ກຳລັງພັດທະນາ ແລະ ຂະຫຍາຍຕົວ (GEMC) ແລະ ຄະນະກຳມະການພາກພື້ນອາຊີ-ປາຊີຟິກ (APRC) ແລະ ສຳມະນາທາງວິຊາການໃນຫົວຂໍ້ຕ່າງໆ ຢ່າງເປັນປົກກະຕິ. ນອກຈາກນີ້, ໄດ້ມີການຮ່ວມມືກັບ ອົງການການເງິນສາກົນ (IFC) ເພື່ອປັບປຸງວຽກງານ ການຄຸ້ມຄອງບໍລິຫານ ໃຫ້ແກ່ບໍລິສັດເປົ້າໝາຍຈົດທະບຽນ ແລະ ບໍລິສັດຈົດທະບຽນ ຢູ່ ຕະຫຼາດຫຼັກຊັບລາວ ອີກດ້ວຍ.

ສັງລວມແລ້ວ, ຕະຫຼອດໄລຍະ 10 ປີທີ່ຜ່ານມາ ຂະແໜງຕະຫຼາດທຶນ ໄດ້ຮັບການສ້າງຕັ້ງ ແລະ ພັດທະນາຢ່າງເປັນລະບົບ ດ້ວຍບາດກ້າວທີ່ໜັກແໜ້ນ. ມາຮອດປັດຈຸບັນ, ຕະຫຼາດທຶນລາວປະກອບມີທຸກພາກສ່ວນ ທີ່ເປັນອົງປະກອບສຳຄັນ ແລະ ຈຳເປັນໃນລະບົບນິເວດວິທະຍາຕະຫຼາດທຶນ ເຊິ່ງລວມມີ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດຈົດທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ, ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ຜະລິດຕະພັນທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ.

ຕະຫຼອດໄລຍະ 10 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່, ຂະແໜງຕະຫຼາດທຶນ ໄດ້ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຢ່າງຕັ້ງໜ້າ ຊຶ່ງຂັ້ນເທິງໄດ້ຮັບຮູ້ຜົນງານ ແລະ ໄດ້ມອບໃບຍ້ອງຍໍໃນລະດັບຕ່າງໆ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມຕະຫລາດທຶນ ຄື:

- ຫຼຽນໄຊແຮງງານ ຊັ້ນ III 1 ໜ່ວຍ;
- ຫຼຽນກາແຮງງານ 1 ໜ່ວຍ;
- ໃບຍ້ອງຍໍ ແລະ ໃບຊົມເຊີຍຈາກຜູ້ວ່າການ ທຫລ ຫຼາຍສະບັບ;
- ໃບກຽດຕິຄຸນ, ໃບຍ້ອງຍໍ ແລະ ໃບຊົມເຊີຍ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ຈຳນວນຫຼາຍສະບັບ.

ນອກຈາກນີ້ ໜ່ວຍພັກ ສຄຄຊ ໄດ້ຮັບການຍ້ອງຍໍ ເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ 7 ສະໄໝຕໍ່ເນື່ອງ.

## II. ຂໍ້ຄົງຄ້າງ

1) ຕະຫຼາດທຶນລາວ ຍັງບໍ່ສາມາດເປັນຊ່ອງທາງໃໝ່ໃນການຈັດສັນແຫຼ່ງທຶນ ແລະ ການລົງທຶນ ໄດ້ດີເທົ່າທີ່ຄວນ ເນື່ອງຈາກ:
   - ຜະລິດຕະພັນຫຼັກຊັບ ທີ່ຊື້-ຂາຍໃນຕະຫຼາດ ບໍ່ຫຼາກຫຼາຍ ແລະ ຄຸນນະພາບບໍ່ສູງ (ຜົນຕອບແທນຕໍ່າ ຫຼື ບໍ່ມີຜົນຕອບແທນສຳລັບບາງບໍລິສັດຈົດທະບຽນ) ຍ້ອນວິສາຫະກິດທັງພາກລັດ ແລະ ເອກະຊົນ ຍັງອ່ອນແອຫຼາຍດ້ານ, ເຄື່ອນໄຫວທຸລະກິດຂາດທຶນຕໍ່ເນື່ອງຫຼາຍປີ, ຂາດການຖືບັນຊີຢ່າງເປັນລະບົບ, ການຄຸ້ມຄອງບໍລິຫານ ຍັງບໍ່ທັນເປັນມືອາຊີບແທ້;
   - ການປະຕິຮູບລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ ແລະ ລະດົມທຶນຜ່ານຕະຫຼາດທຶນ ໄດ້ລະບຸໄວ້ໃນມະຕິ 5 ສະໄໝທີ IX ຂອງພັກແລ້ວ ແຕ່ບໍ່ຖືກຈັດຕັ້ງຜັນຂະຫຍາຍຢ່າງເປັນຮູບປະທຳ ເຮັດໃຫ້ຂາດຕົວແບບທີ່ດີຈາກວິສາຫະກິດຂອງລັດທີ່ລະດົມທຶນຜ່ານຕະຫຼາດທຶນ (ຫົວໜ່ວຍທີ່ມີກຳໄລ ບໍ່ຖືກສະໜັບສະໜູນຈາກພາກລັດໃຫ້ມາລະດົມທຶນຜ່ານຕະຫຼາດທຶນ ແຕ່ຫົວໜ່ວຍທີ່ຂາດທຶນ ຖືກບັນຈຸໃນບັນຊີເປົ້າໝາຍລະດົມທຶນຜ່ານຕະຫຼາດທຶນ);
   - ບາງບໍລິສັດທີ່ຈົດທະບຽນແລ້ວ ຍັງເຄື່ອນໄຫວຂາດທຶນ ແລະ ບໍ່ສາມາດປັນຜົນໃຫ້ແກ່ຜູ້ຖືຮຸ້ນ, ການປະຕິບັດນະໂຍບາຍບັນຊີ ຍັງບໍ່ສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ເຮັດໃຫ້ຜູ້ລົງທຶນຂາດຄວາມເຊື່ອໝັ້ນ ຕໍ່ເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ, ການຫັນຈາກການບໍລິຫານຈັດການແບບຄອງເດີມ ໄປສູ່ການຄຸ້ມຄອງບໍລິຫານ (CG) ຕາມປົດຮຽນທີ່ດີຂອງສາກົນ ຍັງຊັກຊ້າ.

2) ພື້ນຖານເສດຖະກິດບໍ່ທັນໜັກແໜ້ນ, ສະເຖຍລະພາບທາງດ້ານການເງິນ-ເງິນຕາ ຍັງບໍ່ທັນໝັ້ນທ່ຽງແທ້ ເປັນຕົ້ນ ການຂາດດຸນງົບປະມານ, ພາລະໜີ້ສິນຕໍ່ຕ່າງປະເທດຍັງສູງ, ເງິນກີບຍັງອ່ອນຄ່າໃນບາງໄລຍະ ໂດຍສະເພາະໄລຍະການແຜ່ລະບາດຂອງພະຍາດ ໂຄວິດ-19, ການແລກປ່ຽນເງິນຕາກັບຄືນຂອງຜູ້ລົງທຶນຕ່າງປະເທດ ຍັງພົບຄວາມຫຍຸ້ງຍາກ ເຮັດໃຫ້ຜູ້ລົງທຶນຕ່າງປະເທດ ບໍ່ສົນໃຈມາລົງທຶນເພີ່ມເຕີມ ແລະ ຜູ້ທີ່ໄດ້ລົງທຶນແລ້ວ ກໍ່ຊອກຫາທຸກວິທີທາງເພື່ອອອກຈາກຕະຫຼາດທຶນລາວ; ນະໂຍບາຍດ້ານອາກອນ (ເປັນຕົ້ນ: ອາກອນກຳໄລ, ອາກອນມູນຄ່າເພີ່ມ) ແລະ ບໍ່ແມ່ນອາກອນຂອງພາກລັດ ຕໍ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເຖິງວ່າໄດ້ປະຕິບັດ ແຕ່ເມື່ອທຽບກັບເງື່ອນໄຂຕະຫຼາດທຶນພາຍໃນປະເທດ ເຫັນວ່າຍັງບໍ່ທັນສົມຄູ່. ທັງໝົດເຫຼົ່ານີ້ ບໍ່ເອື້ອອຳນວຍຕໍ່ ການລະດົມທຶນ ແລະ ການລົງທຶນໃນຕະຫຼາດທຶນເທົ່າທີ່ຄວນ;

3) ການຄຸ້ມຄອງຂອງພາກລັດ ຕໍ່ບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ ຍັງບໍ່ໜັກແໜ້ນເຂັ້ມແຂງແທ້ ເປັນຕົ້ນແມ່ນການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຍັງບໍ່ໄດ້ປະຕິບັດຢ່າງຈິງຈັງ ເຮັດໃຫ້ເກີດມີການປຽບທຽບຊັ່ງຊາ ແລະ ທໍ້ຖອຍ ສຳລັບບໍລິສັດທີ່ປະຕິບັດຖືກຕ້ອງຕາມລະບຽບການ;

4) ເຄື່ອງມືໃນການຄຸ້ມຄອງວຽກງານຫຼັກຊັບ ໂດຍສະເພາະແມ່ນ ລະບົບໄອທີ, ບຸກຄະລາກອນທີ່ມີຄວາມຊຳນານງານສະເພາະດ້ານ ແລະ ບັນດານິຕິກຳລຸ່ມກົດໝາຍ ຍັງບໍ່ຄົບຖ້ວນ ແລະ ທັນສະໄໝ ເຮັດໃຫ້ການຄຸ້ມຄອງຕິດຕາມ ການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຍັງບໍ່ທັນຕໍ່ເນື່ອງ ແລະ ຄວບຄຸມທຸກບັນຫາ, ເມື່ອພົບເຫັນບັນຫາແລ້ວ ການຄົ້ນຄວ້າວິທີການແກ້ໄຂ ຍັງບໍ່ທັນສະພາບການ;

5) ລະບົບເຕັກໂນໂລຊີຂອງ ຕລຊລ ທີ່ນຳໃຊ້ໃນປັດຈຸບັນ ມີຂໍ້ຈຳກັດຫຼາຍດ້ານ ແລະ ຍັງບໍ່ມີສູນສຳຮອງຂໍ້ມູນ (DR Site), ຊ່ອງຫວ່າງ ລະຫວ່າງ ຄວາມສາມາດທາງດ້ານເຕັກນິກ ຂອງລະບົບດັ່ງກ່າວ ກັບຄວາມຮຽກຮ້ອງຕ້ອງການປັດຈຸບັນ ນັບມື້ນັບກວ້າງອອກເລື້ອຍໆ ເປັນຕົ້ນ: ຊ່ອງທາງການຊື້-ຂາຍຫຼັກຊັບ ຍັງບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງຜູ້ລົງທຶນ ເຊັ່ນ: ບໍ່ມີລະບົບສົ່ງຄຳສັ່ງຊື້-ຂາຍຜ່ານມືຖື (Mobile App) ແລະ Tablet, ການເປີດບັນຊີເງິນຝາກສຳລັບຜູ້ລົງທຶນຕ່າງປະເທດ ເພື່ອລົງທຶນໃນຫຼັກຊັບ ຍັງມີຂໍ້ຫຍຸ້ງຍາກ, ບໍ່ມີລະບົບເປີດບັນຊີຫຼັກຊັບແບບອອນລາຍ, ການແກ້ໄຂສະພາບຄ່ອງໃນການຊື້-ຂາຍຫຼັກຊັບ ຍັງບໍ່ທັນໄດ້ດີ ຍ້ອນຕະຫຼາດຍັງອ່ອນນ້ອຍ, ຂາດຜະລິດຕະພັນທີ່ຫຼາກຫຼາຍ ຊຶ່ງທັງໝົດນີ້ເຮັດໃຫ້ຜູ້ລົງທຶນ ແລະ ຜູ້ຕ້ອງການລະດົມທຶນຈາກທັງພາຍໃນ ແລະ ຕ່າງປະເທດ ບໍ່ທັນໃຫ້ຄວາມສົນໃຈຕໍ່ຕະຫຼາດຫຼັກຊັບ ເທົ່າທີ່ຄວນ, ເຄື່ອງມືຕິດຕາມການຊື້-ຂາຍຫຼັກຊັບທີ່ບໍ່ຍຸດຕິທຳ ຍັງບໍ່ເປັນລະບົບຄົບຊຸດ, ນິຕິກຳເພື່ອເປັນບ່ອນອີງເຄື່ອນໄຫວທຸລະກິດ ແລະ ຄຸ້ມຄອງສະມາຊິກຂອງຕົນ ຍັງບໍ່ສອດຄ່ອງກັບນິຕິກຳແມ່ ເຮັດໃຫ້ການເຄື່ອນໄຫວບາງຄັ້ງບໍ່ຄ່ອງຕົວ; ຄູ່ຮ່ວມທຶນ ຍັງຂາດຄວາມກະຕືລືລົ້ນໃນການພັດທະນາຕະຫຼາດທຶນລາວ;

6) ການເຄື່ອນໄຫວໃຫ້ບໍລິການຂອງສະຖາບັນສື່ກາງດ້ານຫຼັກຊັບຈຳນວນໜຶ່ງ ຍັງບໍ່ທັນປະຕິບັດບົດບາດຂອງຕົນຢ່າງເຕັມສ່ວນ ແລະ ເລິກເຊິ່ງເຖິງຖອງແທ້, ຄວາມສະດຸ້ງໄວໃນການນຳເອົາບົດຮຽນ ແລະ ປະສົບການຂອງຕ່າງປະເທດມາໝູນໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດຂອງຕົນຍັງບໍ່ທັນໄດ້ດີ, ຄຸນນະພາບການໃຫ້ບໍລິການຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;

7) ຖານຜູ້ລົງທຶນ ຍັງບໍ່ທັນກວ້າງຂວາງ ແລະ ຍັງບໍ່ເຄື່ອນໄຫວຊື້-ຂາຍຢ່າງຟົດຟື້ນ ໂດຍສະເພາະແມ່ນ ຜູ້ລົງທຶນປະເພດສະຖາບັນພາຍໃນປະເທດ. ສຳລັບຜູ້ລົງທຶນປະເພດບຸກຄົນ ສ່ວນໃຫຍ່ແມ່ນຊື້ຫຼັກຊັບໄວ້ເພື່ອຖືຄອງ

ໄລຍະຍາວ ເຮັດໃຫ້ການຊື້-ຂາຍຫຼັກຊັບໃນ ຕລຊລ ບໍ່ຄຶກຄື້ນເທົ່າທີ່ຄວນ. ການສ້າງສິ່ງອໍານວຍຄວາມສະດວກໃຫ້ແກ່ການຊື້-ຂາຍ ເພື່ອດຶງດູດຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ທັນໄດ້ຮັບການປະຕິບັດຢ່າງຕັ້ງໜ້າ. ການໂຄສະນາເຜີຍແຜ່ວຽກງານຫຼັກຊັບ ເຫັນວ່າ ການຄົ້ນຄິດປະດິດສ້າງດ້ານເນື້ອໃນ ແລະ ວິທີການໃໝ່ໆ ເພື່ອສ້າງຄວາມໜ້າສົນໃຈຕໍ່ກຸ່ມເປົ້າໝາຍ ໄດ້ຮັບການປັບປຸງ ແຕ່ຄວາມເຂົ້າໃຈກ່ຽວກັບວຽກງານຫຼັກຊັບ ຂອງສັງຄົມຍັງຈໍາກັດ. ການສ້າງຫຼັກສູດ ແລະ ການສ້າງນັກວິຊາຊີບທຸລະກິດຫຼັກຊັບປະເພດຕ່າງໆ ຍັງບໍ່ພຽງພໍກັບຄວາມຈໍາເປັນຕົວຈິງ.

# ພາກທີ III

# ຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໄສທັດ ຮອດປີ 2035

## I. ວິໄສທັດ ແລະ ທິດທາງລວມ

### 1. ວິໄສທັດຮອດປີ 2035

ວິໄສທັດ ກ່ຽວກັບການພັດທະນາຕະຫຼາດທຶນຮອດປີ 2035 ຂອງ ສປປ ລາວ ແມ່ນ: **"ຊ່ອງທາງລະດົມທຶນ ແລະ ລົງທຶນ ຢ່າງມືອາຊີບ, ໂປ່ງໃສ ແລະ ຍືນຍົງ"**

### 2. ທິດທາງລວມ

1) ອົງການຄຸ້ມຄອງວຽກງານຫຼັກຊັບ ມີຄວາມເຂັ້ມແຂງຮອບດ້ານ ຮັບປະກັນການຄຸ້ມຄອງວຽກງານຫຼັກຊັບຢ່າງມີປະສິດທິຜົນ; ເປີດກວ້າງການຮ່ວມມືແບບຫຼາຍທິດ ແລະ ຫຼາຍຝ່າຍ ເພື່ອເສີມຂະຫຍາຍການລະດົມທຶນ ແລະ ການລົງທຶນ ທັງຢູ່ຕະຫຼາດທຶນພາຍໃນ ແລະ ຕ່າງປະເທດ;
2) ລັດຖະບານ ມີນະໂຍບາຍອາກອນ ແລະ ບໍ່ແມ່ນອາກອນ ສໍາລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ; ທຸກຫົວໜ່ວຍວິສາຫະກິດ ປະຕິບັດລະບຽບການ ຢ່າງສະເໝີພາບກັນ;
3) ມີພື້ນຖານໂຄງລ່າງຕະຫຼາດທຶນ (ຕະຫຼາດຫຼັກຊັບ ແລະ ສະຖາບັນສື່ກາງດ້ານຫຼັກຊັບ) ທີ່ໄດ້ມາດຕະຖານ, ໄດ້ຮັບຄວາມເຊື່ອຖື ຈາກຜູ້ລະດົມທຶນ ແລະ ຜູ້ລົງທຶນ ແລະ ມີພື້ນຖານໃຫ້ແກ່ການເຊື່ອມໂຍງ ແລະ ເຊື່ອມຈອດກັບຕະຫຼາດທຶນພາກພື້ນ;
4) ຜະລິດຕະພັນຫຼັກຊັບ ທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ ມີຄວາມຫຼາກຫຼາຍ, ມີຄຸນນະພາບ ແລະ ມີຜົນຕອບແທນທີ່ເໝາະສົມ, ວິສາຫະກິດພາຍໃນປະເທດ ສາມາດລະດົມທຶນຈາກຕະຫຼາດຫຼັກຊັບ ພາຍໃນ ແລະ ຕ່າງປະເທດຢ່າງຄ່ອງຕົວ;
5) ຜູ້ລົງທຶນ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນ ຢ່າງກວ້າງຂວາງ ສາມາດປະກອບສ່ວນລົງທຶນໃນຫຼັກຊັບຢ່າງມືອາຊີບ, ນັກວິຊາຊີບທຸລະກິດຫຼັກຊັບ ມີຄວາມເຂັ້ມແຂງ ແລະ ມີຈັນຍາບັນສູງ ຕໍ່ວິຊາຊີບຂອງຕົນ.

## II. ສະຫຼຸບການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຕະຫຼາດທຶນ 10 ປີ (ປີ 2011-2020)

1) ມີຊ່ອງທາງໃໝ່ ໃນການລະດົມທຶນ ແລະ ການລົງທຶນ ຂອງພາກລັດ ແລະ ເອກະຊົນ ເຊິ່ງການເຂົ້າເຖິງແຫຼ່ງທຶນດັ່ງກ່າວ ໄດ້ຮັບການຄຸ້ມຄອງຢ່າງມີປະສິດທິຜົນ. ຮອດທ້າຍປີ 2020, ວິສາຫະກິດທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍການອອກຈໍາໜ່າຍຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ ຜ່ານຕະຫຼາດທຶນ ໄດ້ທັງໝົດ 23.018 ຕື້ກີບ ກວມເອົາ 14,03% ຂອງ GDP;
2) ບໍລິສັດຈົດທະບຽນ ມີວິໄນທາງດ້ານການເງິນຫຼາຍຂຶ້ນ, ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການກວດສອບບັນຊີຈາກຜູ້ກວດສອບຢ່າງເປັນປົກກະຕິ, ການຄຸ້ມຄອງບໍລິຫານ ໄດ້ຫັນເປັນມືອາຊີບຫຼາຍຂຶ້ນ

(CG) ເຊິ່ງທັງໝົດເຫຼົ່ານີ້ ໄດ້ຊ່ວຍຕິຖອຍການຣື່ອໄຫຼຂອງງົບປະມານລັດ. ພ້ອມນີ້, ຍັງເພີ່ມໂອກາດໃນການເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ສາມາດສ້າງເຄືອຂ່າຍທາງທຸລະກິດໄດ້ເພີ່ມຂຶ້ນ;

3) ລັດຖະບານ ມີລາຍຮັບຈາກການເກັບອາກອນເພີ່ມຂຶ້ນໃນແຕ່ລະປີ, ແຕ່ປີ 2011-2020 ລັດຖະບານສາມາດເກັບອາກອນຈາກບໍລິສັດຈົດທະບຽນ ໄດ້ທັງໝົດ 3.239,02 ຕື້ກີບ, ສະເພາະປີ 2020 ລັດຖະບານສາມາເກັບອາກອນຈາກບໍລິສັດຈົດທະບຽນ ທັງໝົດ 719 ຕື້ກີບ ເພີ່ມຂຶ້ນ 2,12 ເທົ່າຕົວ ເມື່ອທຽບກັບເກັບໄດ້ສະເລ່ຍຕໍ່ປີ ກ່ອນເຂົ້າຈົດທະບຽນ ເຊິ່ງມີພຽງແຕ່ປີລະປະມານ 230 ກວ່າຕື້ກີບ;

4) ໄດ້ມີດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ (ປີ 2010) ແລະ ຖືກຍົກຂຶ້ນມາເປັນກົດໝາຍວ່າດ້ວຍຫຼັກຊັບ ໃນປີ 2012 ແລະ ໄດ້ປັບປຸງຄືນ ໃນປີ 2019 ແລະ ໄດ້ສ້າງ ແລະ ປັບປຸງລະບຽບການໃຕ້ກົດໝາຍວ່າດ້ວຍຫຼັກຊັບ;

5) ມີກົງຈັກໃນການຄຸ້ມຄອງວຽກງານຫຼັກຊັບຢ່າງເປັນລະບົບ, ໄດ້ເປີດກວ້າງການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຊ່ວຍເຫຼືອດ້ານວິຊາການ;

6) ລັດຖະບານ ໄດ້ຫຼຸດອາກອນກຳໄລ ໃຫ້ແກ່ບໍລິສັດຈົດທະບຽນ 5% ເຫຼືອ 19% (ຈາກອັດຕາເດີມ 24%) ເປັນເວລາ 4 ປີຕໍ່ເນື່ອງ (ໃນປີ 2010) ແລະ ໄດ້ຫຼຸດເພີ່ມຕື່ມອີກ 7% ເຫຼືອ 13% (ຈາກອັດຕາເດີມ 20%) ເປັນເວລາ 4 ປີຕໍ່ເນື່ອງ ( ໃນປີ 2020). ສຳລັບຜູ້ລົງທຶນໃນຮຸ້ນ ລັດຖະບານ ໄດ້ຍົກເວັ້ນອາກອນກຳໄລຈາກການຊື້-ຂາຍຮຸ້ນ (Capital Gain Tax) ຈາກ 10% ເຫຼືອ 0% ແລະ ອາກອນເງິນປັນຜົນຈາກ 10% ເຫຼືອ 0% (ໃນປີ 2011) ເພື່ອດຶງດູດຜູ້ລະດົມທຶນ ແລະ ຜູ້ລົງທຶນໃນຕະຫຼາດທຶນ;

7) ຕລຊລ ໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງເປັນກ້າວໆ ໂດຍສະເພາະແມ່ນດ້ານ ບຸກຄະລາກອນ, ລະບົບໄອທີ, ກົນໄກການເຄື່ອນໄຫວທຸລະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຄຸ້ມຄອງສະມາຊິກ, ການຊື້-ຂາຍຫຼັກຊັບ ແລະ ການໃຫ້ບໍລິການຮັບຝາກຫຼັກຊັບ;

8) ສະຖາບັນສື່ກາງດ້ານຫຼັກຊັບ ໄດ້ຮັບການພັດທະນາ ແລະ ມີຄວາມຄົບຖ້ວນ ເພື່ອເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດຫຼັກຊັບ ເຊິ່ງປັດຈຸບັນມີທັງໝົດ 24 ແຫ່ງ;

9) ພະນັກງານໃນຂະແໜງຕະຫຼາດທຶນ ມີຄວາມຮູ້ ຄວາມສາມາດກ່ຽວກັບວຽກງານຕະຫຼາດທຶນ, ນັກວິຊາຊີບທຸລະກິດຫຼັກຊັບ ມີຈຳນວນທີ່ເໝາະສົມ ແລະ ໄດ້ຮັບການຝຶກອົບຮົມດ້ານວິຊາຊີບທຸລະກິດຫຼັກຊັບ ຢ່າງຕໍ່ເນື່ອງ ແລະ ມີຈັນຍາບັນ ໃນການໃຫ້ການບໍລິການໂດຍພື້ນຖານ, ໄດ້ມີຊ່ອງທາງໃນການໂຄສະນາເຜີຍແຜ່ວຽກງານຫຼັກຊັບ ທີ່ຫຼາກຫຼາຍ ເຮັດໃຫ້ມວນຊົນໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຕະຫຼາດທຶນຫຼາຍຂຶ້ນ ແລະ ໄດ້ປະກອບສ່ວນຊື້-ຂາຍຫຼັກຊັບ ຕາມຄວາມສາມາດດ້ານການເງິນຂອງຕົນ;

10) ນອກຈາກນີ້, ຂະແໜງຕະຫຼາດທຶນ ໄດ້ປະກອບສ່ວນເຂົ້າໃນວຽກງານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໂດຍໄດ້ຕິດຕາມກວດກາຜ່ານກົນໄກການຊອກຮູ້ລູກຄ້າ (KYC ແລະ CDD) ຢ່າງເຄັ່ງຄັດ ຕໍ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນຢູ່ຕະຫຼາດທຶນລາວ.

ຜ່ານການຜັນຂະຫຍາຍແຜນຍຸດທະສາດຄືດັ່ງກ່າວ, ຄຄຊ ໄດ້ເອົາໃຈໃສ່ ຊີ້ນໍາ-ນໍາພາຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການດໍາເນີນງານ 5 ປີ (2016-2020) ຊຶ່ງສະແດງອອກຄື: ໃນໄລຍະ 5 ປີຜ່ານມາ (2016-2020) ການຈັດຕັ້ງປະຕິບັດ 12 ແຜນງານ ແລະ 38 ໂຄງການ ສາມາດບັນລຸໄດ້ ຫຼາຍກວ່າ 90% ຂອງແຜນງານ-ໂຄງການທັງໝົດ.

## III. ແຜນຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030)

ໃນໄລຍະ 10 ປີຕໍ່ໜ້າ (2021-2030), ເພື່ອສືບຕໍ່ຊີ້ນໍາ-ນໍາພາຂະແໜງຕະຫຼາດທຶນ ໃຫ້ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເຂັ້ມແຂງ ຕາມວິໄສທັດ 2035 ທີ່ໄດ້ວາງໄວ້, ຄຄຊ ຕ້ອງໄດ້ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດແຜນງານ, ໂຄງການ ແລະ ແຜນວຽກຈັດຕັ້ງປະຕິບັດ ໄລຍະ 5 ປີ (2021-2025) ໃຫ້ເປັນຮູບປະທໍາ ເຊິ່ງແຜນງານໂຄງການດັ່ງກ່າວ ປະກອບມີ V ແຜນງານ 10 ໂຄງການ 42 ແຜນວຽກ ຄື:

- ແຜນງານທີ I: ສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ ( 3 ໂຄງການ )
- ແຜນງານທີ II: ສ້າງ ແລະ ປັບປຸງນິຕິກໍາ ແລະ ນະໂຍບາຍມະຫາພາກກ່ຽວກັບວຽກງານຫຼັກຊັບ (1 ໂຄງການ )
- ແຜນງານທີ III: ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ ( 2 ໂຄງການ )
- ແຜນງານທີ IV: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ ( 2 ໂຄງການ )
- ແຜນງານທີ V: ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ( 2 ໂຄງການ )

## IV. ແຜນພັດທະນາຂອງ ຕລຊລ

1) ສືບຕໍ່ຈັດຕັ້ງປະຕິບັດແຜນການແກ້ໄຂສະພາບຄ່ອງຂອງ ຕລຊລ ໃຫ້ມີທ່າກ້າວທີ່ດີຂຶ້ນເລື້ອຍໆ ເປັນຕົ້ນແມ່ນ: ການປັບປຸງຂໍ້ມູນຜະລິດຕະພັນຫຼັກຊັບ ໂດຍອີງພາລະບົດບາດຂອງ ຕລຊລ ໃນກົດໝາຍຫຼັກຊັບ ແລະ ລະບຽບຄຸ້ມຄອງຕະຫຼາດຫຼັກຊັບ;
2) ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າກົນໄກການຊື້-ຂາຍໜ່ວຍລົງທຶນ; ຄົ້ນຄວ້າການພັດທະນາລະບົບການຊື້-ຂາຍຫຼັກຊັບ ຜ່ານ ມືຖື ແລະ ປັບປຸງລະບົບແລກປ່ຽນຊື້-ຂາຍພັນທະບັດລັດຖະບານ;
3) ຊຸກຍູ້ ແລະ ປະສານສົມທົບກັບບັນດາບໍລິສັດຈົດທະບຽນ ເພື່ອຮັບປະກັນໃຫ້ມີຜົນການດໍາເນີນງານທີ່ດີ ແລະ ມີຜົນຕອບແທນທີ່ໜ້າສົນໃຈໃຫ້ແກ່ຜູ້ລົງທຶນໃນຕະຫຼາດທຶນລາວ;
4) ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ ປັບປຸງ-ແກ້ໄຂ ລະບົບໄອທີຂອງ ຕລຊລ;
5) ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງໃນຕະຫຼາດທຶນ ເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ ກວ້າງຂວາງຍິ່ງຂຶ້ນ.

## V. ແຜນພັດທະນາຂອງ ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ສະຖາບັນສື່ກາງດ້ານຫຼັກຊັບອື່ນ

### ❖ ບໍລິສັດຈົດທະບຽນ

ສ້າງຄວາມເຂັ້ມແຂງໃຫ້ບໍລິສັດຈົດທະບຽນ ດ້ວຍການ:

1) ສ້າງແຜນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS);
2) ປັບປຸງການຄຸ້ມຄອງບໍລິຫານ Corporate Governance: CG ໃຫ້ສອດຄ່ອງກັບຄໍາແນະນໍາ ແລະ ວິທີການປະເມີນ ທີ່ ຄຄຊ ກໍານົດອອກໃນແຕ່ລະໄລຍະ;
3) ປັບປຸງການເຄື່ອນໄຫວທຸລະກິດ ໃຫ້ມີຄວາມເຂັ້ມແຂງ ຕີຖອຍການຂາດທຶນ ແລະ ກ້າວໄປເຖິງການສ້າງຜົນຕອບແທນໃຫ້ແກ່ຜູ້ຖືຮຸ້ນ;
4) ເປີດເຜີຍຂໍ້ມູນຕາມລະບຽບການເປີດເຜີຍຂໍ້ມູນຂອງ ຕລຊລ ໂດຍຂໍ້ມູນທີ່ຈະເປີດເຜີຍຕ້ອງມີຄວາມຖືກຕ້ອງ, ຄົບຖ້ວນ, ພຽງພໍ ແລະ ເຊື່ອຖືໄດ້ ເພື່ອຜູ້ລົງທຶນສາມາດໝູນໃຊ້ຂໍ້ມູນດັ່ງກ່າວໄດ້;
5) ກະກຽມຄວາມພ້ອມໃນການອອກຜະລິດຕະພັນໃໝ່ ເປັນຕົ້ນແມ່ນ: ໃບສະແດງສິດໃນການຊື້ຮຸ້ນ (DR), Corporate Bond ແລະ ອື່ນໆ;
6) ປະກອບສ່ວນຢ່າງຫ້າວຫັນ ເຂົ້າໃນກິດຈະກໍາສົ່ງເສີມຄວາມຮູ້ດ້ານຕະຫຼາດທຶນ ຮ່ວມກັບ ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ.

### ❖ ບໍລິສັດຫຼັກຊັບ

1) ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການເພື່ອຮອງຮັບການເຄື່ອນໄຫວຂອງບໍລິສັດຫຼັກຊັບໃຫ້ມີຄວາມຄ່ອງຕົວ;
2) ຄົ້ນຄວ້າປັບປຸງ ແລະ ພັດທະນາ ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ ໃຫ້ເປັນລະບົບຄົບຊຸດ ເພື່ອຮອງຮັບການຊື້-ຂາຍຫຼັກຊັບ ແລະ ຮັບປະກັນການເຄື່ອນໄຫວຢ່າງຕໍ່ເນື່ອງ;
3) ປະເມີນຄວາມສ່ຽງຂອງຕົນຕາມຫຼັກການ RBA;
4) ກະກຽມຄວາມພ້ອມ ເພື່ອໃຫ້ບໍລິການສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading) ຫຼື ຢືມຫຼັກຊັບເພື່ອຂາຍ (Short Sale) ແລະ ອື່ນໆ;
5) ຄົ້ນຄວ້າເງື່ອນໄຂ ແລະ ກະກຽມຄວາມພ້ອມ ໃນການເຂົ້າເປັນສະມາຊິກຂອງ ASEAN Broker Link.
6) ອອກແຮງຂົນຂວາຍຫົວໜ່ວຍທຸລະກິດ ທີ່ມີທ່າແຮງບົ່ມຊ້ອນ ແລະ ມີຄວາມຕ້ອງການທຶນຜ່ານຕະຫຼາດທຶນເພື່ອຂະຫຍາຍທຸລະກິດ ໂດຍສະເພາະແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ອັນທີ່ຕິດພັນກັບຂະແໜງທີ່ເປັນທ່າແຮງ ແລະ ເປັນເປົ້າໝາຍບຸລິມະສິດພັດທະນາເສດຖະກິດຂອງລັດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ ຕາມທິດພັດທະນາແບບຍືນຍົງ ແລະ ສີຂຽວ. ກໍລະນີເຫັນວ່າຫົວໜ່ວຍທຸລະກິດໃດ ຍັງບໍ່ມີຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ຕ້ອງເຂົ້າໄປມີສ່ວນຮ່ວມໃຫ້ຄໍາປຶກສາ ເພື່ອແກ້ໄຂບັນຫາໃນເວລາອັນຄວນ;
7) ສູ້ຊົນໃຫ້ໄດ້ສ້າງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ແລະ ກອງທຶນຮ່ວມ ເພື່ອເພີ່ມຜະລິດຕະພັນ ແລະ ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຂັ້ນສອງ, ສຶກສາແນວທາງໃນການອອກຜະລິດຕະພັນໃໝ່ ໃຫ້ຫຼາກຫຼາຍສໍາລັບ ຕລຊລ ເພື່ອເປັນທາງເລືອກແກ່ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍົກບົດບາດຕະຫຼາດທຶນລາວຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ;

8) ສືບຕໍ່ເຜີຍແຜ່ຄວາມຮູ້ ໃນຫົວຂໍ້ຕ່າງໆກ່ຽວກັບຕະຫຼາດທຶນ ໃຫ້ມວນຊົນທົ່ວໄປ ທັງຢູ່ພາຍໃນນະຄອນຫຼວງ ແລະ ຢູ່ຕ່າງແຂວງຢ່າງມີຈຸດສຸມ ໂດຍຜ່ານ ໜັງສືພິມ, ວາລະສານ, ວິທະຍຸ ຫຼື ສື່ອື່ນໆ ຕາມຄວາມເໝາະສົມ;

9) ພັດທະນາບຸກຄະລາກອນຂອງບໍລິສັດຫຼັກຊັບ ດ້ວຍການສົ່ງເຂົ້າຝຶກອົບຮົມໃນຫົວຂໍ້ຕ່າງໆເຊັ່ນ: ຄວາມຮູ້ພື້ນຖານທາງດ້ານຕະຫຼາດເງິນ-ຕະຫຼາດທຶນ, ການບັນຊີ ແລະ ສົ່ງເຂົ້າຮຽນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບປະເພດນາຍໜ້າຊື້-ຂາຍຫຼັກຊັບ, ທີ່ປຶກສາທາງດ້ານການເງິນ, ນັກວິເຄາະ, ທີ່ປຶກສາດ້ານການລົງທຶນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ ແລະ ຫົວຂໍ້ອື່ນໆ ເພື່ອຍົກສູງຄວາມຮູ້ຄວາມສາມາດດ້ານວິຊາການຕະຫຼາດທຶນ ໃຫ້ເຂັ້ມແຂງ ຮັບປະກັນການປະຕິບັດໜ້າທີ່ຢ່າງມືອາຊີບ ແລະ ມີຈັນຍາບັນ.

❖ **ສະຖາບັນສື່ກາງດ້ານຫຼັກຊັບອື່ນ**

1) ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບການເພື່ອຮອງຮັບການເຄື່ອນໄຫວຂອງຕົນໃຫ້ມີຄວາມຄ່ອງຕົວ;

2) ຄົ້ນຄວ້າປັບປຸງ ແລະ ພັດທະນາ ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ ໃຫ້ເປັນລະບົບຄົບຊຸດ ເພື່ອຮອງຮັບການຊື້-ຂາຍຫຼັກຊັບ ແລະ ຮັບປະກັນການເຄື່ອນໄຫວຢ່າງຕໍ່ເນື່ອງ;

3) ສູ້ຊົນສ້າງພະນັກງານຂອງຕົນໃຫ້ເປັນມືອາຊີບຫຼາຍຂຶ້ນ.

# ພາກທີ IV

# ພິທີສະຫຼຸບຜົນງານ ຂອງຕະຫຼາດທຶນລາວ ຄົບຮອບ 10 ປີ (2010-2020)

## I. ວາລະດຳເນີນພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ

| ເວລາ | ເນື້ອໃນ | ຜູ້ຮັບຜິດຊອບ |
|---|---|---|
| 07:00-08:00 ໂມງ | - ລົງທະບຽນ | ຄະນະຮັບຜິດຊອບ |
| 08:00-08:30 ໂມງ | - ເຊີນແຂກເຂົ້າປະຈຳທີ່<br>- ຊົມພາບວີດີໂອການເຄື່ອນໄຫວວຽກງານຕະຫຼາດທຶນ 10 ປີ | ທ່ານ ປອ. ສຸດທິເດດ ບຸນລືໄຊ, ຮອງຜູ້ອຳນວຍການບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ |
| | - ຊົມການສະແດງສິນລະປະ (ບົດຟ້ອນ ແລະ ບົດຮ້ອງ) | ກອງສິນລະປະກອນກອງທັບ |
| 08:30-09:00 ໂມງ | - ກ່າວຈຸດປະສົງ ແລະ ສະເໜີແຂກເຂົ້າຮ່ວມ | ທ່ານ ປອ. ສຸດທິເດດ ບຸນລືໄຊ, ຮອງຜູ້ອຳນວຍການບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ |
| | - ລາຍງານໂດຍສັງເຂບ ຜົນງານການເຄື່ອນໄຫວ 10 ປີ ຕະຫຼາດທຶນລາວ | ທ່ານ ນ. ສາຍສະໝອນ ຈັນທະຈັກ, ຫົວໜ້າ ສຄຄຊ |
| 09:00-09:10 ໂມງ | - ລາຍງານກ່ຽວກັບແຜນ 5 ປີ ຕໍ່ໜ້າ ຂອງຕະຫຼາດຫຼັກຊັບລາວ | ທ່ານ ອ໊ອດ ພົນຊຽງດີ, ຜູ້ອຳນວຍການຕະຫຼາດຫຼັກຊັບລາວ |
| 09:10-10:00 ໂມງ | - ອ່ານຂໍ້ຕົກລົງຍ້ອງຍໍຂອງຂັ້ນເທິງ | ຕາງໜ້າກົມຈັດຕັ້ງ ແລະ ພະນັກງານ ທຫລ |
| | - ມອບໃບຍ້ອງຍໍໃຫ້ແກ່: ສຄຄຊ, ຕະຫຼາດຫຼັກຊັບ ສ. ເກົາຫຼີ, ຕລຊລ | ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຄຊ |
| | - ມອບໃບຍ້ອງຍໍໃຫ້ແກ່: ບຸກຄົນ ແລະ ການຈັດຕັ້ງ | ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ |
| | - ມອບໃບຊົມເຊີຍໃຫ້ແກ່: ບຸກຄົນ ແລະ ການຈັດຕັ້ງ | ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ, ຄະນະ ຄຄຊ |
| | - ມອບໂລ້ທີ່ລະນຶກໃຫ້ແກ່: ການຈັດຕັ້ງ | ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າ ສຄຄຊ |
| 10:00-10:10 ໂມງ | ຕາງໜ້າ ຂາຮຸ້ນຂອງ ຕະຫຼາດຫຼັກຊັບລາວ (ຝ່າຍລາວ) ມີຄຳເຫັນ | ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ |
| 10:10-10:20 ໂມງ | ຕາງໜ້າ ຂາຮຸ້ນຂອງ ຕະຫຼາດຫຼັກຊັບລາວ (ຝ່າຍ ສ.ເກົາຫຼີ) ມີຄຳເຫັນ | ຕາງໜ້າ ຕະຫຼາດຫຼັກຊັບ ສ. ເກົາຫຼີ (ຜ່ານວີດີໂອ) |
| 10:20-10:30 ໂມງ | ຕາງໜ້າ ສະຖານທູດ ສ. ເກົາຫຼີ ປະຈຳ ສປປ ລາວ ມີຄຳເຫັນ | ຕາງໜ້າສະຖານທູດ ສ. ເກົາຫຼີ ປະຈຳ ສປປ ລາວ |

| | | |
|---|---|---|
| 10:30-11:00 ໂມງ | ຂັ້ນເທິງມີຄຳເຫັນໂອ້ລົມ | ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຄຊ |
| 11:00-11:30 ໂມງ | - ຂອບໃຈແຂກ ແລະ ຜູ້ເຂົ້າຮ່ວມ<br>- ຖ່າຍຮູບລວມ:<br>• ປະທານ, ຄະນະຜູ້ວ່າການ, ຄະນະ ຄຄຊ ແລະ ຄະນະສ້າງຕັ້ງຕະຫຼາດຫຼັກຊັບລາວ<br>• ປະທານ ແລະ ແຂກເຂົ້າຮ່ວມພິທີທັງໝົດ | ທ່ານ ປອ. ສຸດທິເດດ ບຸນສີໄຊ, ຮອງຜູ້ອຳນວຍການບໍລິສັດຫຼັກຊັບລາວ-ຈີນ ຈຳກັດ |
| 11:30-12:00 ໂມງ | ຢ້ຽມຊົມການວາງສະແດງຜົນງານ 10 ປີ ຕະຫຼາດທຶນລາວ | ຄະນະຮັບຜິດຊອບການວາງສະແດງ |
| 12:00 -13:30ໂມງ | ຮັບປະທານອາຫານທ່ຽງ ທີ່ ໂຮງແຮມດອນຈັນພາເລດ | - ແຂກເຂົ້າຮ່ວມທັງໝົດ<br>- ຄະນະຮັບຜິດຊອບ |

**II. ບົດດຳເນີນວາລະພິທີ**

# ບົດພິທີກອນ

## ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ

## ວັນທີ 30 ຕຸລາ 2020, ທີ່ໂຮງແຮມ ດອນຈັນພາເລດ

- ສະບາຍດີບັນດາທ່ານ ການນຳພັກ-ລັດ ແລະ ບັນດາທ່ານ ແຂກທີ່ມີກຽດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;
- ກ່ອນຈະກ້າວເຂົ້າສູ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວຢ່າງເປັນທາງການ, ຂ້າພະເຈົ້າ ຂໍຖືເປັນກຽດຢ່າງສູງ ຮຽນເຊີນບັນດາທ່ານ ຮັບຊົມວິດີໂອ "10 ປີແຫ່ງການກຳເນີດ ແລະ ການເຕີບໃຫຍ່ຂອງຕະຫຼາດທຶນລາວ". ຫຼັງຈາກນັ້ນ, ຂໍຮຽນເຊີນບັນດາທ່ານຮັບຊົມການສະແດງສິນລະປະ ເຊິ່ງລວມມີ 2 ລາຍການ ຄື: ລາຍການທີ 1 ແມ່ນບົດຟ້ອນອວຍພອນ; ລາຍການທີ 2 ແມ່ນ ບົດເພງທີ່ມີຊື່ວ່າ "ທາງດ່ວນເງິນທຶນ" ເຊິ່ງນຳສະແດງໂດຍ ກອງສິລະປະກອນກອງທັບ;
- ຕໍ່ໄປ ຂໍຮຽນເຊີນບັນດາທ່ານຮັບຊົມ ແລະ ຮັບຟັງໄດ້ ຂໍຮຽນເຊີນ;

---

**ຮຽນ:** - ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ການເງິນ, ປະທານ ຄະນະກຳມະການຄຸ້ມຄອງຫລັກຊັບ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,

- ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຮອງປະທານ ຄະນະກຳມະການຄຸ້ມຄອງຫລັກຊັບ ຜູ້ປະຈຳການ ທີ່ເຄົາລົບ ແລະ ນັບຖື,
- ທ່ານ ຮອງລັດຖະມົນຕີ ແລະ ອາດີດຮອງລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖື;
- ທ່ານ ເອກອັກຄະລັດຖະທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ທີ່ເຄົາລົບ ແລະ ນັບຖື;
- ບັນດາທ່ານ ຄະນະກົມ, ຄະນະອຳນວຍການຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສະມາຊິກພັກ, ພະນັກງານຂອງຂະແໜງການຕະຫຼາດທຶນ ທີ່ນັບຖື;
- ບັນດາທ່ານ ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ ກຳລັງຊຸ່ມຊ່ຽວຈັດຕັ້ງປະຕິບັດກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ກໍ່ຄືການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ຄັ້ງທີ VIII ໄລຍະທ້າຍສະໄໝ, ສະເພາະຂະແໜງຕະຫຼາດທຶນ ກໍ່ພວມຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV. ມື້ນີ້, ສະມາຊິກພັກ-ພະນັກງານທົ່ວຂະແໜງຕະຫຼາດທຶນ ຮູ້ສຶກປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ມາເຕົ້າໂຮມກັນຢູ່ສະຖານທີ່ອັນສວຍງາມແຫ່ງນີ້ ເພື່ອເຂົ້າຮ່ວມພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ຄື: ວັນທີ 10 ເດືອນ 10 ປີ 2010 ຫາວັນທີ 10 ເດືອນ 10 ປີ 2020 ແລະ ພິທີຈັດຕັ້ງການຍ້ອງຍໍຜົນງານຂອງບຸກຄົນ ແລະ ກົມກອງລວມໝູ່ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ.

ໃນພິທີຂອງພວກເຮົາໃນມື້ນີ້, ໄດ້ມີການນຳຂັ້ນສູງ ພັກ-ລັດ, ຕາງໜ້າບັນດາກະຊວງ, ອາດີດການນຳ, ພະນັກງານບຳນານ, ເອກອັກຄະລັດຖະທູດ ສ.ເກົາຫຼີ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ,

ພະນັກງານຫຼັກແຫຼ່ງນຳພາຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນເຂົ້າຮ່ວມ ປະມານ 170 ທ່ານ.

ເພື່ອກະກຽມແກ່ວັນທີ່ມີຄວາມໝາຍສຳຄັນເປັນພິເສດນີ້, ພວກເຮົາໄດ້ມີການທ້າງຫາກະກຽມຄວາມພ້ອມຮອບດ້ານ, ສ້າງຂະບວນການທາງດ້ານວິຊາສະເພາະ ຕິດພັນກັບວຽກງານຕະຫຼາດທຶນ, ສ້າງຟິມວິດີໂອ, ກະກຽມສ້າງປື້ມ 10 ປີແຫ່ງການກຳເນີດ ແລະ ການເຕີບໃຫຍ່ຂອງຕະຫຼາດທຶນລາວ, ຈັດງານວາງສະແດງຜົນງານ 10 ປີຕະຫຼາດທຶນລາວ ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 27 ພາກສ່ວນ, ຂະບວນການກິລາ, ການຈັດສຳມະນາແບບຖາມ-ຕອບ, ການຫຼິ້ນເກມຕອບຄຳຖາມ ແລະ ອື່ນໆ ເຊິ່ງໄດ້ສຳເລັດຢ່າງຈົບງາມ ເຮັດໃຫ້ພວກເຮົາສາມາດເປີດພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວໃນມື້ນີ້.

ໃນພິທີທີ່ເຕັມໄປດ້ວຍຄວາມໝາຍສຳຄັນນີ້, ພວກເຮົາຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຕ້ອນຮັບ:

- ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ການເງິນ, ປະທານ ຄະນະກຳມະການຄຸ້ມຄອງຫລັກຊັບ ທີ່ໄດ້ສະຫຼະເວລາອັນມີຄ່າ ມາຮ່ວມໃນພິທີຂອງພວກເຮົາໃນຄັ້ງນີ້, ອັນໄດ້ເຮັດໃຫ້ພິທີເຕັມໄປດ້ວຍຄວາມໝາຍ ຄວາມສຳຄັນເປັນຢ່າງຍິ່ງ (ຂໍສະແດງຄວາມຊົມເຊີຍຢ່າງສຸດໃຈ);
- ຂໍສະແດງຄວາມຕ້ອນຮັບ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຮອງປະທານຄະນະກຳມະການຄຸ້ມຄອງຫລັກຊັບ ຜູ້ປະຈຳການ ທີ່ໄດ້ໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້ (ຂໍຊົມເຊີຍ);
- ຂໍສະແດງຄວາມຕ້ອນຮັບບັນດາທ່ານ ຮອງລັດຖະມົນຕີ, ອາດີດຮອງລັດຖະມົນຕີ, ທ່ານ ເອກອັກຄະລັດຖະທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ, ບັນດາທ່ານ ຄະນະກົມ, ຄະນະອຳນວຍການຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສະມາຊິກພັກ, ພະນັກງານຂອງຂະແໜງການຕະຫຼາດທຶນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມງານໃນມື້ນີ້ (ຂໍຊົມເຊີຍ).

---

**ບັນດາທ່ານ ທີ່ນັບຖື,**

ເພື່ອເຮັດໃຫ້ບັນດາທ່ານ ການນຳພັກ-ລັດ ແລະ ບັນດາທ່ານແຂກທີ່ມີກຽດ ກໍ່ໄດ້ເຖິງຂະບວນວິວັດແຫ່ງການກຳເນີດ ແລະ ການເຕີບໃຫຍ່ຂອງຕະຫຼາດທຶນລາວ ໃນ 10 ປີ ທີ່ຜ່ານມາ, ອັນດັບຕໍ່ໄປ ຂ້າພະເຈົ້າຂໍຮຽນເຊີນທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລຂາຄະນະກຳມະການຄຸ້ມຄອງຫຼັກຊັບ ຂຶ້ນລາຍງານຜົນງານການເຄື່ອນໄຫວ 10 ປີ ຕະຫຼາດທຶນລາວ ຕໍ່ທີ່ປະຊຸມ ຂໍຮຽນເຊີນ.

---

**ຮຽນທີ່ປະຊຸມ,**

ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາຕະຫຼາດຫຼັກຊັບລາວ ໃນຊຸມປີຕໍ່ໜ້າ, ອັນດັບຕໍ່ໄປ ຂ້າພະເຈົ້າຂໍຮຽນເຊີນ ທ່ານ ອ໊ອດ ພົນຊຽງດີ, ກຳມະການສະພາບໍລິຫານ ແລະ ຜູ້ອຳນວຍການຕະຫຼາດຫຼັກຊັບລາວ ຂຶ້ນລາຍງານກ່ຽວກັບແຜນ 5 ປີ ຕໍ່ໜ້າຂອງ ຕະຫຼາດຫຼັກຊັບລາວ ຂໍຮຽນເຊີນ.

---

**ບັນດາທ່ານແຂກທີ່ມີກຽດທີ່ນັບຖື,**

ນັບແຕ່ປີ 2010 ມາຮອດປັດຈຸບັນ ຕະຫຼາດທຶນລາວ ມີອາຍຸຄົບ 10 ປີ ພໍດີ ເຊິ່ງເຕັມໄປດ້ວຍສິ່ງທ້າທາຍ ແລະ ທົດສອບນານາປະການ. ແຕ່ພາຍໃຕ້ການຊີ້ນໍາ-ນໍາພາ ຢ່າງໃກ້ສິດ ຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ໂດຍ ມີການນໍາແຕ່ລະຮຸ່ນ ໄດ້ມີຜົນງານປະກອບສ່ວນຈຶ່ງເຮັດໃຫ້ມີຜົນສໍາເລັດ ໃນທຸກວັນນີ້. ສະມາຊິກພັກ-ພະນັກງານ ຂອງຂະແໜງຕະຫຼາດທຶນ ໄດ້ຕັ້ງໜ້າເອົາໃຈໃສ່ເຮັດໜ້າທີ່ການເມືອງຂອງຕົນ ຢ່າງມີຜົນສໍາເລັດສະຫງ່າງາມ. 10 ປີ ທີ່ຜ່ານມາ ແມ່ນໝາກຜົນອັນລວມຍອດແຫ່ງຄວາມສໍາເລັດ, ແຫ່ງການພັດທະນາ ແລະ ເຕີບໃຫຍ່ຂະຫຍາຍຕົວ ຢ່າງຮອບດ້ານ ແລະ ດ້ວຍບາດກ້າວທີ່ໜັກແໜ້ນ ບົນພື້ນຖານເງື່ອນໄຂພາຍໃນປະເທດຂອງຂະ ແໜງຕະຫຼາດທຶນລາວຂອງພວກເຮົາ.

ດັ່ງນັ້ນ, ໃນໂອກາດທີ່ມີຄວາມໝາຍສໍາຄັນນີ້ ຄະນະກໍາມະການຄຸ້ມຄອງຫຼັກຊັບ ຈຶ່ງໄດ້ຕົກລົງຍ້ອງຍໍ 10 ປີ ໃຫ້ແກ່ບຸກຄົນ ແລະ ກົມກອງລວມໝູ່ ຢູ່ຂະແໜງຕະຫຼາດທຶນຢ່າງສົມກຽດ. ຕໍ່ໄປ ຂ້າພະເຈົ້າ ຂໍຮຽນເຊີນ ທ່ານ ເສີມທະວີ ສີຫາຟົນ, ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານທະນາຄານແຫ່ງ ສປປ ລາວ ຂຶ້ນອ່ານຂໍ້ຕົກລົງຂອງ ຂັ້ນເທິງ ໃນການຍ້ອງຍໍບຸກຄົນ ແລະ ກົມກອງລວມໝູ່ ໃນຄັ້ງນີ້ ຂໍຮຽນເຊີນ.

(ລາຍລະອຽດ ບົດພິທີກອນ ສໍາລັບວາລະການຍ້ອງຍໍ ຢູ່ໃນບົດຕ່າງຫາກ)

---

ລໍາດັບຕໍ່ໄປ, ຂ້າພະເຈົ້າ ຂໍຖືເປັນກຽດຮຽນເຊີນ ***ທ່ານ ສອນໄຊ ສິດພະໄຊ,*** ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ຮອງປະທານ ຄະນະກໍາມະການຄຸ້ມຄອງຫລັກຊັບຜູ້ປະຈໍາການ, ຕາງໜ້າໃຫ້ຂາຮຸ້ນຂອງຕະຫຼາດຫຼັກຊັບ ລາວ (ຝ່າຍລາວ) ຂຶ້ນກ່າວມີຄໍາເຫັນຕໍ່ພິທີໃນຄັ້ງນີ້.

(ຂໍຮຽນເຊີນ)

---

ໃນວາລະຕໍ່ໄປ, ຂໍອະນຸຍາດຮຽນເຊີນທ່ານ ຮັບຊົມວີດີໂອຄໍາເຫັນຂອງ ທ່ານ ຜູ້ຕາງໜ້າຂາຮຸ້ນຈາກຕະຫຼາດ ຫຼັກຊັບ ສ.ເກົາຫຼີ (ຂໍຮຽນເຊີນ)

---

ໃນວາລະຕໍ່ໄປ, ຂໍອະນຸຍາດຮຽນເຊີນ ທ່ານ SHIN Sung-soon, ເອກອັກຄະລັດຖະທູດຜູ້ມີອໍານາດ ເຕັມແຫ່ງ ສ. ເກົາຫຼີ ປະຈໍາ ສປປ ລາວ ຂຶ້ນກ່າວມີຄໍາເຫັນຕໍ່ພິທີ. (ຂໍຮຽນເຊີນ)

---

**ຮຽນທີ່ປະຊຸມ,**

ເພື່ອເຮັດໃຫ້ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ມີຄວາມໝາຍທີ່ໜັກແໜ້ນເລິກເຊິ່ງຍິ່ງຂຶ້ນ ແລະ ເປັນທິດທາງກ້າວເດີນໃນການເຄື່ອນໄຫວ ຂອງຂະແໜງຕະຫຼາດທຶນ ໃນຊຸມປີຕໍ່ໜ້າ, ອັນດັບຕໍ່ໄປ ຂ້າພະເຈົ້າ ຂໍຖື

ເປັນກຽດຢ່າງສູງຮຽນເຊີນ **ທ່ານ ສົມດີ ດວງດີ,** ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫລັກຊັບ ໃຫ້ກຽດມີຄຳເຫັນໂອ້ລົມ ຕໍ່ພິທີໃນຄັ້ງນີ້ (ຂໍອະນຸຍາດຮຽນເຊີນ)

---

**ບັນດາທ່ານ ທີ່ນັບຖື,**

ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ໃນມື້ນີ້ ໄດ້ຈັດຂຶ້ນຢ່າງສົມກຽດ. ມາຮອດເວລານີ້ ພິທີໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ. ຕາງໜ້າຄະນະຈັດຕັ້ງພິທີ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງ ຕໍ່ທ່ານ ຮອງນາຍົກລັດຖະມົນຕີ ທີ່ໄດ້ໃຫ້ກຽດເຂົ້າຮ່ວມພິທີ ແລະ ມອບໃບຍ້ອງຍໍໃຫ້ແກ່ກົມກອງລວມໝູ່ ພ້ອມທັງ ໃຫ້ກຽດໂອ້ລົມຕໍ່ພິທີຂອງພວກເຮົາໃນຄັ້ງນີ້, ຂໍອວຍພອນແດ່ທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຜົນສຳເລັດຍິ່ງໃຫຍ່ໃນການຊີ້ນຳ-ນຳພາປະເທດຊາດ ກໍ່ຄືຂະແໜງຕະຫຼາດທຶນພວກເຮົາ ກ້າວຂຶ້ນຢ່າງມີໄຊ.

ຂໍສະແດງຄວາມຂອບໃຈຢ່າງສູງ ຕໍ່ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ຂໍອວຍພອນໃຫ້ທ່ານຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສຳເລັດຕໍ່ການຊີ້ນຳ-ນຳພາຕະຫຼາດການເງິນ ດ້ວຍບາດກ້າວທີ່ໜັກແໜ້ນ, ເຂັ້ມແຂງ.

ຂໍສະແດງຄວາມຂອບໃຈຢ່າງສູງ ຕໍ່ທ່ານ ຮອງລັດຖະມົນຕີ, ອາດີດຮອງລັດຖະມົນຕີ,ທ່ານ ເອກອັກຄະລັດຖະທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ, ບັນດາທ່ານການນຳຮຸ່ນກໍ່ຕັ້ງ, ພະນັກງານຫຼັກແຫຼ່ງນຳພາ, ຄະນະກົມ, ຄະນະອຳນວຍການຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສະມາຊິກພັກ-ພະນັກງານຂອງຂະແໜງການຕະຫຼາດທຶນທັງໝົດ, ຂໍອວຍພອນໄຊໃຫ້ບັນດາທ່ານ ຈົ່ງມີພາລະນາໄມທີ່ສົມບູນ, ປະສົບຜົນສຳເລັດໃນໜ້າທີ່ວຽກງານທີ່ຍິ່ງໃຫຍ່ກວ່າເກົ່າ.

---

ກ່ອນສິ້ນສຸດພິທີທາງການ ຂ້າພະເຈົ້າຂໍອະນຸຍາດຮຽນເຊີນ ທ່ານ ຮອງນາຍົກລັດຖະມົນຕີ ໃຫ້ກຽດຮ່ວມຖ່າຍຮູບນຳບັນດາທ່ານ ແຂກທີ່ມີກຽດ ເພື່ອເປັນທີ່ລະນຶກ ຕາມລຳດັບດັ່ງລຸ່ມນີ້:

ຊຸດທີ 1: ຄະນະຜູ້ວ່າການ, ຮອງລັດຖະມົນຕີ ແລະ ຄະນະສ້າງຕັ້ງຕະຫຼາດຫຼັກຊັບລາວ

ຊຸດທີ 2: ບັນດາທ່ານ ແຂກທີ່ມີກຽດ ທີ່ເຂົ້າຮ່ວມພິທີທັງໝົດ

---

ພາຍຫຼັງຖ່າຍຮູບສຳເລັດແລ້ວ ຂໍຮຽນເຊີນທ່ານ ຮອງນາຍົກລັດຖະມົນຕີ ແລະ ແຂກທີ່ເຂົ້າຮ່ວມພິທີທັງໝົດຢ້ຽມຊົມການວາງສະແດງຜົນງານ 10 ປີ ຕະຫຼາດທຶນລາວ ທີ່ຢູ່ດ້ານຫຼັງຂອງຫ້ອງປະຊຸມແຫ່ງນີ້. ລາຍລະອຽດ ຈະມີພະນັກງານກ່ຽວຂ້ອງນຳພາທ່ານຢ້ຽມຊົມ.

---

ພາຍຫຼັງຢ້ຽມຊົມ ສຳເລັດແລ້ວ ຂໍຮຽນເຊີນທ່ານ ຮອງນາຍົກລັດຖະມົນຕີ ແລະ ບັນດາທ່ານແຂກທີ່ມີກຽດທັງໝົດ ຮ່ວມຮັບປະທານອາຫານທ່ຽງ ທີ່ ຫ້ອງ v.i.p no.11 Sichuan & Hunan Restaurant ຊັ້ນ 2 ແລະ

ຫ້ອງໂຖງ Sichuan & Hunan Chinese restaurant. ລາຍລະອຽດ ຄະນະຮັບຜິດຊອບຈະນຳພາບັນດາທ່ານໄປສູ່ຫ້ອງດັ່ງກ່າວ.

## III. ບົດລາຍງານຜົນງານການເຄື່ອນໄຫວວຽກງານຕະຫຼາດທຶນ ຄົບຮອບ 10 ປີ

# ບົດລາຍງານ (ຫຍໍ້)
# ຜົນງານການເຄື່ອນໄຫວ 10 ປີ ຕະຫຼາດທຶນລາວ (2010-2020)

**ສະເໜີໂດຍ: ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລຂາຄະນະກຳມະການຄຸ້ມຄອງຫຼັກຊັບ**

ຮຽນ: - ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ບັນດາທ່ານແຂກທີ່ມີກຽດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ຂ້າພະເຈົ້າ ຕາງໜ້າໃຫ້ສະມາຊິກພັກ-ພະນັກງານທົ່ວຂະແໜງຕະຫຼາດທຶນ ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ແລະ ຖືເປັນກຽດຢ່າງສູງ ຂໍ່ານັບຮັບຕ້ອນ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ໄດ້ໃຫ້ກຽດເຂົ້າຮ່ວມ **ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ** ໃນມື້ນີ້. ການເຂົ້າຮ່ວມຂອງທ່ານສະແດງເຖິງ ຄວາມເອົາໃຈໃສ່, ຄວາມເປັນຫ່ວງເປັນໃຍ ແລະ ຄວາມໃກ້ຊິດຕິດແທດຂອງພັກ ແລະ ລັດຖະບານ ທີ່ມີຕໍ່ຂະແໜງຕະຫຼາດທຶນຂອງພວກເຮົາ. ຂໍສະແດງຄວາມປິຕິຍິນດີຕໍ່ການໃຫ້ກຽດເຂົ້າຮ່ວມ ຂອງບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ, ອາດີດຮອງລັດຖະມົນຕີ, ທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈໍາ ສປປ ລາວ, ຄະນະກົມ, ຄະນະອໍານວຍການທະນາຄານທຸລະກິດ, ຄະນະອໍານວຍການຜູ້ມີສ່ວນຮ່ວມຕະຫຼາດທຶນ ແລະ ບັນດາທ່ານແຂກທີ່ມີກຽດ ທີ່ໄດ້ເຂົ້າຮ່ວມ ເຮັດໃຫ້ພິທີຂອງພວກເຮົາມີຄວາມໝາຍຍິ່ງຂຶ້ນ.

ການສະຫຼຸບຜົນງານຕະຫຼາດທຶນລາວ ກໍ່ຄື ວັນສ້າງຕັ້ງຕະຫຼາດຫຼັກຊັບລາວ ຊຶ່ງປີນີ້ ຄົບ 10 ປີພໍດີ, ແມ່ນເຫດການສຸດທີ່ມີຄວາມໝາຍສຳຄັນເປັນຢ່າງຍິ່ງ ສໍາລັບສະມາຊິກພັກ-ພະນັກງານ ຂະແໜງຕະຫຼາດທຶນ, ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງຕະຫຼາດທຶນ ທີ່ໄດ້ປະກອບສ່ວນໃນການປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ແນໃສ່ພັດທະນາປະເທດ ໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ໂດຍຊຸກຍູ້ການເຕີບໂຕຢ່າງຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ຢ່າງຂາດຕົວໃນປີ 2025 ພ້ອມທັງ ສ້າງບາດລ້ຽວໃໝ່ໃນການພັດທະນາປະເທດ ໃຫ້ກາຍເປັນປະເທດກໍາລັງພັດທະນາທີ່ມີລາຍຮັບປານກາງລະດັບສູງຕາມທິດສະດີເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ.

**ບັນດາທ່ານແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ**

ພາຍຫຼັງທີ່ລັດຖະບານ ໄດ້ຫັນທິດໄປສູ່ການພັດທະນາເສດຖະກິດ-ສັງຄົມ ຕາມແນວທາງປ່ຽນແປງໃໝ່ທີ່ມີຫຼັກການຂອງພັກ ນັບແຕ່ປີ 1986 ເປັນຕົ້ນມາ, ລະບົບທະນາຄານ ແລະ ສະຖາບັນການເງິນ ໄດ້ພັດທະນາຜະລິດຕະພັນ ແລະ ການບໍລິການໄປສູ່ຄວາມທັນສະໄໝຢ່າງໄວວາ ລວມທັງການສະໜອງແຫຼ່ງທຶນອັນມະຫາສານ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ.

ເຖິງຢ່າງໃດກໍ່ຕາມ, ແຫຼ່ງທຶນທີ່ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ໄດ້ສະໜອງໃຫ້ແກ່ສັງຄົມນັ້ນ ເມື່ອທຽບໃສ່ຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ເຫັນວ່າບໍ່ພຽງພໍ. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ໄດ້ມີແນວຄວາມຄິດລິເລີ່ມສ້າງຕັ້ງຕະຫຼາດທຶນລາວຕັ້ງແຕ່ປີ 1997 ເປັນຕົ້ນມາ. ຈົນມາຮອດເດືອນ 2 ປີ 2002, ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຮ່າງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບຂຶ້ນ ແລະ ຄະນະດັ່ງກ່າວໄດ້ປັບປຸງຄືນໃໝ່ ໃນປີ 2005 ແລະ 2006 ຕາມລຳດັບ.

ອີງໃສ່ແນວທາງ ແລະ ແຜນນະໂຍບາຍ ຂອງພັກ ແລະ ລັດຖະບານ, ທະນາຄານແຫ່ງ ສປປ ລາວ ໂດຍໄດ້ຮັບການເຫັນດີຈາກລັດຖະບານ ຈຶ່ງໄດ້ເຊັນ ບົດບັນທຶກຄວາມເຂົ້າໃຈ (MOU) ຄັ້ງທີ 1 ກັບຕະຫຼາດຫຼັກຊັບ ສ.ເກົາຫຼີ ທີ່ນະຄອນຫຼວງເຊອູນ ເພື່ອສຶກສາຄວາມເປັນໄປໄດ້ຮ່ວມກັນໃນການສ້າງຕັ້ງຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃນເດືອນ ກັນຍາ 2007. ພ້ອມດຽວກັນນີ້, ເພື່ອຮັບປະກັນການຈັດຕັ້ງປະຕິບັດ MOU ທີ່ໄດ້ເຊັນກັບຕະຫຼາດຫຼັກຊັບ ສ.ເກົາຫຼີ ໃຫ້ໄດ້ຮັບໝາກຜົນ, ລັດຖະບານ ໄດ້ແຕ່ງຕັ້ງ ຄະນະຮັບຜິດຊອບຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບ ໃນເດືອນ ພະຈິກ 2007 ແລະ ຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບ ໃນເດືອນ ມັງກອນ 2008.

ຄະນະດັ່ງກ່າວ ໄດ້ສຶກສາທິດສະດີ ແລະ ພຶດຕິກຳຕົວຈິງ ກ່ຽວກັບຕະຫຼາດທຶນ ໂດຍໄດ້ໄປຖອດຖອນບົດຮຽນຢູ່ຕ່າງປະເທດ ເປັນຕົ້ນແມ່ນ ສສ.ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ປະເທດ ໄທ, ປະເທດ ລຸກຊຳບວກ ແລະ ບ່ອນອື່ນໆຈຳນວນໜຶ່ງ ເຊິ່ງນຳໂດຍ ທ່ານ ສົມສະຫວາດ ເລັ່ງສະຫວັດ, ອາດີດຮອງນາຍົກລັດຖະມົນຕີ, ປະທານຄະນະຊີ້ນຳລວມໃນການສ້າງຕັ້ງຕະຫຼາດຫຼັກຊັບ.

ບົນພື້ນຖານຜົນຂອງການສຶກສາຄວາມເປັນໄປໄດ້ດັ່ງກ່າວ ທັງສອງຝ່າຍ ຈຶ່ງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຄັ້ງທີ 2 ໃນເດືອນ ພະຈິກ 2008 ທີ່ນະຄອນຫຼວງວຽງຈັນ ເພື່ອກຳນົດເນື້ອໃນຕົ້ນຕໍໃນການຮ່ວມທຶນສ້າງຕັ້ງຕະຫຼາດຫຼັກຊັບລາວ. ຈາກນັ້ນ, ໃນເດືອນ ກໍລະກົດ 2009 ທີ່ນະຄອນຫຼວງພະບາງ ທັງສອງຝ່າຍ ໄດ້ເຊັນບົດບັນທຶກການສ້າງຕັ້ງຕະຫຼາດຫຼັກຊັບລາວ (JVA) ຮ່ວມກັນລະຫວ່າງ ທະນາຄານ ແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ.

ໃນເດືອນ ພຶດສະພາ 2009, ລັດຖະບານ ໄດ້ປະກາດການສ້າງຕັ້ງ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ເພື່ອເຮັດໜ້າທີ່ເປັນເສນາທິການ ໃນການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຫຼັກຊັບ. ສິ່ງທີ່ຂາດບໍ່ໄດ້ແມ່ນ ການແຕ່ງຕັ້ງຜູ້ອຳນວຍການຕະຫຼາດຫຼັກຊັບລາວ ຜູ້ທຳອິດ ໃນເດືອນ ກຸມພາ 2010 ເພື່ອກະກຽມຂັບເຄື່ອນທຸລະກິດຂອງຕະຫຼາດຫຼັກຊັບລາວ.

ຄຽງຄູ່ກັນນີ້, ລັດຖະບານໄດ້ອອກດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກໃນ ພຶດສະພາ 2010. ອີງໃສ່ດຳລັດດັ່ງກ່າວ ຄະນະກະກຽມສ້າງຕັ້ງ ໄດ້ຄົ້ນຄວ້າສ້າງນິຕິກຳປິ່ນອ້ອມຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ແລະ ສະມາຊິກຂອງຕົນ ແລະ ໄດ້ຮີບຮ້ອນສຸມໃສ່ສ້າງບຸກຄະລາ

ກອນ ເປັນສຳຄັນ, ໄດ້ກະກຽມລະບົບໄອທີ ແລະ ສິ່ງຈຳເປັນອື່ນໆ ເປັນອັນຕົ້ນຕໍ ເພື່ອຮັບປະກັນການເຄື່ອນໄຫວຮອບດ້ານຂອງຕະຫຼາດຫຼັກຊັບລາວ.

ພາຍຫຼັງສຳເລັດການກະກຽມຄວາມພ້ອມຮອບດ້ານແລ້ວ, ໃນວັນທີ 10 ເດືອນ 10 ປີ 2010 ຫຼື ພວກເຮົາເອີ້ນກັນວ່າ 10.10.10, ຕະຫຼາດຫຼັກຊັບລາວ ຈຶ່ງໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະ ໄດ້ເປີດໃຫ້ບໍລິການຊື້-ຂາຍຫຼັກຊັບມື້ທຳອິດ ໃນວັນທີ 11 ມັງກອນ 2011 ໂດຍມີລັດວິສາຫະກິດ 2 ແຫ່ງ ໄດ້ຖືກຫັນເປັນບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ; ຊຶ່ງເປັນຂີດໝາຍທາງດ້ານປະຫວັດສາດຂອງຕະຫຼາດທຶນລາວ, ສ້າງເງື່ອນໄຂໃຫ້ວິສາຫະກິດ ສາມາດລະດົມທຶນໄລຍະຍາວ ໃນຕົ້ນທຶນທີ່ເໝາະສົມ, ເປັນກົນໄກປັບປຸງຄວາມເຂັ້ມແຂງຂອງວິສາຫະກິດທາງດ້ານ ການເງິນ, ການຈັດຕັ້ງ ແລະ ຫັນການຄຸ້ມຄອງບໍລິຫານ ໄປສູ່ການບໍລິຫານຢ່າງມືອາຊີບຫຼາຍຂຶ້ນ ແນໃສ່ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວຕາມທິດທີ່ມີຄຸນນະພາບ, ສົມດູນ, ຕໍ່ເນື່ອງ, ຍືນຍົງ ແລະ ເປັນສີຂຽວ.

ນັບແຕ່ເວລານັ້ນເປັນຕົ້ນມາ ວັນທີ 10 ເດືອນ ຕຸລາ ຂອງທຸກໆປີ ໄດ້ຖືເປັນວັນຄົບຮອບສ້າງຕັ້ງຂະແໜງຕະຫຼາດທຶນລາວ ຢ່າງເປັນທາງການ, ເປັນວັນແຫ່ງການກຳເນີດຂອງຕະຫຼາດທຶນລາວຢ່າງແທ້ຈິງ. ພວກເຮົາ ສະມາຊິກພັກ-ພະນັກງານຂະແໜງຕະຫຼາດທຶນທັງໝົດ ຂໍສະແດງຄວາມຮູ້ບຸນຄຸນຢ່າງຢ່າງສູງ ມາຍັງການນຳ ແລະ ພະນັກງານຮຸ່ນກໍ່ຕັ້ງຕະຫຼາດທຶນລາວ, ຜູ້ຊີ້ນຳວຽກງານຕະຫຼາດທຶນ ໃນໄລຍະຜ່ານ ທີ່ໄດ້ປະກອບສ່ວນໃນການກະກຽມສ້າງຕັ້ງຕະຫຼາດທຶນລາວ ຢ່າງປະດິດສ້າງ ແລະ ບໍ່ຮູ້ອິດຮູ້ເມື່ອຍ. ບັນດາທ່ານເລົ່ານັ້ນ, ຖືວ່າເປັນພະນັກງານຮຸ່ນບຸກເບີກ, ເປັນຜູ້ສ້າງໜໍ່ແໜງ ແລະ ພື້ນຖານວຽກງານຕະຫຼາດທຶນ. ຕໍ່ມາ, ກໍ່ມີການນຳແຕ່ລະຮຸ່ນ ໄດ້ເປັນແກ່ນສານຊີ້ນຳ-ນຳພາ ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອດັ່ງກ່າວ ດ້ວຍບາດກ້າວທີ່ໜັກແໜ້ນ ເພື່ອພາລະກິດສ້າງສາພັດທະນາຕະຫຼາດທຶນລາວ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ ໃນທ່າມກາງຍຸກແຫ່ງການເຊື່ອມໂຍງ ແລະ ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ.

**ບັນດາທ່ານ ທີ່ນັບຖື**

ຕະຫຼອດໄລຍະເວລາ 10 ປີ, ຂະແໜງຕະຫຼາດທຶນຂອງພວກເຮົາ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບຕາມເງື່ອນໄຂຕົວຈິງພາຍໃນປະເທດ ເຊິ່ງສາມາດສັງລວມຜົນງານທີ່ພົ້ນເດັ່ນບາງດ້ານດັ່ງນີ້:

1. ກົງຈັກການຈັດຕັ້ງຂອງລະບົບຕະຫຼາດທຶນ ໄດ້ມີການແບ່ງພາລະບົດບາດຢ່າງຈະແຈ້ງ ລະຫວ່າງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ.
2. ໄດ້ເອົາໃຈໃສ່ບຳລຸງ-ກໍ່ສ້າງພະນັກງານທາງດ້ານ ທິດສະດີການເມືອງ, ວິຊາສະເພາະ ແລະ ພາສາຕ່າງປະເທດດ້ວຍຫຼາຍຮູບການທີ່ເໝາະສົມ ດ້ວຍທຶນຊ່ວຍເຫຼືອລ້າຈາກບັນດາປະເທດເພື່ອນມິດ ແລະ ສາກົນ ແລະ ທຶນສົມທົບຈາກ ທຫລ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະມາຊິກພັກ-ພະນັກງານ ມີຄວາມຮູ້, ຄວາມສາມາດ, ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ມີຄຸນສົມບັດສົນທຳປະຕິວັດ ກຽມພ້ອມປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ.

ປັດຈຸບັນ ໜ່ວຍພັກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີພະນັກງານທັງໝົດ ຈຳນວນ 79 ຄົນ (ຍິງ 41 ຄົນ), ໃນນັ້ນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີ 41 ຄົນ (ຍິງ 21 ຄົນ) ແລະ

ຕະຫຼາດຫຼັກຊັບລາວ ມີ 36 ຄົນ (ຍິງ 19 ຄົນ); ມີສະມາຊິກພັກທັງໝົດ 23 ສະຫາຍ ກວມ 29% ຂອງພະນັກງານທັງໝົດ.

ສຳລັບບໍລິສັດຫຼັກຊັບ 4 ແຫ່ງ ມີພະນັກງານທັງໝົດ 76 ຄົນ, ບັນດາບໍລິສັດຫຼັກຊັບ ກໍ່ໄດ້ເອົາໃຈໃສ່ວຽກງານຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານ ດ້ວຍການນຳສົ່ງໄປສຶກສາຕໍ່ລະດັບປະລິນຍາໂທຢູ່ຕ່າງປະເທດ, ນຳສົ່ງເຂົ້າຝຶກອົບຮົມ ແລະ ສຳມະນາ ໃນຫົວຂໍ້ຕ່າງໆກ່ຽວຂ້ອງກັບຕະຫຼາດທຶນຢ່າງເປັນປົກກະຕິ ເປັນຕົ້ນແມ່ນ ຫົວຂໍ້ CMIP, Lao.PIB, Train the Trainers, ການບໍລິຫານຫ້ອງການ, ບັນຊີທະນາຄານທຸລະກິດ ແລະ ອື່ນໆ.

3. ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງນິຕິກຳໃຫ້ເປັນລະບົບຄົບຊຸດເທື່ອລະກ້າວ. ປັດຈຸບັນ, ນິຕິກຳສູງສຸດຂອງວຽກງານຕະຫຼາດທຶນແມ່ນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ຍັງມີລະບຽບການຈຳນວນຫລາຍສະບັບ. ນິຕິກຳດັ່ງກ່າວ ໄດ້ກາຍເປັນເຄື່ອງມື ແລະ ບ່ອນອີງທີ່ສຳຄັນ ໃຫ້ແກ່ການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສ້າງເງື່ອນໄຂສະດວກໃຫ້ບັນດາຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນລົງທຶນໃນຕະຫຼາດທຶນ.

ພ້ອມນີ້ ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫລາດທຶນ, ລັດຖະບານໄດ້ຫຼຸດອັດຕາອາກອນກຳໄລ ຈາກ 20% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງໃຫ້ແກ່ບໍລິສັດຈົດທະບຽນ; ໄດ້ຍົກເວັ້ນອາກອນລາຍໄດ້ ຈາກການຂາຍ ຫຼື ໂອນຮຸ້ນ, ແລະ ເງິນປັນຜົນ; ຍົກເວັ້ນອາກອນມູນຄ່າເພີ່ມສຳລັບສະຖາບັນສື່ກາງດ້ານຫຼັກຊັບ ທີ່ເປັນສະຖາບັນການເງິນ ແລະ ໄດ້ຍົກເວັ້ນຄ່າທຳນຽມ ຊື້-ຂາຍຫຼັກຊັບ ໃນສ່ວນຂອງລັດຖະບານ.

4. ຮອດທ້າຍ ປີ 2020, ວິສາຫະກິດທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍການອອກຈຳໜ່າຍຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ ຜ່ານຕະຫຼາດທຶນ ໄດ້ທັງໝົດຈຳນວນ 23.018 ຕື້ກີບ ກວມເອົາ 14% ຂອງ GDP. ປັດຈຸບັນ ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນ 11 ແຫ່ງ ທີ່ມາຈາກຂະແໜງການເງິນ, ພະລັງງານໄຟຟ້າ, ກະສິກຳ, ອຸດສະຫະກຳ, ການຄ້າ-ການບໍລິການ ແລະ ອື່ນໆ.

ພ້ອມດຽວກັນນີ້, ເພື່ອສ້າງສິ່ງຈູງໃຈໃຫ້ແກ່ຜູ້ ພວກເຮົາ ໄດ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ໂດຍໄດ້ຫັນບໍລິສັດຈົດທະບຽນ ໄປສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ເທື່ອລະກ້າວ; ໄດ້ຫັນການຄຸ້ມຄອງບໍລິຫານໄປສູ່ຫຼັກການຂອງອາຊຽນ ແລະ ມາດຕະຖານສາກົນ. ນອກນີ້, ໄດ້ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບໍລິສັດຈົດທະບຽນຜ່ານຮູບການລາຍງານ ແລະ ການເປີດເຜີຍຂໍ້ມູນໃນແຕ່ລະໄລຍະ; ຕິດຕາມ ກວດກາ ຕາມເອກະສານ ແລະ ກວດກາກັບທີ່ເພື່ອຮັບປະກັນໃຫ້ບໍລິສັດຈົດທະບຽນ ເຄື່ອນໄຫວຕາມລະບຽບການ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວເຮັດໃຫ້ບໍລິສັດຈົດທະບຽນ ມີທຶນພຽງພໍເພື່ອເຄື່ອນໄຫວທຸລະກິດ ແລະ ການບໍລິຫານຈັດການສອດຄ່ອງກັບລະບຽບການ ແລະ ຫຼັກການສາກົນພໍສົມຄວນ, ມີການຫັນປ່ຽນຢ່າງຕັ້ງໜ້າ ເປັນຕົ້ນແມ່ນ ການປະຕິບັດຫຼັກການບັນຊີ ແລະ ການປະຕິບັດພັນທະອາກອນ ເຮັດໃຫ້ບໍລິສັດມີຄວາມໂປ່ງໃສເທື່ອລະກ້າວ.

5. ການປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ

ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ມວນຊົນ ດ້ວຍການ ຈັດສຳມະນາ, ຈັດງານປະຈຳປີ, ສ້າງປຶ້ມ ແລະ ວິດີໂອສື່ເສີມຄວາມຮູ້, ຜະລິດສະປອດໂຄສະນາ ແລະ ອື່ນໆ.

ຮອດເດືອນ 10 ປີ 2020 ມີບັນຊີຜູ້ລົງທຶນທັງໝົດ 15.961 ບັນຊີ, ໃນນີ້ ບັນຊີຜູ້ລົງທຶນພາຍໃນ ມີຈຳນວນ 12.567 ບັນຊີ ແລະ ບັນຊີຜູ້ລົງທຶນຕ່າງປະເທດ ມີຈຳນວນ 3.394 ບັນຊີ ເຊິ່ງມາຈາກ 47 ປະເທດທົ່ວໂລກ. ຜ່ານການເຄື່ອນໄຫວຊື້-ຂາຍຕົວຈິງ ເຫັນວ່າ ຜູ້ລົງທຶນຕ່າງປະເທດ ມີບົດບາດພໍສົມຄວນໃນການເຄື່ອນໄຫວຊື້-ຂາຍຫລັກຊັບຢູ່ຕະຫລາດທຶນລາວ.

6. ການສ້າງຄວາມເຂັ້ມແຂງດ້ານພື້ນຖານໂຄງລ່າງຕະຫຼາດທຶນລາວ

ໄດ້ພັດທະນາ ແລະ ບຳລຸງຮັກສາລະບົບ ໄອທີ ຢ່າງຕໍ່ເນື່ອງ ເປັນຕົ້ນ ລະບົບຮັບຄຳສັ່ງຊື້-ຂາຍ, ລະບົບຈັບຄູ່ຊື້-ຂາຍ, ລະບົບສະສາງ ແລະ ຕັດບັນຊີຫຼັກຊັບ, ລະບົບຮັບຝາກຫຼັກຊັບ ແລະ ລະບົບອື່ນໆ ເພື່ອຮັບປະກັນການເຄື່ອນໄຫວໃຫ້ບໍລິການຂອງຕະຫຼາດຫຼັກຊັບລາວ. ພິເສດ ໃນປີ 2017 ຕະຫຼາດຫຼັກຊັບລາວໄດ້ພັດທະນາລະບົບເພື່ອຮອງຮັບການຊື້-ຂາຍພັນທະບັດລັດຖະບານຜ່ານຕະຫຼາດຫຼັກຊັບລາວ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນທ້າຍປີ 2018 ຊຶ່ງລະບົບດັ່ງກ່າວ ໄດ້ຊ່ວຍລັດຖະບານເພື່ອລະດົມທຶນຈາກມວນຊົນ ເພື່ອພັດທະນາໄດ້ດີພໍສົມຄວນ.

ພ້ອມນີ້ ໄດ້ຍົກລະດັບກົນໄກການຊື້-ຂາຍຮຸ້ນ ເພື່ອເພີ່ມໂອກາດໃຫ້ຜູ້ລົງທຶນສາມາດຊື້-ຂາຍຮຸ້ນກັນໄດ້ຢ່າງຄ່ອງຕົວຍິ່ງຂຶ້ນ ເປັນຕົ້ນແມ່ນ ການນຳໃຊ້ລະບົບການປະມູນແບບຕໍ່ເນື່ອງ; ການເພີ່ມຂອບເຂດການປ່ຽນແປງລາຄາລາຍວັນ; ການປັບຫົວໜ່ວຍຊື້-ຂາຍຮຸ້ນຂັ້ນຕ່ຳ, ໄດ້ພີ່ມຮູບແບບຄຳສັ່ງຊື້-ຂາຍ ແລະ ອື່ນໆ.

ສຳລັບສະຖາບັນສື່ກາງດ້ານຫຼັກຊັບ ໄດ້ອະນຸຍາດດຳເນີນທຸລະກິດ ໃຫ້ແກ່ ບໍລິສັດຫຼັກຊັບ 4 ແຫ່ງເພື່ອເຮັດໜ້າທີ່ກະກຽມຄວາມພ້ອມໃຫ້ແກ່ເປົ້າໝາຍຈົດທະບຽນ ແລະ ເປັນສື່ກາງໃນການແລກປ່ຽນຊື້-ຂາຍຫຼັກຊັບ; ໄດ້ຮັບຮອງສະຖາບັນສື່ກາງອື່ນ 17 ເປັນຕົ້ນແມ່ນ: ບໍລິສັດກວດສອບ (4 ແຫ່ງ), ບໍລິສັດປະເມີນມູນຄ່າຊັບສິນ (9 ແຫ່ງ), ທະນາຄານດູແລຊັບສິນ (3 ແຫ່ງ) ແລະ ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື (1 ແຫ່ງ) ເພື່ອປະກອບສ່ວນຂັບເຄື່ອນຕະຫຼາດທຶນ ໃຫ້ເຄື່ອນໄຫວໄດ້ຢ່າງຄ່ອງຕົວ.

7. ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ

ໄດ້ສ້າງ ແລະ ພັດທະນາລະບົບ ໄອທີ ເພື່ອຮັບປະກັນໃຫ້ການປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ມີຄວາມຄ່ອງຕົວ, ເປັນລະບົບ, ຮັບປະກັນ ແລະ ທັນສະໄໝ. ພ້ອມນີ້ ທະນາຄານແຫ່ງ ສປປ ລາວ ໄດ້ສະໜອງງົບປະມານພຽງພໍກັບຄວາມຈຳເປັນຕົວຈິງ ເພື່ອຮັບປະກັນການເຄື່ອນໄຫວວຽກງານ ຂອງອົງການຄຸ້ມຄອງວຽກງານຫຼັກຊັບ.

ນອກຈາກນີ້ ໂດຍຍຶດໝັ້ນແນວທາງນະໂຍບາຍການຕ່າງປະເທດຂອງພັກ-ລັດວາງອອກ, ພວກເຮົາໄດ້ເພີ່ມທະວີການພົວພັນຮ່ວມມືແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານ ວິຊາການໃນການພັດທະນາຂະແໜງຕະຫຼາດທຶນ.

ສັງລວມແລ້ວ, ຕະຫຼອດໄລຍະ 10 ປີທີ່ຜ່ານມາ ຂະແໜງຕະຫຼາດທຶນ ໄດ້ຮັບການສ້າງຕັ້ງ ແລະພັດທະນາ ຢ່າງເປັນລະບົບ ດ້ວຍບາດກ້າວທີ່ໜັກແໜ້ນ. ມາຮອດປັດຈຸບັນ, ຕະຫຼາດທຶນລາວປະກອບມີທຸກພາກສ່ວນ ທີ່ເປັນອົງປະກອບສຳຄັນ ແລະ ຈຳເປັນໃນລະບົບນິເວດວິທະຍາຕະຫຼາດທຶນ ເຊິ່ງລວມມີ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ບໍລິສັດຈົດ

ທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ, ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ຜະລິດຕະພັນທີ່ຊື້-ຂາຍ ໃນຕະຫຼາດຫຼັກຊັບ.

**ບັນດາທ່ານ ທີ່ນັບຖື**

ຜ່ານໄລຍະ 10 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່, ຂະແໜງຕະຫຼາດທຶນ ໄດ້ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຢ່າງຕັ້ງໜ້າ ຊຶ່ງຂັ້ນເທິງໄດ້ຮັບຮູ້ຜົນງານ ແລະ ໄດ້ມອບໃບຍ້ອງຍໍໃນລະດັບຕ່າງໆ ໃຫ້ແກ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມຕະຫລາດທຶນ ຄື:

- ຫຼຽນໄຊແຮງງານ ຊັ້ນ III 1 ໜ່ວຍ;
- ຫຼຽນກາແຮງງານ 1 ໜ່ວຍ
- ໃບຍ້ອງຍໍ ແລະ ໃບຊົມເຊີຍຈາກຜູ້ວ່າການ ທຫລ ຫຼາຍສະບັບ;
- ໃບກຽດຕິຄຸນ, ໃບຍ້ອງຍໍ ແລະ ໃບຊົມເຊີຍ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ຈຳນວນຫຼາຍສະບັບ.

ນອກຈາກນີ້ ໜ່ວຍພັກ ສຄຄຊ ໄດ້ຮັບການຍ້ອງຍໍ ເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ 7 ສະໄໝຕໍ່ເນື່ອງ.

**ບັນດາທ່ານ ທີ່ນັບຖື**

ບັນດາຜົນງານຕ່າງໆທີ່ພວກເຮົາຍາດມາໄດ້ນັ້ນ ແມ່ນຍ້ອນໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ຊິດ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ; ໄດ້ຮັບການຮ່ວມມືເປັນຢ່າງດີຈາກຕະຫຼາດຫຼັກຊັບ ສ. ເກົາຫຼີ ໃນຖານະເປັນຄູ່ຮ່ວມທຶນ; ໄດ້ຮັບການຮ່ວມມືໃນຂອບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ; ໄດ້ຮັບການສະໜັບສະໜູນຈາກ ບັນດາກະຊວງ, ອົງການທຽບເທົ່າກະຊວງ, ຂະແໜງການ ຢູ່ສູນກາງ ແລະ ທ້ອງຖິ່ນ ແລະ ຍ້ອນຄວາມເອົາໃຈໃສ່, ຄວາມບຸກບືນຫ້າວຫັນຂອງ ຄະນະນຳ, ສະມາຊິກພັກ-ພະນັກງານ ຂອງຂະແໜງການຕະຫຼາດທຶນທັງໝົດ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອ ແລະ ຂອບໃຈຢ່າງສູງຕໍ່ ການນຳ ແລະ ພະນັກງານຮຸ່ນກໍ່ຕັ້ງ, ພະນັກງານອາວຸໂສບຳນານ ທີ່ໄດ້ທຸ່ມເທເຫື່ອແຮງ ສະຕິປັນຍາຂອງຕົນປະກອບສ່ວນເຂົ້າໃນຜົນສຳເລັດດັ່ງກ່າວ. ຂໍສະແດງຄວາມຂອບໃຈຢ່າງສູງ ຕໍ່ການສະໜັບສະໜູນຊ່ວຍເຫຼືອຂອງທຸກພາກສ່ວນ ໃນການພັດທະນາຕະຫຼາດທຶນຂອງພວກເຮົາໃນໜຶ່ງທົດສະວັດທີ່ຜ່ານມາ.

**ບັນດາທ່ານ ທີ່ນັບຖື**

ຜົນງານທີ່ຂະແໜງຕະຫຼາດທຶນຍາດມາໄດ້ ແມ່ນມີຄວາມໝາຍສຳຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມພໍສົມຄວນ. ແຕ່ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່ ແລະ ໃນເງື່ອນໄຂເຊື່ອມໂຍງ ແລະ ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ, ພວກເຮົາ ຍັງມີບາງຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ ຄື:

1) ຕະຫຼາດທຶນລາວ ຍັງບໍ່ສາມາດເປັນຊ່ອງທາງໃໝ່ໃນການຈັດສັນແຫຼ່ງທຶນ ແລະ ການລົງທຶນ ໄດ້ດີເທົ່າທີ່ຄວນ ເນື່ອງຈາກ:

- ຜະລິດຕະພັນຫຼັກຊັບ ທີ່ຊື້-ຂາຍໃນຕະຫຼາດ ບໍ່ຫຼາກຫຼາຍ ແລະ ຄຸນນະພາບບໍ່ສູງ (ຜົນຕອບແທນຕໍ່າ ຫຼື ບໍ່ມີຜົນຕອບແທນສໍາລັບບາງບໍລິສັດຈົດທະບຽນ) ຍ້ອນວິສາຫະກິດທັງພາກລັດ ແລະ ເອກະຊົນ ຍັງອ່ອນແອຫຼາຍດ້ານ, ເຄື່ອນໄຫວທຸລະກິດຂາດທຶນຕໍ່ເນື່ອງຫຼາຍປີ, ຂາດການຖືບັນຊີຢ່າງເປັນລະບົບ, ການຄຸ້ມຄອງບໍລິຫານ ຍັງບໍ່ທັນເປັນມືອາຊີບແທ້;
- ການປະຕິຮູບລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ ແລະ ລະດົມທຶນຜ່ານຕະຫຼາດທຶນ ໄດ້ລະບຸໄວ້ໃນມະຕິ 5 ສະໄໝທີ IX ຂອງພັກແລ້ວ ແຕ່ບໍ່ຖືກຈັດຕັ້ງຜັນຂະຫຍາຍຢ່າງເປັນຮູບປະທໍາ ເຮັດໃຫ້ຂາດຕົວແບບທີ່ດີຈາກວິສາຫະກິດຂອງລັດທີ່ລະດົມທຶນຜ່ານຕະຫຼາດທຶນ (ຫົວໜ່ວຍທີ່ມີກໍາໄລ ບໍ່ຖືກສະໜັບສະໜູນຈາກພາກລັດໃຫ້ມາລະດົມທຶນຜ່ານຕະຫຼາດທຶນ ແຕ່ຫົວໜ່ວຍທີ່ຂາດທຶນ ຖືກບັນຈຸໃນບັນຊີເປົ້າໝາຍລະດົມທຶນຜ່ານຕະຫຼາດທຶນ);
- ບາງບໍລິສັດທີ່ຈົດທະບຽນແລ້ວ ຍັງເຄື່ອນໄຫວຂາດທຶນ ແລະ ບໍ່ສາມາດປັນຜົນໃຫ້ແກ່ຜູ້ຖືຮຸ້ນ, ການປະຕິບັດນະໂຍບາຍບັນຊີ ຍັງບໍ່ສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ເຮັດໃຫ້ຜູ້ລົງທຶນຂາດຄວາມເຊື່ອໝັ້ນ ຕໍ່ເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ, ການຫັນຈາກການບໍລິຫານຈັດການແບບຄອງເດີມ ໄປສູ່ການຄຸ້ມຄອງບໍລິຫານ (CG) ຕາມບົດຮຽນທີ່ດີຂອງສາກົນ ຍັງຊັກຊ້າ.

2) ພື້ນຖານເສດຖະກິດບໍ່ທັນໜັກແໜ້ນ, ສະເຖຍລະພາບທາງດ້ານການເງິນ-ເງິນຕາ ຍັງບໍ່ທັນໝັ້ນທ່ຽງແທ້ ເປັນຕົ້ນ ການຂາດດຸນງົບປະມານ, ພາລະໜີ້ສິນຕໍ່ຕ່າງປະເທດຍັງສູງ, ເງິນກີບຍັງອ່ອນຄ່າໃນບາງໄລຍະ ໂດຍສະເພາະໄລຍະການແຜ່ລະບາດຂອງພະຍາດ ໂຄວິດ-19, ການແລກປ່ຽນເງິນຕາກັບຄືນຂອງຜູ້ລົງທຶນຕ່າງປະເທດ ຍັງພົບຄວາມຫຍຸ້ງຍາກ ເຮັດໃຫ້ຜູ້ລົງທຶນຕ່າງປະເທດ ບໍ່ສົນໃຈມາລົງທຶນເພີ່ມເຕີມ ແລະ ຜູ້ທີ່ໄດ້ລົງທຶນແລ້ວ ກໍ່ຊອກຫາທຸກວິທີທາງເພື່ອອອກຈາກຕະຫຼາດທຶນລາວ; ນະໂຍບາຍດ້ານອາກອນ (ເປັນຕົ້ນ: ອາກອນກໍາໄລ, ອາກອນມູນຄ່າເພີ່ມ) ແລະ ບໍ່ແມ່ນອາກອນຂອງພາກລັດ ຕໍ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເຖິງວ່າໄດ້ປະຕິບັດ ແຕ່ເມື່ອທຽບກັບເງື່ອນໄຂຕະຫຼາດທຶນພາຍໃນປະເທດ ເຫັນວ່າຍັງບໍ່ທັນສົມຄູ່. ທັງໝົດເຫຼົ່ານີ້ ບໍ່ເອື້ອອໍານວຍຕໍ່ ການລະດົມທຶນ ແລະ ການລົງທຶນໃນຕະຫຼາດທຶນເທົ່າທີ່ຄວນ;

3) ການຄຸ້ມຄອງຂອງພາກລັດ ຕໍ່ບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ ຍັງບໍ່ໜັກແໜ້ນເຂັ້ມແຂງແທ້ ເປັນຕົ້ນແມ່ນການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການລັກລອບນໍາເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຍັງບໍ່ໄດ້ປະຕິບັດຢ່າງຈິງຈັງ ເຮັດໃຫ້ເກີດມີການປຽບທຽບຊົ່ວຊາ ແລະ ທໍ້ຖອຍ ສໍາລັບບໍລິສັດທີ່ປະຕິບັດຖືກຕ້ອງຕາມລະບຽບການ;

4) ເຄື່ອງມືໃນການຄຸ້ມຄອງວຽກງານຫຼັກຊັບ ໂດຍສະເພາະແມ່ນ ລະບົບໄອທີ, ບຸກຄະລາກອນທີ່ມີຄວາມຊໍານານງານສະເພາະດ້ານ ແລະ ບັນດານິຕິກໍາລຸ່ມກົດໝາຍ ຍັງບໍ່ຄົບຖ້ວນ ແລະ ທັນສະໄໝ ເຮັດໃຫ້ການຄຸ້ມຄອງຕິດຕາມ ການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຍັງບໍ່ທັນຕໍ່ເນື່ອງ ແລະ ຄວບຄຸມທຸກບັນຫາ, ເມື່ອພົບເຫັນບັນຫາແລ້ວ ການຄົ້ນຄວ້າວິທີການແກ້ໄຂ ຍັງບໍ່ທັນສະພາບການ;

5) ລະບົບເຕັກໂນໂລຊີຂອງ ຕລຊລ ທີ່ນໍາໃຊ້ໃນປັດຈຸບັນ ມີຂໍ້ຈໍາກັດຫຼາຍດ້ານ ແລະ ຍັງບໍ່ມີສູນສໍາຮອງຂໍ້ມູນ (DR Site), ຊ່ອງຫວ່າງ ລະຫວ່າງ ຄວາມສາມາດທາງດ້ານເຕັກນິກ ຂອງລະບົບດັ່ງກ່າວ ກັບຄວາມ

ຮຽກຮ້ອງຕ້ອງການປັດຈຸບັນ ນັບມື້ນັບກວ້າງອອກເລື້ອຍໆ ເປັນຕົ້ນ: ຊ່ອງທາງການຊື້-ຂາຍຫຼັກຊັບ ຍັງບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງຜູ້ລົງທຶນ ເຊັ່ນ: ບໍ່ມີລະບົບສົ່ງຄຳສັ່ງຊື້-ຂາຍຜ່ານມືຖື (Mobile App) ແລະ Tablet, ການເປີດບັນຊີເງິນຝາກສຳລັບຜູ້ລົງທຶນຕ່າງປະເທດ ເພື່ອລົງທຶນໃນຫຼັກຊັບ ຍັງມີຂໍ້ຫຍຸ້ງຍາກ, ບໍ່ມີລະບົບເປີດບັນຊີຫຼັກຊັບແບບອອນລາຍ, ການແກ້ໄຂສະພາບຄ່ອງໃນການຊື້-ຂາຍຫຼັກຊັບ ຍັງບໍ່ທັນໄດ້ດີ ຍ້ອນຕະຫຼາດຍັງອ່ອນນ້ອຍ, ຂາດຜະລິດຕະພັນທີ່ຫຼາກຫຼາຍ ຊຶ່ງທັງໝົດນີ້ເຮັດໃຫ້ຜູ້ລົງທຶນ ແລະ ຜູ້ຕ້ອງການລະດົມທຶນຈາກທັງພາຍໃນ ແລະ ຕ່າງປະເທດ ບໍ່ທັນໃຫ້ຄວາມສົນໃຈຕໍ່ຕະຫຼາດຫຼັກຊັບ ເທົ່າທີ່ຄວນ, ເຄື່ອງມືຕິດຕາມການຊື້-ຂາຍຫຼັກຊັບທີ່ບໍ່ຍຸດຕິທຳ ຍັງບໍ່ເປັນລະບົບຄົບຊຸດ, ນິຕິກຳເພື່ອເປັນບ່ອນອີງເຄື່ອນໄຫວທຸລະກິດ ແລະ ຄຸ້ມຄອງສະມາຊິກຂອງຕົນ ຍັງບໍ່ສອດຄ່ອງກັບນິຕິກຳແມ່ ເຮັດໃຫ້ການເຄື່ອນໄຫວບາງຄັ້ງບໍ່ຄ່ອງຕົວ; ຄູ່ຮ່ວມທຶນ ຍັງຂາດຄວາມກະຕືລືລົ້ນໃນການພັດທະນາຕະຫຼາດທຶນລາວ;

6) ການເຄື່ອນໄຫວໃຫ້ບໍລິການຂອງສະຖາບັນສື່ກາງດ້ານຫຼັກຊັບຈຳນວນໜຶ່ງ ຍັງບໍ່ທັນປະຕິບັດບົດບາດຂອງຕົນຢ່າງເຕັມສ່ວນ ແລະ ເລິກເຊິ່ງເຖິງຖອງແທ້, ຄວາມສະດຸ້ງໄວໃນການນຳເອົາບົດຮຽນ ແລະ ປະສົບການຂອງຕ່າງປະເທດມາໝູນໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດຂອງຕົນຍັງບໍ່ທັນໄດ້ດີ, ຄຸນນະພາບການໃຫ້ບໍລິການຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ;

7) ຖານຜູ້ລົງທຶນ ຍັງບໍ່ທັນກວ້າງຂວາງ ແລະ ຍັງບໍ່ເຄື່ອນໄຫວຊື້-ຂາຍຢ່າງຟົດຟື້ນ ໂດຍສະເພາະແມ່ນ ຜູ້ລົງທຶນປະເພດສະຖາບັນພາຍໃນປະເທດ. ສຳລັບຜູ້ລົງທຶນປະເພດບຸກຄົນ ສ່ວນໃຫຍ່ແມ່ນຊື້ຫຼັກຊັບໄວ້ເພື່ອຖືຄອງໄລຍະຍາວ ເຮັດໃຫ້ການຊື້-ຂາຍຫຼັກຊັບໃນ ຕລຊລ ບໍ່ຄຶກຄື້ນເທົ່າທີ່ຄວນ. ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການຊື້-ຂາຍ ເພື່ອດຶງດູດຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ທັນໄດ້ຮັບການປະຕິບັດຢ່າງຕັ້ງໜ້າ. ການໂຄສະນາເຜີຍແຜ່ວຽກງານຫຼັກຊັບ ເຫັນວ່າ ການຄົ້ນຄິດປະດິດສ້າງດ້ານເນື້ອໃນ ແລະ ວິທີການໃໝ່ໆ ເພື່ອສ້າງຄວາມໜ້າສົນໃຈຕໍ່ກຸ່ມເປົ້າໝາຍ ໄດ້ຮັບການປັບປຸງ ແຕ່ຄວາມເຂົ້າໃຈກ່ຽວກັບວຽກງານຫຼັກຊັບ ຂອງສັງຄົມຍັງຈຳກັດ. ການສ້າງຫຼັກສູດ ແລະ ການສ້າງນັກວິຊາຊີບທຸລະກິດຫຼັກຊັບປະເພດຕ່າງໆ ຍັງບໍ່ພຽງພໍກັບຄວາມຈຳເປັນຕົວຈິງ.

ສະນັ້ນ, ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ XI, ມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV; ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 (ສະບັບປັບປຸງ) ພວກເຮົາຕ້ອງສຸມໃສ່ບາງໜ້າວຽກບຸລິມະສິດ ດັ່ງນີ້:

1. ສຸມໃສ່ພັດທະນາຕະຫຼາດພັນທະບັດລັດຖະບານໃຫ້ເຂັ້ມແຂງ ເພື່ອຊ່ວຍລັດຖະບານລະດົມທຶນ ແກ້ໄຂບັນຫາເສດຖະກິດມະຫາພາກ ແລະ ບັນຫາການຂາດດຸນງົບປະມານ;
2. ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ຮັບປະກັນການໃຫ້ບໍລິການມີຄວາມທັນສະໄໝ ແລະ ປອດໄພ;
3. ປັບປຸງກົນໄກ ແລະ ລະບຽບການ ການອອກຈຳໜ່າຍຫຼັກຊັບ ແລະ ການຈົດທະບຽນ ໃນຕະຫຼາດຫຼັກຊັບ ເພື່ອຊຸກຍູ້ການເຂົ້າເຖິງແຫຼ່ງທຶນໄລຍະຍາວ ຂອງວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ໃຫ້ມີຄວາມເຂັ້ມແຂງ ແລະ ຫຼາກຫຼາຍ, ສາມາດແຂ່ງຂັນ ແລະ ມີຄວາມຍືນຍົງ ແນໃສ່ສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ຢ່າງໜັກແໜ້ນ ແລະ ທົ່ວເຖິງ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນຳ-ນຳພາຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ການອຸ້ມຊູຊ່ວຍເຫຼືອຂອງບັນດາທ່ານ, ບວກກັບບົດຮຽນ ແລະ ປະສົບການ ຂອງພວກເຮົາ, ພວກເຮົາຈະສາມາດປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ບັນລຸຕາມຄາດໝາຍທີ່ໄດ້ກຳນົດໄວ້.

ທັງໝົດນັ້ນ ແມ່ນການລາຍງານໂດຍສັງເຂບ ຕໍ່ໝາກຜົນຂອງການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງ ຂະແໜງຕະຫຼາດທຶນໃນໄລຍະ 10 ປີຜ່ານມາ.

ນະໂອກາດອັນມີຄວາມໝາຍນີ້, ຂ້າພະເຈົ້າ ຂໍອວຍພອນໄຊອັນປະເສີດ ມາຍັງ ທ່ານ ສົມດີ ດວງດີ, ຮອງ ນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈົ່ງມີພາລານາໄມ ສົມບູນ, ມີຄວາມສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ, ສືບຕໍ່ຊີ້ນໍາ-ນໍາພາວຽກງານຕະຫຼາດທຶນ ກ້າວຂຶ້ນຕາມຈຸດ ໝາຍທີ່ໄດ້ກໍານົດໄວ້. ຂໍອວຍພອນແດ່ ບັນດາທ່ານການນໍາ, ພະນັກງານອາວຸໂສບໍານານ, ພະນັກງານຫຼັກແຫຼ່ງນໍາພາ , ພະນັກງານຂະແໜງຕະຫຼາດທຶນ ພ້ອມດ້ວຍແຂກທີ່ມີກຽດທຸກທ່ານ ມີຜົນສໍາເລັດໃນໜ້າທີ່ການເມືອງຂອງບັນດາ ທ່ານທຸກປະການ, ມີສຸຂະພາບເຂັ້ມແຂງ ຫ້າວຫັນ ໝັ້ນຍືນ.

**(ຂໍຂອບໃຈ)**

## IV. ບົດຄຳເຫັນ ຂອງ ທ່ານ ອ໊ອດ ພົນຊຽງດີ

# ບົດລາຍງານກ່ຽວກັບວິໄສທັດ ແລະ ແຜນ 5 ປີ ພັດທະນາຕະຫຼາດຫຼັກຊັບລາວ

# ຕໍ່ພິທີສະຫຼຸບຜົນງານການເຄື່ອນໄຫວຕະຫຼາດທຶນ ຄົບຮອບ 10 ປີ

# ສະເໜີໂດຍ ທ່ານ ອ໊ອດ ພົນຊຽງດີ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ

ຮຽນ: - ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີກະຊວງ ການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

- ບັນດາທ່ານຮອງລັດຖະມົນຕີ, ອາດີດຮອງລັດຖະມົນຕີ, ຄະນະກົມ, ຄະນະອຳ ນວຍການ ທະນາຄານທຸລະກິດ ແລະ ຄະນະອຳນວຍການຜູ້ມີສ່ວນຮ່ວມຕະຫຼາດທຶນ ທີ່ເຄົາລົບ ແລະ ນັບຖື;
- ບັນດາທ່ານແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ເຂົ້າຮ່ວມພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນ ສປປ ລາວ ໃນຄັ້ງນີ້ ແລະ ຕາງໜ້າໃຫ້ ຕະຫຼາດຫຼັກຊັບລາວ (ຕລຊລ) ລາຍງານວິໄສທັດຂອງຕະຫຼາດຫຼັກຊັບລາວ ແລະ ແຜນ 5 ປີ ພັດທະນາຕະຫຼາດຫຼັກຊັບລາວ ຕໍ່ງານພິທີທີ່ເປັນປະຫວັດສາດ ແລະ ມີຄວາມໝາຍຄວາມສຳຄັນສຳລັບຕະຫຼາດທຶນ ສປປ ລາວ ໃນຄັ້ງນີ້. ຕະຫຼາດຫຼັກຊັບ ເປັນເຄື່ອງມືທີ່ສຳຄັນສຳລັບການພັດທະນາເສດຖະກິດ ເຊິ່ງເຫັນໄດ້ຈາກຂະໜາດຂອງມູນຄ່າຕະຫຼາດຫຼັກຊັບ ທີ່ເພີ່ມຂຶ້ນສົ່ງຜົນກະທົບໃຫ້ເສດຖະກິດຂະຫຍາຍຕົວ ຍ້ອນຕະຫຼາດຫຼັກຊັບເຮັດພາລະບົດບາດບໍລິການຊື້-ຂາຍຫຼັກຊັບ ແລະ ບໍລິການຊຳລະ-ສະສາງຫຼັກຊັບ ດ້ວຍລະບົບທີ່ທັນສະໄໝ ແລະ ເຊື່ອຖືໄດ້. ພ້ອມທັງເຮັດໜ້າທີ່ຄຸ້ມຄອງບໍລິຫານການເຄື່ອນໄຫວຊື້-ຂາຍ ຂອງນັກລົງທຶນຢ່າງເຂັ້ມງວດ ແລະ ຍຸຕິທຳ, ລາຍງານຂໍ້ມູນສະພາບການເຄື່ອນໄຫວຫຼັກຊັບຢ່າງຖືກຕ້ອງ ແລະ ທັນເວລາ. ທຸກຫົວໜ່ວຍທຸລະກິດເຄື່ອນໄຫວຖືກກົດໝາຍທີ່ຕ້ອງການເພີ່ມທຶນ ແຕ່ບໍ່ຢາກສ້າງໜີ້ເພີ່ມ ຫຼື ຄວາມສາມາດໃນການສ້າງໜີ້ດ້ວຍການກູ້ຢືມຍັງເຫຼືອບໍ່ຫຼາຍ ກໍຈະຫັນມານຳໃຊ້ເຄື່ອງມືຕະຫຼາດຫຼັກຊັບ ເປັນທາງເລືອກແທນ. ຜູ້ຕ້ອງການລົງທຶນ ຫຼື ຜູ້ຢາກເປັນເຈົ້າຂອງທຸລະກິດໃນຫຼາຍຂະແໜງການແຕ່ມີເງິນລົງທຶນບໍ່ຫຼາຍ, ຕ້ອງການຈະກະຈາຍຄວາມສ່ຽງໃນການລົງທຶນຂອງຕົນ ແລະ ຕ້ອງການໃຫ້ເງິນລົງທຶນຂອງຕົນສາມາດຖອນເປັນເງິນສົດໄດ້ຢ່າງຄ່ອງໂຕໃນເວລາສັ້ນໆ ໂດຍບໍ່ຈຳເປັນຕ້ອງລໍຖ້າ

ໃຫ້ຄົບກຳນົດກໍຈະຫັນມາລົງທຶນຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບແທນ. ສະນັ້ນ, ຕະຫຼາດຫຼັກຊັບລາວຈຶ່ງສ້າງຕົນເອງໃຫ້ກາຍເປັນເຄື່ອງມືດັ່ງກ່າວມາຂ້າງເທິງ ແລະ ກຳນົດວິໄສທັດຂອງຕະຫຼາດຫຼັກຊັບລາວວ່າ: **"ຕະຫຼາດຫຼັກຊັບລາວ ເປັນຕະຫຼາດທຶນທີ່ມີຄວາມສຳຄັນ ໃນການຂັບເຄື່ອນການພັດທະນາເສດຖະກິດ ສປປ ລາວ"** ດ້ວຍການເປັນກົນໄກການລະດົມທຶນ ແລະ ການລົງທຶນຊື້-ຂາຍຫຼັກຊັບ ທີ່ມີຄວາມຍຸຕິທຳ, ໂປ່ງໃສ ແລະ ມີປະສິດທິພາບ ແນໃສ່ສ້າງເງື່ອນໄຂ ແລະ ໂອກາດ ໃຫ້ນັກລົງທຶນ ແລະ ຜູ້ມີສ່ວນຮ່ວມ ໄດ້ຮັບຜົນປະໂຫຍດຢ່າງຍຸຕິທຳ.

ຕໍ່ກັບການກຳນົດວິໄສທັດດັ່ງກ່າວ ຕະຫຼາດຫຼັກຊັບລາວ ໄດ້ກຳນົດແຜນ 5 ປີ ພັດທະນາຕະຫຼາດຫຼັກຊັບລາວ ດັ່ງນີ້:

1. **ພັດທະນາກົນໄກ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ທັນສະໄໝ, ພັດທະນາ ຜະລິດຕະພັນຫຼັກຊັບໃຫ້ມີຄວາມຫຼາກຫລາຍ ແລະ ພັດທະນາບຸກຄະລາກອນໃນຕະຫຼາດທຶນ ເພື່ອການສົ່ງເສີມການລະດົມທຶນໄລຍະຍາວ ແລະ ການລົງທຶນ ເພື່ອອະນາຄົດ;**
2. **ປະກອບສ່ວນຊ່ວຍລັດຖະບານ ພັດທະນາຕະຫຼາດພັນທະບັດ;**
3. **ສະໜອງກົນໄກ, ສິ່ງອຳນວຍຄວາມສະດວກຮອບດ້ານ ພ້ອມທັງ ຂໍ້ມູນຂ່າວສານທີ່ຍຸຕິທຳ, ຖືກຕ້ອງ, ໂປ່ງໃສ ແລະ ຄົບຖ້ວນ ເພື່ອເອື້ອອຳນວຍຄວາມສະດວກແລະ ເປີດໂອກາດໃຫ້ທຸກພາກສ່ວນໃນຕະຫຼາດທຶນໄດ້ຮັບຜົນປະໂຫຍດຢ່າງຍຸຕິທຳ.**

ນະໂອກາດອັນມີຄວາມໝາຍຄວາມສຳຄັນນີ້, ຂ້າພະເຈົ້າຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນ ຢ່າງສູງຕໍ່ມາຍັງທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີ ກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ການນຳທຸກຂັ້ນ ທີ່ໄດ້ເອົາໃຈໃສ່ຊຸກຍູ້ ແລະ ຊີ້ນຳ-ນຳພາ ຕລຊລ ມາໂດຍຕະຫຼອດ, ຂໍລະນຶກເຖິງຜົນງານ ແລະ ຄຸນງາມຄວາມດີຂອງຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ຕລຊລ ທຸກຣຸ່ນທຸກລະດັບ ທີ່ໄດ້ທຸ້ມເທເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການສ້າງສາ ແລະ ພັດທະນາຕະຫຼາດທຶນ ຂອງພວກເຮົາໃຫ້ມີຄວາມເຕີບໃຫຍ່ ເຂັ້ມແຂງ ມາຢ່າງບໍ່ຢຸດຢັ້ງຕະຫຼອດ 10 ປີຜ່ານມາ. ໃນປີ 2020 ນີ້ ເຖິງວ່າຈະມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ບັນຫາການລະບາດ ຂອງພະຍາດ Covid-19 ທີ່ພວມສົ່ງຜົນ ກະທົບຕໍ່ລະບົບເສດຖະກິດຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ແຕ່ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ຕລຊລ ຈະສຸມທຸກສະຕິປັນຍາ ແລະ ກຳລັງແຮງ ເພື່ອຍາດເອົາ ຜົນງານ ແລະ ການພັດທະນາທີ່ໜ້າເພິ່ງ ພໍໃຈມາສູ່ສັງຄົມ ແລະ ເສດຖະກິດຂອງ ສປປ ລາວ ຕະຫຼອດໄປ.

**ຂໍຂອບໃຈ**

**V. ບົດອ່ານຂໍ້ຕົກລົງ ຕໍ່ວາລະຍ້ອງຍໍ-ຊົມເຊີຍ ໂດຍກົມຈັດຕັ້ງ ແລະ ພະນັກງານ, ທະນາຄານແຫ່ງ ສປປ ລາວ**

## ບົດອ່ານຂໍ້ຕົກລົງ ຕໍ່ວາລະຍ້ອງຍໍ-ຊົມເຊີຍໃນພິທີສະຫຼຸບຜົນງານການເຄື່ອນໄຫວຕະຫຼາດທຶນ ຄົບຮອບ 10 ປີ

### ສະເໜີໂດຍ ທ່ານ ພານຸສັກ ແກ່ນວົງພະຈັນ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ

**ຮຽນ: ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຄົາລົບຢ່າງສູງ;**

**ຮຽນ: - ບັນດາທ່ານການນຳ-ອາດີດການນຳ ພັກ-ລັດ ຂອງ ສປປ ລາວ ທີ່ນັບຖືຢ່າງສູງ;**

**- ບັນດາແຂກທີ່ມີກຽດ, ທ່ານຍິງ-ທ່ານຊາຍ ທີ່ເຂົ້າຮ່ວມພິທີທີ່ນັບຖື ແລະ ຮັກແພງ.**

ຂ້າພະເຈົ້າ, ຕາງໜ້າໃຫ້ການຈັດຕັ້ງທະນາຄານ ແຫ່ງ ສປປ ລາວ ຂໍອະນຸຍາດອ່ານຂໍ້ຕົກລົງຂອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການມອບໃບຍ້ອງຍໍ-ຊົມເຊີຍ ໃຫ້ກົມກອງ ລວມໝູ່ ແລະ ບຸກຄົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020) ຊຶ່ງລາຍລະອຽດມີຄືດັ່ງນີ້:

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
**ຂໍ້ຕົກລົງວ່າດ້ວຍການມອບໃບຍ້ອງຍໍ-ຊົມເຊີຍ ໃຫ້ກົມກອງລວມໝູ່ ແລະ ບຸກຄົນ**
**ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020)**
**(ສະບັບເລກທີ 16/ຄຄຊ)**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບເພື່ອກະກຽມສະຫຼອງ 10 ປີ ການສ້າງຕັ້ງຕະຫຼາດຫຼັກຊັບລາວ (2010-2020);
- ອີງຕາມໜັງສືສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 346/ສຄຄຊ ລົງວັນທີ 23 ຕຸລາ 2020.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ,**
**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ມອບໃບຍ້ອງຍໍ-ຊົມເຊີຍ ຈຳນວນ 395 ໃບ ໃຫ້ບັນດາກົມກອງລວມໝູ່ ແລະ ບຸກຄົນ ທີ່ມີຜົນງານໃນການປະກອບສ່ວນເຄື່ອນໄຫວວຽກງານພັດທະນາຕະຫຼາດທຶນລາວ ໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020) ລາຍລະອຽດລຸ່ມນີ້:

**(1) ປະເພດ ໃບຍ້ອງ : ທັງໝົດຈຳນວນ 311 ໃບ (ໃຫ້ 43 ກົມກອງ ແລະ 268 ທ່ານ).**

**(2) ປະເພດ ໃບຊົມເຊີຍ : ທັງໝົດຈຳນວນ 84 ໃບ (ໃຫ້ 13 ກົມກອງ ແລະ 71 ທ່ານ).**

**ມາດຕາ 2** ມອບໃຫ້ ທະນາຄານແຫ່ງ ສປປ ລາວ ຈັດຕັ້ງພິທີມອບໃບຍ້ອງຍໍ-ຊົມເຊີຍໃຫ້ແຕ່ລະ ພາກສ່ວນພ້ອມດ້ວຍບຸກຄົນດັ່ງກ່າວ ຢ່າງສົມກຽດ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2020**
**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີກະຊວງການເງິນ**
**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**
**ເຊັນ ແລະ ປະທັບຕາ**
**ສົມດີ ດວງດີ**

**ບັນດາທ່ານທີ່ນັບຖື ແລະ ຮັກແພງ,**

ມາຮອດນີ້, ກໍ່ໄດ້ສຳເລັດການຜ່ານຂໍ້ຕົກລົງ ວ່າດ້ວຍການມອບໃບຍ້ອງຍໍ-ໃບຊົມເຊີຍ ໃຫ້ກົມກອງລວມໝູ່ ແລະ ບຸກຄົນ ເນື່ອງໃນໂອກາດສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020). ຂ້ອຍພອນໄຊແດ່ ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍບັນດາແຂກທີ່ເຂົ້າຮ່ວມທັງຫຼາຍ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກ-ຄວາມຈະເລີນ ທັງໃນຊີວິດສ່ວນຕົວ ແລະ ຄອບຄົວ ກໍ່ຄືໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ຢ່າງຈົບງາມ.

(-ຂໍຂອບໃຈ-)

## VI. ບົດຄຳເຫັນຂອງ ທ່ານ ສອນໄຊ ສິດພະໄຊ, ຕາງໜ້າຂາຮຸ້ນ ຕລຊລ (ຝ່າຍລາວ)

# ບົດຄຳເຫັນ
# ຕໍ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020)

### ສະເໜີໂດຍ: ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ,
### ຮອງປະທານ ຄຄຊ ຜູ້ປະຈຳການ

ຮຽນ:
- ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;
- ທ່ານ ຮອງລັດຖະມົນຕີ ແລະ ອາດີດຮອງລັດຖະມົນຕີ ທີ່ນັບຖື;
- ທ່ານ ເອກອັກຄະລັດຖະທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ທີ່ນັບຖື;
- ທ່ານ ຄະນະກົມ, ຄະນະອຳນວຍການຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສະມາຊິກພັກ, ພະນັກງານຂອງຂະແໜງການຕະຫຼາດທຶນ ທີ່ນັບຖື;
- ບັນດາທ່ານ ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນ ຕໍ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ໃນມື້ນີ້. ນະໂອກາດທີ່ເຕັມໄປດ້ວຍຄວາມໝາຍຄວາມສຳຄັນນີ້ ຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ແລະ ໃນນາມຕາງໜ້າ ຂາຮຸ້ນຝ່າຍລາວ, ຂ້າພະເຈົ້າ ຂໍນຳເອົາຄວາມຢື້ຢາມຖາມຂ່າວ, ຄວາມເຄົາລົບນັບຖື, ຄວາມສາມັກຄີຮັກແພງ ແລະ ພອນໄຊອັນປະເສີດ ມາຍັງພິທີຂອງພວກທ່ານ ມານະໂອກາດນີ້ດ້ວຍ.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງ,**

ພາຍຫຼັງສຳເລັດການກະກຽມເງື່ອນໄຂພື້ນຖານສຳລັບການສ້າງຕັ້ງຕະຫຼາດທຶນລາວ, ໂດຍໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກລັດຖະບານແຫ່ງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ໄດ້ຖືກມອບໝາຍຈາກລັດຖະບານ ເປັນຜູ້ຕາງໜ້າຂາຮຸ້ນຝ່າຍລາວ ຮ່ວມທຶນກັບ ຕະຫຼາດຫຼັກຊັບ ສ.ເກົາຫຼີ ເພື່ອສ້າງຕັ້ງອົງປະກອບສຳຄັນຂອງຕະຫຼາດທຶນລາວ ທີ່ເອີ້ນວ່າ: ຕະຫຼາດຫຼັກຊັບລາວ ຂຶ້ນ ເພື່ອຕອບສະໜອງແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ໂດຍສະເພາະແມ່ນ ການເຮັດທຸລະກິດ ແລະ ສັງຄົມ ສາມາດເຂົ້າຫາແຫຼ່ງທຶນ ແລະ ການບໍລິການທາງການເງິນ ໃຫ້ສະດວກ ແລະ ງ່າຍດາຍ ແນໃສ່ ເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ຢ່າງຂາດຕົວໃນປີ 2025.

ໃນໄລຍະກະກຽມສ້າງຕັ້ງຕະຫຼາດຫຼັກຊັບລາວ, ຄະນະພັກ, ຄະນະຜູ້ອໍານວຍການ ແລະ ພະນັກງານຂອງທະນາຄານແຫ່ງ ສປປ ລາວ ໄດ້ອຸທິດເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນການກະກຽມຄວາມພ້ອມຮອບດ້ານ ເຮັດໃຫ້ຕະຫຼາດຫຼັກຊັບລາວ ສາມາດສ້າງຕັ້ງຂຶ້ນຕາມແຜນການທີ່ໄດ້ກໍານົດໄວ້ ຄື ວັນທີ 10 ເດືອນ 10 ປີ 2010.

ພາຍຫຼັງຕະຫຼາດຫຼັກຊັບລາວ ໄດ້ຮັບການສ້າງຕັ້ງຂຶ້ນ, ທະນາຄານແຫ່ງ ສປປ ລາວ ໄດ້ປະຕິບັດໜ້າທີ່ຂອງຕົນເປັນຢ່າງດີ ເປັນຕົ້ນແມ່ນ: ໄດ້ປະກອບທຶນຢ່າງພຽງພໍ ເພື່ອດໍາເນີນທຸລະກິດຂອງຕະຫຼາດຫຼັກຊັບລາວ, ໄດ້ສົມທົບກັບຂາຮຸ້ນຝ່າຍ ສ.ເກົາຫຼີ ເພື່ອຄົ້ນຄວ້າແກ້ໄຂບັນຫາທີ່ອຸດຕັນຕໍ່ການເຄື່ອນ ໄຫວທຸລະກິດ ເປັນຕົ້ນແມ່ນບັນຫາລະບົບໄອທີ ເຊິ່ງເປັນໝາກຫົວໃຈສໍາຄັນ ຂອງຕະຫຼາດຫຼັກຊັບລາວ ພ້ອມທັງ ໄດ້ຄົ້ນຄວ້າວາງທິດທາງການພັດທະນາຕະຫຼາດຫຼັກຊັບລາວໃນແຕ່ລະໄລຍະ ເຮັດໃຫ້ຕະຫລາດຫລັກຊັບລາວ ສາມາດເຄື່ອນໄຫວທຸລະກິດຕາມບົດບາດຂອງຕົນໄດ້ໂດຍພື້ນຖານ.

ຄຽງຄູ່ກັນນີ້ ຕະຫຼອດໄລຍະເວລາ 10 ປີ, ທະນາຄານແຫ່ງ ສປປ ລາວ ໄດ້ເປັນເຈົ້າການຄົ້ນຄວ້າບັນຈຸສັບຊ້ອນພະນັກງານວິຊາການ ກ່ຽວຂ້ອງກັບວຽກງານຫຼັກຊັບ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເຊິ່ງເປັນອົງກອນຄຸ້ມຄອງດ້ານມະຫາພາກກ່ຽວກັບວຽກງານຫຼັກຊັບ ເພື່ອຮັບປະກັນການປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ ຄະນະກໍາມະການຄຸ້ມຄອງຫຼັກຊັບໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບ; ໄດ້ບໍາລຸງສ້າງພະນັກງານທາງດ້ານ ທິດສະດີການເມືອງ, ວິຊາສະເພາະຕະຫຼາດທຶນ ແລະ ພາສາຕ່າງປະເທດ ທັງຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ດ້ວຍທຶນຊ່ວຍເຫຼືອລ້າ ຈາກປະເທດເພື່ອນມິດ, ສາກົນ ແລະ ທຶນສົມທົບຂອງທະນາຄານແຫ່ງ ສປປ ລາວຈໍານວນຫຼາຍສົມຄວນ. ນອກຈາກນີ້, ທະນາຄານແຫ່ງ ສປປ ລາວ ໄດ້ຕອບສະໜອງງົບປະມານໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງພຽງພໍກັບຄວາມຈໍາເປັນ ແລະ ທັນເວລາ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ສາມາດເຄື່ອນໄຫວວຽກງານຂອງຕົນໄດ້ຢ່າງຄ່ອງຕົວ, ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ສາມາດເຄື່ອນໄຫວບົນພື້ນຖານລະບຽບການ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນໄດ້ໃນລະດັບດີ.

ໃນການເຄື່ອນໄຫວວຽກງານຕະຫຼາດທຶນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ຕີລາຄາສູງ ຕໍ່ຜົນສໍາເລັດທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຜູ້ມີສ່ວນຮ່ວມຕະຫລາດທຶນ ຍາດມາໄດ້ໃນໄລຍະ 10 ປີທີ່ຜ່ານມາ. ອັນນີ້ ກໍ່ແມ່ນໝາກຜົນແຫ່ງຄວາມສາມັກຄີ, ຄວາມເສຍສະຫຼະ ແລະ ຄວາມຕັດສິນໃຈຜ່ານຜ່າ ສິ່ງຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ຂອງ ສະມາຊິກພັກ-ພະນັກງານ ໃນອົງກອນເລົ່ານີ້ ທີ່ຍາມໃດກໍ່ໄດ້ປະສານສົມທົບຢ່າງກົມກຽວ ເຮັດໃຫ້ວຽກງານຕະຫຼາດທຶນລາວ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເທື່ອລະກ້າວຕາມເງື່ອນໄຂຕົວຈິງພາຍໃນປະເທດ.

ໃນຕໍ່ໜ້າ, ທະນາຄານແຫ່ງ ສປປ ລາວ ຈະສືບຕໍ່ສະໜັບສະໜູນການເຄື່ອນໄຫວຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ຄ່ອງຕົວກວ່າເກົ່າ, ໃຫ້ກາຍເປັນກົນໄກລະດົມທຶນ ແລະ ການລົງທຶນຮູບແບບໃໝ່ທີ່ມີປະສິດທິພາບສູງ ຄຽງຄູ່ກັບກົນໄກຂອງທະນາຄານ, ໄດ້ຮັບຄວາມໜ້າເຊື່ອຖື ຄວາມນິຍົມ ແລະ ຄວາມໜ້າສົນໃຈຈາກທັງຜູ້ຕ້ອງການລະດົມທຶນໄປຂະຫຍາຍທຸລະກິດ ແລະ ຜູ້ລົງທຶນ ເຮັດໃຫ້ຕະຫຼາດເງິນ ຕະຫຼາດທຶນ ມີຄວາມກົມກຽວ ສະໜັບສະໜູນເຊິ່ງກັນ ແລະ ກັນ ໂດຍຈະລົງເລິກປະກອບສ່ວນໃນການ ກໍ່ສ້າງພະນັກງານຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບໃຫ້ມີຄວາມຮູ້ຄວາມສາມາດ ສົມຄູ່ກັບຈັງຫວະການຂະຫຍາຍຕົວຂອງຕະຫຼາດທຶນລາວ ແລະ ປັບປຸງປ່ຽນແປງຕະຫຼາດຫຼັກຊັບລາວ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງ,**

ຜົນງານ 10 ປີ ທີ່ຕະຫຼາດທຶນລາວ ຍາດມາໄດ້ນັ້ນ ແມ່ນມີຄວາມໝາຍສໍາຄັນ ແລະ ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງຕະຫຼາດທຶນ, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນຢ່າງສູງ ມາຍັງການນໍາທຸກຂັ້ນທີ່ໄດ້ໃຫ້ການຊີ້ນໍາ-ນໍາພາຢ່າງໃກ້ສິດ ແລະ ຕໍ່ເນື່ອງ ຈົນເຮັດໃຫ້ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດທຶນລາວມີຜົນສໍາເລັດ, ຂໍຂອບໃຈມາຍັງ ສະມາຊິກພັກ-ພະນັກງານຂອງຂະແໜງຕະຫຼາດທຶນທັງໝົດ ແຕ່ຮຸ່ນອາດີດ ຈົນເຖິງປະຈຸບັນ ທີ່ໄດ້ສຸມທຸກເຫື່ອແຮງ ແລະ ສະຕິປັນຍາໃນການປະກອບສ່ວນເຂົ້າໃນການເຄື່ອນໄຫວ ວຽກງານຕະຫຼາດທຶນຕະຫຼອດໄລຍະ 10 ປີ. ຂໍສະແດງຄວາມຂອບໃຈ ຕໍ່ພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ໃຫ້ການຊ່ວຍເຫລືອດ້ານວິຊາການໃນຂົງເຂດຕະຫລາດທຶນດ້ວຍດີຕະຫລອດມາ.

ນະໂອກາດອັນມີຄວາມໝາຍນີ້, ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍອວຍພອນໄຊອັນປະເສີດ ມາຍັງ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈົ່ງມີພາລານາໄມສົມບູນ, ມີຄວາມສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ, ສືບຕໍ່ຊີ້ນໍາ-ນໍາພາວຽກງານຕະຫຼາດທຶນ ກ້າວຂຶ້ນຕາມຈຸດໝາຍທີ່ໄດ້ກໍານົດໄວ້. ຂໍອວຍພອນແດ່ ບັນດາທ່ານ ການນໍາ ແລະ ສະມາຊິກພັກ-ພະນັກງານທັງຮຸ່ນກໍ່ຕັ້ງ ແລະ ຮຸ່ນສືບທອດ ພ້ອມດ້ວຍແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ມີພາລານາໄມສົມບູນ ແລະ ມີຜົນສໍາເລັດໃນໜ້າທີ່ການເມືອງຂອງບັນດາທ່ານ ທຸກປະການ.

ຂໍອວຍພອນໃຫ້ຕະຫຼາດທຶນລາວ ປະສົບຜົນສໍາເລັດຢ່າງຈົບງາມ.

**ຂໍຂອບໃຈ**

## VII. ບົດຄຳເຫັນຂອງ ທ່ານ ຈອງຈີວອນ ຕາງໜ້າຂາຣຸ້ນຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ (KRX)

# ບົດຄຳເຫັນ (ຜ່ານວີດີໂອ)
# ຕໍ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020)

### ສະເໜີໂດຍ: ທ່ານ ຈອງຈີວອນ ຕາງໜ້າຂາຣຸ້ນຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ (KRX)

ສະບາຍດີບັນດາທ່ານ, ຂ້າພະເຈົ້າ ຈອງຈີວອນ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບ ສ.ເກົາຫຼີ. ກ່ອນອື່ນໝົດ ຂໍສະແດງຄວາມຍິນດີ ເນື່ອງໃນໂອກາດວັນສ້າງຕັ້ງຕະຫຼາດທຶນລາວ ຄົບຮອບ 10 ປີ, ຂໍສະແດງຄວາມເຄົາລົບນັບຖື ແລະ ຂໍຂອບໃຈມາຍັງທ່ານ ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ພ້ອມດ້ວຍການນຳທຸກພາກສ່ວນ ທີ່ໄດ້ທຸ່ມເທ ໃຫ້ຕະຫຼາດທຶນລາວ ກໍ່ຄືຕະຫຼາດຫຼັກຊັບລາວກ້າວໜ້າມາຮອດຈຸດນີ້ໄດ້. ພິເສດ ຂໍຊົມເຊີຍ ແລະ ສົ່ງກຳລັງໃຈໃຫ້ ແກ່ ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ພ້ອມດ້ວຍຄະນະ ແລະ ພະນັກງານທຸກທ່ານ.

ຂ້າພະເຈົ້າ ມີຄວາມປະສົງທີ່ຈະເຂົ້າຮ່ວມງານທີ່ມີຄວາມໝາຍ ຄວາມສຳຄັນນີ້ເປັນຢ່າງຍິ່ງ ແຕ່ເນື່ອງຈາກການ ລະບາດຂອງພະຍາດ COVID-19 ຈຶ່ງເຮັດໃຫ້ຂ້າພະເຈົ້າບໍ່ສາມາດເຂົ້າຮ່ວມງານໄດ້ ແລະ ຂ້າພະເຈົ້າ ເອງກໍ່ຮູ້ສຶກ ເສຍດາຍເປັນຢ່າງສູງ ຫວັງວ່າທຸກທ່ານຈະຍິນດີ ທີ່ຂ້າພະເຈົ້າອວຍພອນຜ່ານວີດີໂອນີ້.

ບັນດາແຂກທີ່ມີກຽດທຸກທ່ານ, ຕະຫຼອດໄລຍະເວລາທີ່ຜ່ານມາ ຕະຫຼາດຫຼັກຊັບລາວ ໄດ້ສະໜອງເວທີໃນ ການລະດົມທຶນໃຫ້ແກ່ບໍລິສັດຕ່າງໆ ພ້ອມທັງ ນຳໜ້າໃນການພັດທະນາຕະຫຼາດທຶນ ແລະ ເສດຖະກິດຂອງຊາວ ລາວ ໂດຍຈັດສັນໂອກາດໃນການລົງທຶນຕ່າງໆ ນັບຕັ້ງແຕ່ມື້ສ້າງຕັ້ງຕະຫຼາດຫຼັກຊັບລາວ ໃນປີ 2010 ພວກເຮົາກໍ່ ໄດ້ພະຍາຍາມຢ່າງຕໍ່ເນື່ອງ ທີ່ຈະນຳເອົາບໍລິສັດທີ່ມີຄວາມພ້ອມ ເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະແດງ ອອກໃນ ປີ 2013 ລະບົບການຊື້-ຂາຍ ແບບ Home Trading System ໄດ້ຖືກນຳເຂົ້າມາໃຊ້ ເພື່ອ ປະກອບສ່ວນສຳຄັນທາງການຕະຫຼາດ ສຳລັບການເຄື່ອນໄຫວທຸລະກຳຕ່າງໆ. ພ້ອມກັນນັ້ນ, ໃນປີ 2018 ພັນທະບັດລັດຖະບານ ທີ່ອອກໂດຍກະຊວງການເງິນ ກໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ມີຈຳນວນ ເພີ່ມຂຶ້ນເລື້ອຍໆ ຈົນເຮັດໃຫ້ຕະຫຼາດຫຼັກຊັບລາວ ມີຜະລິດຕະພັນໃໝ່ທີ່ມີຄວາມຫຼາກຫຼາຍຍິ່ງຂຶ້ນ. ປັດຈຸບັນ, ຕະຫຼາດຫຼັກຊັບລາວ ມີບໍລິສັດຈົດທະບຽນ 11 ແຫ່ງ ເຊິ່ງມີບົດບາດສຳຄັນ ແລະ ເປັນພື້ນຖານໂຄງລ່າງຫຼັກ ໃນ ຕະຫຼາດທຶນຂອງ ສປປ ລາວ.

ຢ່າງໃດກໍ່ຕາມ, ຕະຫຼາດຫຼັກຊັບລາວ ສາມາດບັນລຸຜົນສຳເລັດໄດ້ດັ່ງທຸກວັນນີ້ ກໍ່ຍ້ອນການທຸ່ມເທ ເຮັດວຽກ ຂອງບັນດາທ່ານ ທີ່ຢູ່ໃນຕະຫຼາດທຶນລາວ ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມເຄົາລົບ ແລະ ຮູ້ບຸນຄຸນຢ່າງ ເລິກເຊິ່ງ ມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ໃນປີ 2010 ຕະຫຼາດຫຼັກຊັບເກົາຫຼີ ເປັນສ່ວນໜຶ່ງຂອງທຸລະກິດໂລກ ແລະ ໄດ້ມີສ່ວນຮ່ວມໃນການເປີດທຸລະກິດຕະຫຼາດຫຼັກຊັບໃນ ສປປ ລາວ ເຊິ່ງໄລຍະ 10 ປີຜ່ານມາ ພວກເຮົາກໍ່ໄດ້

ບຸກບືນພະຍາຍາມເຕັມທີ່ ເພື່ອເຮັດໃຫ້ຕະຫຼາດຫຼັກຊັບລາວມີການຈະເຕີບໂຕໄດ້ດັ່ງທຸກວັນນີ້. ໃນນາມອຳນວຍການໃຫຍ່ຕະຫຼາດຫຼັກຊັບ ສ.ເກົາຫຼີ ຂ້າພະເຈົ້າຂໍສະແດງຄວາມຍິນດີເປັນຢ່າງຍິ່ງ ໃນນາມຄູ່ຮ່ວມທຶນມາຕະຫຼອດ 10 ປີ ຕະຫຼາດຫຼັກຊັບ ສ.ເກົາຫຼີ ຫວັງວ່າຕະຫຼາດທຶນລາວຂອງພວກເຮົາ ຈະໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ.

ບັນດາແຂກທີ່ມີກຽດທຸກທ່ານ, ປັດຈຸບັນ ເສດຖະກິດໂລກກຳລັງຜະເຊີນກັບຊ່ວງເວລາທີ່ທ້າທາຍ ຍ້ອນຄວາມກັງວົນຕໍ່ການຂະຫຍາຍຕົວຊ້າຂອງເສດຖະກິດ ລວມທັງ ການແຜ່ລະບາດຂອງພະຍາດ COVID-19 ກໍ່ຍິ່ງເຮັດໃຫ້ມີຄວາມຫຍຸ້ງຍາກທີ່ເພີ່ມທະວີຂຶ້ນ. ເຖິງຢ່າງໃດກໍ່ຕາມ ປະສົບການທີ່ສະສົມມາໄລຍະເວລາ 10 ປີນັ້ນ ຖ້າເປັນຄວາມພະຍາຍາມທີ່ແທ້ຈິງ ຂ້າພະເຈົ້າຄິດວ່າ ພວກທ່ານຈະເອົາຊະນະທຸກບັນຫາໄດ້ ແລະ ໃນ 10 ປີຕໍ່ໜ້າ ຕະຫຼາດທຶນກໍ່ຍິ່ງຈະມີການພັດທະນາ ແລະ ເຕີບໂຕທີ່ດີຂຶ້ນກວ່າເດີມໄດ້.

ສຸດທ້າຍນີ້, ຂ້າພະເຈົ້າຂໍຊົມເຊີຍວັນສ້າງຕັ້ງຕະຫຼາດຫຼັກຊັບລາວ ຄົບຮອບ 10 ປີ ອີກຄັ້ງໜຶ່ງ ແລະ ຂໍອວຍພອນໃຫ້ທຸກທ່ານ ທີ່ມີສ່ວນຮ່ວມໃນຕະຫຼາດທຶນ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ.

ຂໍຂອບໃຈ

## VIII. ບົດຄຳເຫັນຂອງ ທ່ານ SHIN Sung-soon ເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມແຫ່ງ ສ.ເກົາຫຼີ ປະຈຳ ສປປ ລາວ

# ບົດຄຳເຫັນ
# ຕໍ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020)

### ສະເໜີໂດຍ: ທ່ານ ຊິນຊອງຊຸນ, ເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມ ແຫ່ງ ສ. ເກົາຫຼີ ປະຈຳ ສປປ ລາວ

H.E. Mr. Somdy Duangdy, Deputy Prime Minister and Minister of Finance,

H.E. Mr. Sonexay Sithphaxay, Governor of the Bank of the Lao PDR,

H.E. Madame Saysomone Chanthachack, Secretary General of Lao Securities Commissions,

H.E. Mr. Oth Phonxiendy, CEO of the Lao Securities Exchange (LSX),

Distinguished guests, ladies and gentlemen,

First of all, I′d like to extend my sincere congratulations on the 10th Anniversary of the Lao Capital Market. It is my great honor to be here with Deputy Prime Minister Somdy and honorable guests at this historic moment.

Security market is often called as ″the heart of market economy.″ Only if a heart in our body ceaselessly pumps the blood to circulate throughout the body and deliver oxygen, can the body be vitalized. It is same for a security market. Security market should supply necessary capital resources for an economy at a suitable time and place, then and not till then, the economy can get vitalized.

In this regard, the decision of the Bank of the Lao PDR and the Korea Exchange (KRX) to sign the Joint Venture Agreement and establish a security market in 2010 was a ground-breaking step that showed the Lao Government′s determination to create business-friendly environment that can drive Lao companies to actively do their business in more innovative and future-oriented manner. As a friend of the Lao PDR, I am very pleased with and proud of the fact that the Republic of Korea has been together with the Lao PDR from the historic moment up to now.

I am convinced that the LSX, with just its existence, has been playing a significant role in the Lao economy over the last decade. As a lighthouse, the LSX has continuously reminded Lao enterprises of an important message that, companies could mobilize tremendous financial resources through the capital market only if they endeavor to do their business in a sound and transparent way and gain trust from the market. I believe that Lao companies have been

definitely preparing their future business with this point in mind.

In this regard, I believe we should not underestimate the current situation that 11 companies have been listed for the past 10 years. I have a confidence that the capital market and Lao companies have accumulated sufficient momentum to jump to the next stage, with a robust 6% economic growth rate for the last decade and the Lao government′s strategic vision for the next decade, such as graduation from the Least Developed Country (LDC) and transformation from a landlocked to land-linked country.

Now is the right time that more companies, with self-confidence, step forward boldly to the future growth by actively taking advantage of the existing capital market.

As a Lao′s good friend as well as a reliable partner who has been together with the Lao PDR from the beginning of the Lao capital market, the Republic of Korea hopes to continue to cooperate with the Lao PDR in this field for our mutual prosperity. Mutual prosperity is one of the goals that the Korean Government is pursing as a part of the New Southern Policy that aims to elevate the ASEAN-Korea partnership to a heightened level of shared value and interest.

I believe we can find out many ways to share Korea′s experiences and know-how to vitalize the capital market through various ODA projects. For example, KOICA in cooperation with the Bank of the Lao PDR, had invited 8 Lao officials in 2010 to share Korea′s experiences of establishing its own security market. My Embassy will spare no efforts to find out and fully support possible ways to invigorate the Lao Securities Exchange, the heart of the Lao economy as well as a symbolic joint venture between the Republic of Korea and the Lao PDR.

Once again, I would like to express my sincere congratulation to the Lao Securities Exchange, the Bank of the Lao PDR and the Lao Government. And looking forward to even deeper cooperation with the Lao PDR in the coming years, I would like to wish all of you every success, good health and happiness.

Thank you.

# ບົດຄຳເຫັນ
# ຕໍ່ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ
## (ສະບັບແປພາສາລາວບໍ່ເປັນທາງການ)

**ສະເໜີໂດຍ: ທ່ານ ຊິນຊອງຊຸນ, ເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມ ແຫ່ງ ສ. ເກົາຫຼີ ປະຈຳ ສປປ ລາວ**

ຮຽນ: - ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ;

- ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ;
- ທ່ານ ນ. ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
- ທ່ານ ອອ໊ດ ພົນຊຽງດີ, ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ;
- ບັນດາທ່ານແຂກທີ່ມີກຽດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ກ່ອນອື່ນໝົດ ຂ້າພະເຈົ້າ ຂໍສະແດງຄວາມປິຕິຍິນດີເປັນຢ່າງຍິ່ງນະໂອກາດຄົບຮອບ 10 ປີ ຕະຫຼາດທຶນຂອງ ສປປ ລາວ. ຂ້າພະເຈົ້າ ຮູ້ສຶກເປັນກຽດ ແລະ ພາກພູມໃຈ ທີ່ໄດ້ເຂົ້າຮ່ວມ ພິທີທີ່ມີຄວາມໝາຍຄວາມສຳຄັນ ທີ່ເປັນປະຫວັດສາດ ໃນມື້ນີ້ ຮ່ວມກັບ ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ແລະ ບັນດາແຂກທີ່ມີກຽດ ທັງໝົດ.

ຕະຫຼາດຫຼັກຊັບ ຖືກຂະໜານນາມເລື້ອຍໆວ່າແມ່ນ “ຫົວໃຈຂອງເສດຖະກິດຕະຫຼາດ”. ຖ້າປຽບທຽບໃສ່ຮ່າງກາຍຂອງຄົນເຮົາ ມີແຕ່ຫົວໃຈເທົ່ານັ້ນ ທີ່ເຮັດໜ້າທີ່ສູບສີດເລືອດ ໃຫ້ໄຫຼວຽນໄປທົ່ວຮ່າງກາຍຢ່າງບໍ່ຢຸດຢັ້ງ ແລະ ສົ່ງອອກຊີເຈັນ ໃຫ້ຮ່າງກາຍມີຊີວິດໄດ້ ບໍ່ຕ່າງຫຍັງກັບຕະຫຼາດຫຼັກຊັບ. ຕະຫຼາດຫຼັກຊັບ ຕ້ອງສະໜອງແຫຼ່ງເງິນທຶນທີ່ຈຳເປັນ ສຳລັບເສດຖະກິດ ໃນເວລາ ແລະ ສະຖານທີ່ ທີ່ເໝາະສົມ ຈຶ່ງຈະເຮັດໃຫ້ເສດຖະກິດເຕີບໂຕຢ່າງມີຊີວິດຊີວາ.

ສະນັ້ນ ການຕັດສິນໃຈຂອງ ທະນາຄານແຫ່ງ ສປປ ລາວ ແລະ ຕະຫຼາດຫຼັກຊັບ ສ. ເກົາຫຼີ ໃນການເຊັນສັນຍາຮ່ວມທຶນ ແລະ ສ້າງຕັ້ງຕະຫຼາດຫຼັກຊັບລາວ ຂຶ້ນໃນປີ 2010 ແມ່ນບາດກ້າວທີ່ສຳຄັນສະແດງໃຫ້ເຫັນຄວາມມຸ່ງໝັ້ນຂອງ ລັດຖະບານ ສປປ ລາວ ໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການເຄື່ອນໄຫວທຸລະກິດ ຊຶ່ງໄດ້ຊຸກຍູ້ສົ່ງເສີມບັນດາວິສາຫະກິດ ຢູ່ ສປປ ລາວ ໃຫ້ສາມາດດຳເນີນທຸລະກິດ ໃນລັກສະນະນະທີ່ເປັນນະວັດຕະກຳ ແລະ ສົມບູນຫຼາຍຂຶ້ນ. ໃນຖານະເປັນເພື່ອນມິດ ຂອງ ສປປ ລາວ, ຂ້າພະເຈົ້າຮູ້ສຶກຍິນດີ ແລະ ພາກພູມໃຈຢ່າງຍິ່ງ ທີ່ ສ. ເກົາຫຼີ ແລະ ສປປ ລາວ ໄດ້ຮ່ວມເສັ້ນທາງດຽວກັນ ນັບແຕ່ເລີ່ມຕົ້ນ ຈົນຮອດປັດຈຸບັນ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ການສ້າງຕັ້ງຕະຫຼາດຫຼັກຊັບລາວ ມີບົດບາດສຳຄັນ ຕໍ່ ເສດຖະກິດ ຂອງ ສປປ ລາວ ໃນໄລຍະໜຶ່ງທົດສະຫວັດທີ່ຜ່ານມາ. ຕະຫຼາດຫຼັກຊັບລາວ ໄດ້ສືບຕໍ່ສົ່ງສັນຍານ ຫຼື ຂໍ້ຄວາມທີ່ສຳຄັນ ໃຫ້ບັນດາວິສາຫະກິດ ຢູ່ໃນ ສປປ ລາວ ວ່າ ບັນດາວິສາຫະກິດ ຈະລະດົມຊັບພະຍາກອນທາງການເງິນ ຈຳນວນຫຼາຍ ຜ່ານຕະຫຼາດທຶນ ໄດ້ກໍ່ຕໍ່ເມື່ອ ວິສາຫະກິດດັ່ງກ່າວ ເຄື່ອນໄຫວທຸລະກິດໃນທາງທີ່ດີ ແລະ ໂປ່ງໃສ ແລະ ໄດ້ຮັບຄວາມເຊື່ອໝັ້ນຈາກຕະຫຼາດທຶນ. ຂ້າພະເຈົ້າ ເຊື່ອໝັ້ນວ່າບັນດາວິສາຫະກິດ ຢູ່ ສປປ ລາວ ຈະກະກຽມຄວາມພ້ອມໃຫ້ແກ່ທຸລະກິດຕົນໃນຕໍ່ໜ້າ ໂດຍຄຳນຶງຂໍ້ຄວາມດັ່ງກ່າວ.

ສະນັ້ນ ຂ້າພະເຈົ້າ ເຊື່ອໝັ້ນວ່າ ພວກເຮົາ ບໍ່ຄວນປະເມີນສະພາບປັດຈຸບັນ ຕໍ່າຈົນເກີນໄປ ເຖິງວ່າ ຈະມີພຽງ

11 ບໍລິສັດ ທີ່ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນໄລະຍະ 10 ປີຜ່ານມາ. ຂ້າພະເຈົ້າ ໝັ້ນໃຈວ່າ ຕະຫຼາດ ທຶນ ແລະ ວິສາຫະກິດ ຢູ່ ສປປ ລາວ ໄດ້ກະກຽມຈັງຫວະທີ່ດີ ທີ່ຈະກ້າວໄປໃນບາດກ້າວໃໝ່ ໂດຍມີອັດຕາການ ຂະຫຍາຍຕົວທາງດ້ານເສດຖະກິດທີ່ສູງສົມຄວນ ປະມານ 6 ເປີເຊັນ ໃນໄລຍະໜຶ່ງທົດສະວັດ ທີ່ຜ່ານມາ ແລະ ວິ ໃສທັດການວາງຍຸດທະສາດຂອງ ລັດຖະບານ ແຫ່ງ ສປປ ລາວ ສໍາລັບ ທົດສະຫວັດຕໍ່ໜ້າ ເປັນຕົ້ນ ໃຫ້ປະເທດສາ ມາດຫຼຸດພົ້ນຈາກສະຖານະພາບ ປະເທດທີ່ດ້ອຍພັດທະນາ ແລະ ການປະຕິຮູບຈາກ ປະເທດ ທີ່ບໍ່ມີ ທາງອອກສູ່ ທະເລ ກາຍເປັນ ປະເທດທີ່ສາມາດເຊື່ອມຈອດກັບປະເທດອື່ນໄດ້.

ປັດຈຸບັນ ເຫັນວ່າເປັນເວລາທີ່ເໝາະສົມແລ້ວ ທີ່ບັນດາວິສາຫະກິດ ທີ່ມີຄວາມພ້ອມ ແລະ ຄວາມໝັ້ນໃຈ ໃນການກ້າວໄປຕໍ່ໜ້າຢ່າງຕັ້ງໜ້າ ເພື່ອການຂະຫຍາຍຕົວທາງທຸລະກິດ ໂດຍການໝູນໃຊ້ປະໂຫຍດ ຈາກ ຕະຫຼາດ ທຶນ.

ໃນນາມເພື່ອນມິດທີ່ດີ ແລະ ຄູ່ຮ່ວມທຸລະກິດ ທີ່ມີຄວາມໜ້າເຊື່ອຖື ທີ່ໄດ້ຮ່ວມທຸລະກິດ ກັບ ສປປ ລາວ ນັບແຕ່ການເລີ່ມຕົ້ນ ຂອງຕະຫຼາດທຶນ ສປປ ລາວ, ສ. ເກົາຫຼີ ພ້ອມທີ່ຈະສືບຕໍ່ໃຫ້ການຮ່ວມມື ກັບ ສປປ ລາວ ໃນຂະແໜງຕະຫຼາດທຶນ ເພື່ອຄວາມຈະເລີນຮຸ່ງເຮືອງຮ່ວມກັນ. ຄວາມຈະເລີນຮຸ່ງເຮືອງຮ່ວມກັນ ແມ່ນໜຶ່ງໃນເປົ້າ ໝາຍ ທີ່ ລັດຖະບານ ແຫ່ງ ສ. ເກົາຫຼີ ກໍາລັງດໍາເນີນການ ໃນຖານະທີ່ເປັນສ່ວນໜຶ່ງຂອງ ນະໂຍບາຍພາກໃຕ້ໃໝ່ ຊຶ່ງມີຈຸດປະສົງໃນການກະຕຸ້ນການຮ່ວມມືລະຫວ່າງ ອາຊຽນ ແລະ ສ. ເກົາຫຼີ ໃຫ້ມີມູນຄ່າ ແລະ ຜົນປະໂຫຍດ ຮ່ວມກັນ ໃນລະດັບທີ່ສູງຂຶ້ນ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ພວກເຮົາສາມາດຊອກຫາຫຼາກຫຼາຍວິທີ ໃນການແບ່ງປັນປະສົບການ ແລະ ຄວາມ ຮູ້ຂອງ ສ. ເກົາຫຼີ ເພື່ອເຮັດໃຫ້ຕະຫຼາດທຶນມີຊີວິດຊີວາຍິ່ງຂຶ້ນ ຜ່ານໂຄງການຊ່ວຍເຫຼືອເພື່ອການພັດທະນາ (ODA) ຕ່າງໆ ຕົວຢ່າງ ອົງການ KOICA ໄດ້ຮ່ວມມືກັບ ທະນາຄານແຫ່ງ ສປປ ລາວ ໂດຍການເຊີນພະນັກງານ ຈໍານວນ 8 ທ່ານ ເພື່ອແລກປ່ຽນປະສົບການ ແລະ ບົດຮຽນຂອງ ສ. ເກົາຫຼີ ກ່ຽວກັບ ການສ້າງຕັ້ງຕະຫຼາດຫຼັກຊັບ ໃນປີ 2010. ສະຖານທູດ ສ. ເກົາຫຼີ ປະຈໍາ ສປປ ລາວ ຈະບໍ່ລະເວັ້ນຄວາມພະຍາຍາມໃນການຊອກຫາ ແລະ ສະໜັບ ສະໜູນແນວທາງທີ່ເປັນໄປໄດ້ໃນການພັດທະນາຕະຫຼາດຫຼັກຊັບລາວຢ່າງເຕັມທີ່ ກໍ່ຄື ຫົວໃຈຂອງ ເສດຖະກິດລາວ ລວມທັງ ການຮ່ວມທຶນລະຫວ່າງ ສ. ເກົາຫຼີ ແລະ ສປປ ລາວ.

ອີກເທື່ອໜຶ່ງ, ຂ້າພະເຈົ້າ ຂໍສະແດງຄວາມປະຕິຍິນດີຢ່າງຍິ່ງ ຕໍ່ ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສປປ ລາວ ແລະ ຫວັງຢ່າງຍິ່ງວ່າຈະໄດ້ຮ່ວມມື ກັບ ສປປ ລາວ ຢ່າງເລິກ ເຊິ່ງ ຍິ່ງຂຶ້ນ ໃນຊຸມປີຕໍ່ໜ້າ. ຂ້າພະເຈົ້າ ຂໍອວຍພອນໃຫ້ທຸກທ່ານປະສົບຜົນສໍາເລັດໃນໜ້າທີ່ການເມືອງ ຂອງທ່ານ, ມີສຸ ຂະພາບແຂງແຮງ ແລະ ມີຄວາມສຸກ.

ຂໍຂອບໃຈ

## IX. ບົດຄຳເຫັນໂອ້ລົມຂອງຂັ້ນເທິງ

**ບົດໂອ້ລົມ**

**ໃນພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (2010-2020) ຄັ້ງວັນທີ: 30 ຕຸລາ 2020**

**ໂດຍ: ທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ,**

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

- ທ່ານ ຮອງລັດຖະມົນຕີ ແລະ ອາດີດຮອງລັດຖະມົນຕີ ທີ່ນັບຖື;
- ທ່ານ ເອກອັກຄະລັດຖະທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ທີ່ນັບຖື;
- ຄະນະກົມຈາກບັນດາກະຊວງ, ຄະນະອຳນວຍການຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ສະມາຊິກພັກ, ພະນັກງານຂອງຂະແໜງການຕະຫຼາດທຶນ ທີ່ນັບຖື;
- ບັນດາທ່ານ ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ຂ້າພະເຈົ້າ ມີຄວາມປິຕິຍິນດີ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຮັບກຽດເຂົ້າຮ່ວມ ແລະ ມີຄຳເຫັນ ໃນພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ ໃນຄັ້ງນີ້. ຕາງໜ້າໃຫ້ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຄະນະຮັບຜິດຊອບ ທີ່ໄດ້ເປັນເຈົ້າການຫ້າງຫາກະກຽມ ແລະ ສາມາດດຳເນີນພິທີອັນມີຄວາມສຳຄັນໃນຄັ້ງນີ້.

ໃນໂອກາດທີ່ເຕັມໄປດ້ວຍຄວາມເບີກບານມ່ວນຊື່ນ ແລະ ມີຄວາມໝາຍສຳຄັນນີ້, ຂ້າພະເຈົ້າ ຂໍນຳເອົາຄວາມຢື້ຢາມຖາມຂ່າວອັນອົບອຸ່ນ, ຄວາມເປັນຫ່ວງເປັນໃຍ, ຄວາມສາມັກຄີຮັກແພງ ແລະ ພອນໄຊອັນປະເສີດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ມາຍັງ ບັນດາທ່ານແຂກທີ່ມີກຽດ ຕະຫຼອດຮອດພະນັກງານອາວຸໂສບຳນານໃນຂົງເຂດວຽກງານຕະຫຼາດທຶນ ມານະໂອກາດນີ້ດ້ວຍ.

**ບັນດາທ່ານທີ່ຮັກແພງ,**

ຕະຫຼາດທຶນລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນທ່າມກາງ ທີ່ພັກ ແລະ ລັດຖະບານ ສປປ ລາວ ກຳລັງສຸມໃສ່ພັດທະນາຕົນເອງຕາມຍຸດທະສາດຂອງການພັດທະນາປະເທດ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ເພື່ອເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ໃນປີ 2025, ສ້າງບາດລ້ຽວໃໝ່ໃນການພັດທະນາປະເທດ ໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງລະດັບສູງ ໃນປີ 2030 (High-Middle Income Country) ຕາມທິດສະດີເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ.

ພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວໃນຄັ້ງນີ້ ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍ ຕົວຂອງ ຕະຫຼາດການເງິນຂອງ ສປປ ລາວ ທີ່ມີບາດກ້າວເດີນຢ່າງໜັກແໜ້ນ ໄປຄຽງຄູ່ກັບຂະແໜງການ ອື່ນໆໃນການ ປະຕິບັດ 2 ໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມແນວທາງ ປ່ຽນແປງໃໝ່ ທີ່ມີຫຼັກການຂອງພັກ ໂດຍສະເພາະແມ່ນ ການສະໜອງແຫຼ່ງທຶນໄລຍະຍາວ ໃຫ້ແກ່ພາກສ່ວນ ເສດຖະກິດ ເພື່ອພັດທະນາ ແລະ ຂະຫຍາຍກິດຈະການທາງດ້ານ ການຜະລິດ, ການຄ້າ ແລະ ການບໍລິການ.

ຕະຫຼອດໄລຍະ 10 ປີທີ່ຜ່ານມາ, ໃນທ່າມກາງສະພາບການຂອງໂລກ ແລະ ພາກພື້ນ ໄດ້ມີການຜັນແປຢ່າງ ສະຫຼັບສັບຊ້ອນ ແລະ ຄາດຄະເນໄດ້ຍາກ ໂດຍສະເພາະແມ່ນ ສະພາບຂໍ້ຂັດແຍ່ງດ້ານການຄ້າ, ການເໜັງຕີງຂອງ ລາຄາຮຸ້ນ, ອັດຕາແລກປ່ຽນ, ອັດຕາດອກເບ້ຍ, ລາຄາຄຳ, ລາຄານ້ຳມັນ, ລາຄາສະບຽງອາຫານ ແລະ ຄວາມບໍ່ ສະຫງົບທາງດ້ານການເມືອງ ສົມທົບກັບພະຍາດລະບາດຮ້າຍແຮງ ເຮັດໃຫ້ຕະຫຼາດການເງິນຜັນຜວນແຮງ ແລະ ເສດຖະກິດຝືດເຄືອງ. ໃນຂະນະທີ່ຢູ່ປະເທດເຮົາ ເຖິງແມ່ນວ່າ ສະຖຽນລະພາບທາງດ້ານການເມືອງມີຄວາມໜັກ ແໜ້ນ ແຕ່ການພັດທະນາເສດຖະກິດ-ສັງຄົມ ໄດ້ປະເຊີນສິ່ງທ້າທາຍຫຼາຍດ້ານ ເປັນຕົ້ນແມ່ນ ບັນຫາການຂາດດຸນ ງົບປະມານ ແລະ ການຂາດດຸນການຄ້າ ທີ່ຢູ່ໃນລະດັບສູງ, ພັນທະໃນການຊຳລະໜີ້ກັບຕ່າງປະເທດ ທີ່ໄດ້ເພີ່ມຂຶ້ນ ຢ່າງຕໍ່ເນື່ອງ, ສະພາບໜີ້ສິນພາຍໃນຄຸມເຄືອ ຍັງບໍ່ສາມາດແກ້ໄຂໄດ້ຢ່າງຂາດຕົວ, ພື້ນຖານເສດຖະກິດພາຍໃນທີ່ ອ່ອນນ້ອຍ ທັງປະເຊີນກັບໄພທຳມະຊາດ ແລະ ພະຍາດລະບາດຢ່າງໜັກໜ່ວງ. ທັງໝົດນີ້ ໄດ້ສົ່ງຜົນກະທົບບໍ່ໜ້ອຍ ຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍ່ຄືການພັດທະນາຕະຫຼາດທຶນລາວ ພໍສົມຄວນ.

ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ການຊີ້ນຳ-ນຳພາຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ, ຄະນະບໍລິ ຫານຂອງ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ບວກກັບ ຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈສູງ ໃນການປະຕິບັດໜ້າທີ່ ຂອງ ສະມາຊິກພັກ-ພະນັກງານ ໃນຂະແໜງຕະຫຼາດທຶນ ແລະ ສິ່ງທີ່ຂາດບໍ່ໄດ້ແມ່ນ ການຮ່ວມມືຈາກບັນດາ ກະຊວງ, ຂະແໜງການ ແລະ ການຊ່ວຍເຫຼືອຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຂອງ ບັນດາປະເທດ ASEAN ແລະ ASEAN+3, ບັນດາອົງການຈັດຕັ້ງຕ່າງໆ ຈຶ່ງເຮັດໃຫ້ຕະຫຼາດທຶນລາວ ໄດ້ຮັບ ການພັດທະນາຢ່າງຕໍ່ເນື່ອງ ເຊິ່ງ ສະແດງອອກບາງດ້ານ ດັ່ງນີ້:

1) ຂະແໜງຕະຫຼາດທຶນ ໄດ້ມີນິຕິກຳຢ່າງເປັນລະບົບຄົບຊຸດ ພໍສົມຄວນ ເພື່ອເປັນບ່ອນອີງໃນການຄຸ້ມຄອງ ແລະ ການເຄື່ອນໄຫວຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ. ພ້ອມນີ້, ລັດຖະບານ ກໍ່ໄດ້ ມີນະໂຍບາຍທີ່ແທດ ເໝາະ ແລະ ສອດຄ່ອງ ໃນແຕ່ລະໄລຍະ ເປັນຕົ້ນແມ່ນ: ການຫຼຸດອັດຕາອາກອນ ສຳລັບບໍລິສັດຈົດທະບຽນ, ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນທີ່ເປັນສະຖາບັນການເງິນ ເພື່ອຊຸກຍູ້ການພັດທະນາຕະຫຼາດ ທຶນ; ການໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບ ບັນດາທ່ານໄດ້ເຮັດຢ່າງກ້ວາງຂວາງ ແລະ ມີຈຸດສຸມ ເຮັດໃຫ້ສັງຄົມຄ່ອຍໆຮັບຮູ້ກ່ຽວກັບວຽກງານຫຼັກຊັບ ເທື່ອລະກ້າວ ແລະ ໄດ້ປະກອບສ່ວນໃນວຽກງານ ຕະຫຼາດທຶນຕາມບົດບາດຂອງຕົນ;
2) ໄດ້ສ້າງເງື່ອນໄຂໃຫ້ລັດຖະບານ ແລະ ວິສາຫະກິດ ສາມາດລະດົມແຫຼ່ງທຶນໄລຍະຍາວ ໂດຍຜ່ານການ ອອກຈຳໜ່າຍພັນທະບັດລັດຖະບານ, ອອກຮຸ້ນຢູ່ພາຍໃນປະເທດ ແລະ ອອກຮຸ້ນກູ້ຢູ່ຕ່າງປະເທດ ເຊິ່ງ ສາມາດລະດົມທຶນໄດ້ທັງໝົດ 23.016 ຕື້ກີບ ກວມເອົາ 14,03% ຂອງ GDP ເຊິ່ງແຫຼ່ງທຶນດັ່ງກ່າວ ໄດ້ ຖືກໝູນໃຊ້ເຂົ້າໃນການຜະລິດທຸລະກິດ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການພັດທະນາ

ເສດຖະກິດ-ສັງຄົມ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນເທື່ອລະກ້າວ ທັງເປັນກົນໄກສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ;

3) ມີກົນໄກການຊື້-ຂາຍທີ່ທັນສະໄໝ ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ ໄດ້ໂດຍພື້ນຖານ. ປັດຈຸບັນ ມີຜູ້ລົງທຶນຈາກ 47 ກວ່າປະເທດທົ່ວໂລກ ມາລົງທຶນໃນຕະຫຼາດຫຼັກຊັບລາວ;

4) ບຸກຄະລາກອນຂອງຂະແໜງຕະຫຼາດທຶນ ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ສາມາດຂັບເຄື່ອນວຽກງານຕະຫຼາດທຶນດ້ວຍບາດກ້າວທີ່ໜັກແໜ້ນ ຍ້ອນໄດ້ຮັບການຊ່ວຍເຫຼືອ ແລະ ສະໜັບສະໜຸນຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບຂອງ ສສ.ຫວຽດນາມ, ສປ.ຈີນ, ລາດຊະອານາຈັກໄທ, ສ.ເກົາຫຼີ, ຍີ່ປຸ່ນ, ສະຖາບັນ CPA Australia, ກະຊວງການພັດທະນາການຮ່ວມມື ແລະມະນຸດສະທຳລຸກຊຳບວກ, ໂຄງການພັດທະນາຕະຫຼາດທຶນອາຊຽນ, ຄະນະກຳມະການຄຸ້ມຄອງຫຼັກຊັບ 5 ປະເທດເຂດອ່າງແມ່ນ້ຳຂອງ CMA-GMS, ທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (World Bank), ອົງການການເງິນສາກົນ (IFC) ແລະ ອົງການຈັດຕັ້ງອື່ນໆ.

ຕໍ່ກັບຜົນງານດັ່ງກ່າວນັ້ນ, ລັດຖະບານ ກໍ່ຄື ຄະນະກຳມະການຄຸ້ມຄອງຫຼັກຊັບ ຕີລາຄາສູງຕໍ່ຜົນງານທີ່ບັນດາທ່ານຍາດມາໄດ້ ໃນໄລຍະຜ່ານມາ.

**ນະໂອກາດອັນມີຄວາມໝາຍສຳຄັນນີ້, ໃນນາມລັດຖະບານ, ຄະນະ ຄຄຊ ແລະໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ກັບຜົນສຳເລັດດັ່ງກ່າວ ຢ່າງສຸດໃຈ. (ຂໍຊົມເຊີຍ)**

**ບັນດາທ່ານ ທີ່ຮັກແພງທັງຫຼາຍ,**

ຄຽງຄູ່ກັບໝາກຜົນທີ່ບັນດາທ່ານຍາດມາໄດ້ນັ້ນ ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່ ເຫັນວ່າ ຍັງມີຫຼາຍດ້ານທີ່ພວກເຮົາຈະຕ້ອງໄດ້ພ້ອມກັນສຸມໃສ່ຈັດຕັ້ງປະຕິບັດ, ໄປຄຽງຄູ່ກັບການປັບປຸງແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງໃນໄລຍະຜ່ານມາ ເປັນຕົ້ນແມ່ນ:

1. ຄວາມຫ້າວຫັນ, ຄວາມເສຍສະລະເພື່ອສ່ວນລວມຂອງສະມາຊິກພັກ-ພະນັກງານຍັງບໍ່ທັນສູງແທ້, ການຫັນປ່ຽນໄປສູ່ສິ່ງໃໝ່ໆຍັງຊັກຊ້າ; ວຽກງານການປັບປຸງກົງຈັກການຈັດຕັ້ງ ຍັງບໍ່ທັນຕອບສະໜອງໄດ້ຢ່າງທັນການ;
2. ການປະຕິຮູບລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ ເພື່ອລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຍັງບໍ່ທັນເຮັດຢ່າງຕໍ່ເນື່ອງ ແລະ ເປັນຮູບປະທຳແທ້;

3. ຖານຜູ້ລົງທຶນ ຍັງບໍ່ທັນກວ້າງຂວາງ ແລະ ເຄື່ອນໄຫວບໍ່ຟົດຟື້ນ; ກົນໄກການຊື້-ຂາຍຫຼັກຊັບ ຍັງບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງຜູ້ລົງທຶນ, ການແກ້ໄຂສະພາບຄ່ອງໃນການຊື້-ຂາຍຫຼັກຊັບ ຍັງບໍ່ທັນໄດ້ດີ; ການເຄື່ອນໄຫວໃຫ້ບໍລິການຂອງບໍລິສັດຫຼັກຊັບ ຍັງບໍ່ທັນເລິກເຊິ່ງເຖິງຖອງ.

ສະນັ້ນ, ເພື່ອເຮັດຫຼ້ອນໜ້າທີ່ອັນໜັກໜ່ວງທີ່ມີກຽດສະຫງ່າຄືດັ່ງກ່າວ, ຂ້າພະເຈົ້າ ຂໍມີຄວາມເຫັນເນັ້ນໜັກຕື່ມບາງບັນຫາ ເພື່ອເປັນພື້ນຖານໃຫ້ບັນດາທ່ານ ສືບຕໍ່ນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃນຕໍ່ໜ້າ ຄືດັ່ງນີ້:

1. ຕ້ອງສືບຕໍ່ສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກພັກ-ພະນັກງານດ້ວຍຫຼາຍຮູບການທີ່ເໝາະສົມ ເພື່ອໃຫ້ພະນັກງານມີຄວາມໜັກແໜ້ນທາງດ້ານການເມືອງ ແລະ ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄວາມບຸກບືນຫ້າວຫັນ;
2. ສ້າງເຄື່ອງມືຄຸ້ມຄອງໃຫ້ຮັບປະກັນແກ່ ການພັດທະນາ ແລະ ການຕິດຕາມກວດກາວຽກງານຫຼັກຊັບເປັນຕົ້ນແມ່ນ ຕ້ອງສ້າງ ແລະ ປັບປຸງນິຕິກຳ ໃຫ້ໄດ້ມາດຕະຖານສາກົນ ແລະ ສອດຄ່ອງກັບເງື່ອນໄຂຂອງ ສປປ ລາວ ພ້ອມທັງ ຕິດຕາມການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ປັບປຸງກົນໄກການປະສານງານພາຍໃນ ແລະ ພາຍນອກໃຫ້ຄ່ອງຕົວກວ່າເກົ່າ. ຄົ້ນຄວ້າເພື່ອນຳສະເໜີລັດຖະບານ ທົບທວນບັນດານິຕິກຳນະໂຍບາຍທີ່ກ່ຽວຂ້ອງ ໃຫ້ສອດຄ່ອງໃນແຕ່ລະໄລຍະ ເພື່ອເຮັດໃຫ້ຕະຫຼາດທຶນລາວມີຂໍ້ໄດ້ປຽບ ເມື່ອທຽບກັບຕະຫຼາດທຶນທີ່ມີສະພາບເສດຖະກິດຄ້າຍຄືກັບຕະຫຼາດທຶນລາວ;
3. ສືບຕໍ່ປັບປຸງ ລະບົບ, ກົນໄກ ແລະ ລະບຽບການ ກ່ຽວກັບການພັດທະນາພັນທະບັດລັດຖະບານ ໃຫ້ໜັກແໜ້ນ ເປັນເຄື່ອງມືທາງການເງິນ ທີ່ມີຄວາມເຊື່ອໝັ້ນ ສາມາດຊ່ວຍລັດຖະບານລະດົມທຶນຮອນເຂົ້າສູ່ການພັດທະນາ ແລະ ແກ້ໄຂບັນຫາຝືດເຄືອງທາງດ້ານງົບປະມານ;
4. ພາກສ່ວນກ່ຽວຂ້ອງ ຕ້ອງເປັນເຈົ້າການປະຕິຮູບລັດວິສາຫະກິດ, ວິສາຫະກິດລັດຮຸ້ນສ່ວນ ແລະ ພາກສ່ວນເສດຖະກິດຕ່າງໆ ໃຫ້ມີຄວາມເຂັ້ມແຂງ ແລະ ມີຄວາມພ້ອມລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ. ສຳລັບບໍລິສັດທີ່ຈົດທະບຽນແລ້ວ ຕ້ອງສຸມໃສ່ສ້າງຄວາມເຂັ້ມແຂງເທື່ອລະກ້າວ ດ້ວຍການຫັນໄປນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ການຄຸ້ມຄອງບໍລິຫານຢ່າງມືອາຊີບ (CG) ແລະ ຕ້ອງເອົາໃຈໃສ່ຄຸ້ມຄອງຢ່າງຮັດກຸມ ເພື່ອໃຫ້ເຂົາເຈົ້າເຄື່ອນໄຫວບົນພື້ນຖານລະບຽບການ, ມີຜົນກຳໄລ ແລະ ປັນຜົນໃຫ້ຜູ້ຖືຮຸ້ນ;
5. ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີທ່າແຮງ ສາມາດລະດົມທຶນຜ່ານຕະຫຼາດທຶນ ເພື່ອໃຫ້ວິສາຫະກິດເຫຼົ່ານີ້ ເປັນຕົວຂັບເຄື່ອນເສດຖະກິດຂອງປະເທດ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນລາວບັນດາເຜົ່າ;

6. ຂົນຂວາຍຜູ້ລົງທຶນປະເພດສະຖາບັນພາຍໃນປະເທດ ໃຫ້ມາລົງທຶນໃນຕະຫຼາດທຶນລາວໃຫ້ຫຼາຍຂຶ້ນ, ສ້າງຜະລິດຕະພັນໃໝ່ໃຫ້ມີຄວາມຫຼາກຫຼາຍ ໂດຍສອດຄ່ອງກັບສະພາບເສດຖະກິດ ແລະ ຄວາມຮູ້ຄວາມສາມາດຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນຂອງ ສປປ ລາວ ພ້ອມທັງ ແກ້ໄຂສິ່ງອຸດຕັນຕ່າງໆ ເພື່ອຂຸດຄົ້ນແຫຼ່ງທຶນທີ່ເປັນທ່າແຮງພາຍໃນປະເທດ ເຮັດໃຫ້ບໍລິສັດຈົດທະບຽນ ແລະ ມູນຄ່າການຊື້-ຂາຍ ໃນຕະຫຼາດຫຼັກຊັບລາວ ເພີ່ມຂຶ້ນເລື້ອຍໆ;
7. ເດັດຂາດແກ້ໄຂ ລະບົບ ແລະ ກົນໄກ ການຊື້-ຂາຍຫຼັກຊັບໃຫ້ມີຄວາມຄ່ອງຕົວ, ແກ້ໄຂບັນຫາສະພາບຄ່ອງ ຂອງຕະຫຼາດຫຼັກຊັບລາວໃຫ້ດີກໄປເທື່ອລະກ້າວ;
8. ສ້າງ ແລະ ພັດທະນາເຕັກໂນໂລຊີ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ ແລະ ບໍລິການວຽກງານຫຼັກຊັບ ໃຫ້ມີຄວາມທັນສະໄໝ, ປອດໄພ ແລະ ຮັບປະກັນຮອບດ້ານ;
9. ເອົາໃຈໃສ່ວຽກງານໂຄສະນາເຜີຍແຜ່ ດ້ວຍຫຼາຍວິທີການ, ຫຼາຍຊ່ອງທາງ ແລະ ມີຈຸດສຸມ ເພື່ອຮັບປະກັນໃຫ້ມວນຊົນເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນ ແລະ ປະກອບສ່ວນຕາມພາລະບົດບາດຂອງຕົນ;
10. ວຽກງານຕະຫຼາດທຶນ ເປັນວຽກງານໃໝ່ສຳລັບພວກເຮົາ. ສະນັ້ນ ຕ້ອງເພີ່ມທະວີການພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດ ແລະ ສາກົນ ໃຫ້ມີຄວາມສະໜິດແໜ້ນ, ກົມກຽວ, ກວ້າງຂວາງ ແລະ ມີວິໄສທັດ ທີ່ສອດຄ່ອງກັບສະພາບປົກກະຕິໃໝ່ ຂອງວຽກງານຕະຫຼາດທຶນ.

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງທັງຫຼາຍ,**

ສິ່ງທີ່ກ່າວມາທັງໝົດນັ້ນ, ແມ່ນບາງຄວາມເຫັນທີ່ຢາກເນັ້ນຕື່ມ ຕໍ່ບັນດາທ່ານ. ຂ້າພະເຈົ້າເຊື່ອໝັ້ນວ່າຄະນະນຳ ພ້ອມດ້ວຍພະນັກງານ-ສະມາຊິກພັກທັງໝົດ ຂອງຂະແໜງຕະຫຼາດທຶນ ຈະພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໜ້າທີ່ການເມືອງອັນສູງສົ່ງນີ້ ໃຫ້ມີຜົນສຳເລັດຕາມແຜນທີ່ໄດ້ກຳນົດໄວ້. ພ້ອມນີ້, ຮຽກຮ້ອງມາຍັງບັນດາກະຊວງ, ອົງການ, ບັນດາປະເທດ ສະມາຊິກ ASEAN, ASEAN+3 ແລະ ອົງການຈັດຕັ້ງສາກົນຕ່າງໆ ຈົ່ງສືບຕໍ່ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນ ແກ່ຕະຫຼາດທຶນລາວ ເພື່ອເຮັດໃຫ້ຕະຫຼາດທຶນລາວ ກາຍເປັນຂໍກະແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ ຕາມທີ່ໄດ້ກຳນົດໄວ້ ໃນວິໄສທັດພັດທະນາຕະຫຼາດທຶນລາວ ຮອດປີ 2030.

ພິເສດ, ໃນຖານະຕະຫຼາດຫຼັກຊັບ ສ.ເກົາຫຼີ ເປັນຄູ່ຮ່ວມທຶນ ສະນັ້ນ ຈຶ່ງຮຽກຮ້ອງມາຍັງຕະຫຼາດຫຼັກຊັບ ສ.ເກົາຫຼີ ກໍ່ຄື ລັດຖະບານ ສ.ເກົາຫຼີ ຈົ່ງສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອຮອບດ້ານ ໂດຍສະເພາະແມ່ນການກໍ່ສ້າງດ້ານບຸກຄະລາກອນຂອງຕະຫຼາດຫຼັກຊັບລາວ ໃຫ້ມີຄວາມຮູ້ຄວາມສາມາດ ສົມຄູ່ກັບລະດັບການຂະຫຍາຍຕົວຂອງຕະຫຼາດທຶນໃນເງື່ອນໄຂໃໝ່, ສືບຕໍ່ເອົາໃຈໃສ່ພັດທະນາລະບົບໄອທີຂອງຕະຫຼາດຫຼັກຊັບລາວໃຫ້

ມີຄວາມທັນສະໄໝ ພ້ອມທັງ ຕິດຕາມກວດກາຢ່າງໃກ້ສິດ ຮັບປະກັນລະບົບດັ່ງກ່າວໃຫ້ດຳເນີນການຢ່າງເປັນປົກກະຕິ, ປອດໄພ ແລະ ຕໍ່ເນື່ອງ.

ທ້າຍສຸດນີ້, ຂໍອວຍໄຊໃຫ້ພອນແດ່ບັນດາທ່ານທັງໝົດ ຈົ່ງມີສຸຂະພາບແຂງແຮງ, ມີຜົນສຳເລັດໃນໜ້າທີ່ການເມືອງ ທີ່ການຈັດຕັ້ງມອບໝາຍໃຫ້. ຂໍໃຫ້ຕະຫຼາດທຶນລາວ ຈົ່ງຈະເລີນຮຸ່ງເຮືອງ ແລະ ຄຽງຄູ່ກັບຊາດລາວຕະຫຼອດໄປ.

**(ຂໍຂອບໃຈ)**

# ພາກທີ V

# ຮູບພາບບັນຍາກາດ ພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ (10/2010-10/2020)

## I. ການເຄື່ອນໄຫວຂະບວນການຕ່າງໆເນື່ອງໃນໂອກາດສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ

### 1. ຂະບວນການວິຊາສະເພາະ

- ໄດ້ຈັດງານເສວະນາ (Panel Discussion) ຫົວຂໍ້: ການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ ແລະ ການຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິຫານ (Corporate Governance) ພ້ອມທັງ, ຈັດກິດຈະກຳຫຼິ້ນເກມຖາມ-ຕອບ ແລະ ແຈກຂອງລາງວັນ ກ່ຽວກັບວຽກງານຕະຫຼາດທຶນ ໃນງານສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ;
- ລົງໂຄສະນາເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບຕະຫຼາດທຶນ ແລະ ຈັດງານ Panel Discussion ກ່ຽວກັບການລົງທຶນໃນຮຸ້ນ ຫຼາຍກວ່າ 15 ຄັ້ງ ຜູ້ເຂົ້າຮ່ວມປະມານ 1.800 ຄົນ;
- ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈຳນວນ 8 ຄັ້ງ ຢູ່ພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ມີຜູ້ເຂົ້າຮ່ວມທັງໝົດ 793 ຄົນ;
- ເຜີຍແຜ່ນິຕິກຳກ່ຽວຂ້ອງກັບວຽກງານຫຼັກຊັບ ໃຫ້ບໍລິສັດຈົດທະບຽນ ຈຳນວນ 5 ຄັ້ງ ຢູ່ 10 ບໍລິສັດ ມີຜູ້ເຂົ້າຮ່ວມທັງໝົດ 110 ຄົນ;
- ສ້າງກະຕູນເອນິເມຊັນ ຈຳນວນ 2 ເລື່ອງ: (1) ພາກສ່ວນທີ່ມີສ່ວນຮ່ວມໃນການລະດົມທຶນຜ່ານຕະຫຼາດທຶນ ແລະ (2) ການກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ເພື່ອລົງເຜີຍແຜ່ໃນເຟສບຸກ, ຢູທູບ ແລະ ເຜີຍແຜ່ກັບທີ່.

### 2. ຂະບວນການກິລາ

- ຈັດກິລາເຕະບານ ແລະ ຕີບູນ ສາມັກຄີ ລະຫວ່າງ ສຄຄຊ, ຕລຊລ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ 3 ຄັ້ງ;
- ອອກແຮງງານລວມໝູ່ ບໍລິເວນຕຶກ ສຄຄຊ ແລະ ຕຶກ ຕລຊລ ຈຳນວນ 2 ຄັ້ງ.

### 3. ຂະບວນການຊ່ວຍເຫຼືອສັງຄົມ

- ສຄຄຊ, ຕລຊລ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ໄດ້ຮ່ວມໃຈສະໜັບສະໜູນວັດຖຸປັດໃຈ ມອບໃຫ້ໂຮງຮຽນປະຖົມ 3 ແຫ່ງ ຢູ່ເມືອງເຟືອງ, ແຂວງ ວຽງຈັນ ລວມມູນຄ່າ: 29.000.000 ກີບ.

### 4. ຂະບວນການອື່ນໆ

- ສຄຄຊ, ຕລຊລ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ຕິດປ້າຍຄຳຂວັນຊົມເຊີຍຜົນສຳເລັດຂອງຕະຫຼາດທຶນລາວ ຄົບຮອບ 10 ປີ;
- ສະມາຊິກພັກ ແລະ ພະນັກງານຂອງ ສຄຄຊ ແລະ ຕລຊລ ໄດ້ຮ່ວມໃຈກັນບໍລິຈາກເລືອດ ຈຳນວນ 2 ຄັ້ງ 8 ທ່ານ;

- ສ້າງວິດີໂອສະຫຼຸບຜົນງານຕະຫຼາດທຶນລາວ 10 ປີ;
- ສ້າງກະດານສະແດງຜົນງານ 5 ກະດານ: (1) ກະດານສະແດງຜົນງານການກະກຽມສ້າງຕັ້ງຕະຫຼາດທຶນລາວ; (2) ກະດານສະແດງຜົນງານການພັດທະນາຕະຫຼາດທຶນລາວ ແຕ່ປີ 2010 - 2020; (3) ກະດານສະແດງຜົນງານພົ້ນເດັ່ນການເຄື່ອນໄຫວວຽກງານຕະຫຼາດທຶນລາວໃນປະຈຸບັນ; (4) ກະດານສະແດງໂຄງປະກອບການຈັດຕັ້ງຕະຫຼາດທຶນລາວ; (5)ກະດານສະແດງວັນສ້າງຕັ້ງຕະຫຼາດທຶນລາວຄົບຮອບ 10 ປີ;
- ຜະລິດແຜ່ນພັບວຽກງານຕະຫຼາດທຶນ ຂອງ ສຄຄຊ ແລະ ຕລຊລ ຈຳນວນ 5,000 ແຜ່ນ ແຈກຢາຍເປັນຂໍ້ມູນຕະຫຼາດທຶນລາວ.

## II. ຮູບພາບບັນຍາກາດພິທີສະຫຼຸບຜົນງານຂອງຕະຫຼາດທຶນລາວ ຄົບຮອບ 10 ປີ

# ພາບລວມບັນຍາກາດລົງທະບຽນກ່ອນເຂົ້າງານ






# ພາບລວມບັນຍາກາດຫ້ອງ VIP





# ພາບບັນຍາກາດຫ້ອງພິທີ





ດຣ ສຸດທິເດດ ບຸນລືໄຊ, ຮອງຜູ້ອຳນວຍການບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ເຮັດໜ້າທີ່ເປັນພິທີກອນ



ພາບບົດຟ້ອນອວຍພອນ ໂດຍກອງສິນລະປະກອນ ກອງທັບ



ພາບບົດຟ້ອນອວຍພອນ ໂດຍກອງສິນລະປະກອນ ກອງທັບ




ພາບການສະແດງຮ້ອງເພງ “ທາງດ່ວນເງິນທຶນ”



ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເລຂາຄະນະກຳມະການຄຸ້ມຄອງຫຼັກຊັບລາຍງານໂດຍສັງເຂບຜົນງານການເຄື່ອນໄຫວ 10 ປີ ຕະຫຼາດທຶນລາວ




ທ່ານ ອ໊ອດ ພົນຊຽງດີ, ຜູ້ອຳນວຍການ ຕລຊລ ລາຍງານກ່ຽວກັບແຜນ 5 ປີຕໍ່ໜ້າ ຂອງ ຕລຊລ



ທ່ານ ພານຸສັກ ແກ່ນວົງພະຈັນ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ອ່ານຂໍ້ຕົກລົງຍ້ອງຍໍຂອງຂັ້ນເທິງ




ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ ໃຫ້ກຽດມອບໃບຍ້ອງຍໍໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ ແລະ ຂາຮຸ້ນ ສ.ເກົາຫຼີ (KRX)



ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ ໃຫ້ກຽດມອບໃບຍ້ອງຍໍ ໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ






ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ, ກຳມະການ ຄຄຊ ໃຫ້ກຽດມອບໃບຊົມເຊີຍໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ






## ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານ ຄຄຊ, ເລຂາ ຄຄຊ ໃຫ້ກຽດມອບໂລ່ທີ່ລະນຶກ 10 ປີ ຕະຫຼາດທຶນລາວ ໃຫ້ແກ່ ການຈັດຕັ້ງ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ






ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈຳການ ໃຫ້ກຽດມອບໃບຍ້ອງຍໍ ໃຫ້ແກ່ຄະນະຮັບຜິດຊອບສ້າງຕັ້ງຕະຫຼາດຫຼັກຊັບລາວ




ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການ ທຫລ, ຕາງໜ້າຂາຮຸ້ນຝ່າຍລາວ ມີຄຳເຫັນ



## ທ່ານ ຈອງ ຈິວອນ ຕາງໜ້າຂາຮຸ້ນຈາກຕະຫຼາດຫຼັກຊັບ ສ.ເກົາຫຼີ (KRX) ມີຄຳເຫັນຜ່ານເທບ ວິດີໂອ




## ທ່ານ SHIN Sung-soon ເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມແຫ່ງ ສ.ເກົາຫຼີ ປະຈຳ ສປປ ລາວ ໃຫ້ກຽດມີຄຳເຫັນ



ທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໃຫ້ກຽດໂອ້ລົມ



## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ




## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງຕະຫຼາດຫຼັກຊັບລາວ



## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ




## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ທະນາຄານການຄ້າ ຕ່າງປະເທດ ລາວ ມະຫາຊົນ (ບໍລິສັດຈົດທະບຽນ ແລະ ທະນາຄານຕົວແທນເພື່ອການຊໍາລະ)



## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ປີໂຕຣລ້ຽມ ເທຣດດິ້ງ ມະຫາຊົນ




## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ



ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ລາວເວີນ ມະຫາຊົນ




ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ



## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ຊີມັງລາວ ມະຫາຊົນ




## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ



# ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ




# ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ



ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ




ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ທະນາຄານພັດທະນາລາວ

(ທະນາຄານຕົວແທນເພື່ອການຊຳລະ)



## ແຂກ VIP ຢ້ຽມຊົມກະດານພົນງານ 10 ປີຂອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ




## ແຂກ VIP ຢ້ຽມຊົມກະດານພົນງານ 10 ປີຂອງ ບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ



## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ລາວ ປະເມີນມູນຄ່າຊັບສິນ ຈຳກັດ




## ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນເຊີແມນ (ລາວ) ຈຳກັດ



ກະດານຜົນງານ 10 ປີຂອງ ບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ




ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ລາວ ວາລູ ປະເມີນມູນຄ່າ ຊັບສິນ ຈຳກັດຜູ້ດຽວ



ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ເຄເຄ ລາວ ປະເມີນມູນຄ່າ ຊັບສິນ ຈຳກັດ




ແຂກ VIP ຢ້ຽມຊົມກະດານຜົນງານ 10 ປີຂອງ ທະນາຄານ ອຸດສາຫະກຳ ແລະ ການ ຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ທະນາຄານດູແລຊັບສິນ)



## ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ດີລອຍ ລາວ ຈຳກັດ, ເຊິ່ງເຮັດໜ້າທີ່ ເປັນບໍລິສັດກວດສອບ ໃນວຽກງານຫຼັກຊັບ




## ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ເຄພີເອັມຈີ ລາວ, ເຊິ່ງເຮັດໜ້າທີ່ເປັນ ບໍລິສັດກວດສອບ ໃນວຽກງານຫຼັກຊັບ



ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ເອີນແອນຢັງ ລາວ ຈຳກັດ, ເຊິ່ງເຮັດໜ້າ ທີ່ເປັນບໍລິສັດກວດສອບ ໃນວຽກງານຫຼັກຊັບ




ຢ້ຽມຊົມກະດານຜົນງານ 10 ປີຂອງ ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ, ເຊິ່ງເຮັດໜ້າທີ່ເປັນບໍລິສັດກວດສອບ ໃນວຽກງານຫຼັກຊັບ



ຮູບພາບວາລະສົນທະນາໃນຮູບແບບ Pannel Discussion ໃນຫົວຂໍ້: (1) ການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ ແລະ (2) ການຈັດຕັ້ງປະຕິບັດຫຼັກການຄຸ້ມຄອງບໍລິຫານ (CG)




ຮູບພາບການຖາມ-ຕອບຄວາມຮູ້ທົ່ວໄປ ກ່ຽວກັບຕະຫຼາດທຶນ



# ຮູບພາບພະນັກງານ ສຄຄຊ






# ຮູບພາບພະນັກງານ ສຄຄຊ






# ຮູບພາບແຂກເຂົ້າຮ່ວມພິທີ






# ຮູບພາບແຂກເຂົ້າຮ່ວມພິທີ






# ຮູບພາບແຂກເຂົ້າຮ່ວມພິທີ






# ຮູບພາບແຂກເຂົ້າຮ່ວມພິທີ






# ຮູບພາບແຂກເຂົ້າຮ່ວມພິທີ






## ຮູບພາບແຂກເຂົ້າຮ່ວມພິທີ






# ພາກທີ VI

## ຕົວເລກສະຖິຕິ ແລະ ເສັ້ນສະແດງ ການເຄື່ອນໄຫວວຽກງານ 10 ປີ ຕະຫຼາດທຶນລາວ

### I. ຍອດສະສົມການລະດົມທຶນ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2020 (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ)

ແຜນວາດ: ການລະດົມທຶນຢູ່ພາຍໃນ ແລະ ຕ່າງປະເທດ ແຕ່ປີ 2010-2020

ຫົວໜ່ວຍ: ຕື້ກີບ




### II. ມູນຄ່າການຊື້-ຂາຍ (2010-2020)

ແຜນວາດ: ມູນຄ່າການຊື້-ຂາຍຮຸ້ນໃນ ຕລຊລ ນັບແຕ່ປີ 2011- ປີ 2020

ຫົວໜ່ວຍ: ຕື້ກີບ



## III. ມູນຄ່າຕະຫຼາດ (2010-2020)

ແຜນວາດ: ມູນຄ່າຕະຫຼາດຂອງບໍລິສັດຈົດທະບຽນໃນ ຕລຊລ ນັບແຕ່ປີ 2010- ປີ 2020




## IV. ດັດຊະນີຕະຫຼາດຫຼັກຊັບລາວ (2010-2020)

ແຜນວາດ: ດັດຊະນີ ຕລຊລ ນັບແຕ່ປີ 2010- ເດືອນ ທັນວາ 2020



## V. ປະລິມານການຊື້-ຂາຍ

ແຜນວາດ: ປະລິມານການຊື້-ຂາຍຮຸ້ນໃນ ຕລຊລ ນັບແຕ່ປີ 2011- ປີ 2020




## VI. ຖານຜູ້ລົງທຶນ



## VII. ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນໃນ ຕລຊລ

ຫົວໜ່ວຍ: ກີບ

| ຮຸ້ນ | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|---|---|---|---|---|
| EDL-Gen | 448,7 | 405,0 | 475,0 | 450,0 | 260,0 | 290,0 | 290,0 | 270,0 | 100,0 | 100,0 |
| BCEL | 698,92 | 791,1 | 785,0 | 594,0 | 392,0 | 614,0 | 712,0 | 991,0 | 813,0 | 560,0 |
| LWPC | | | - | 200,0 | 200,0 | 100,0 | - | - | - | - |
| PTL | | | | 66,0 | 76,0 | - | - | - | - | - |
| SVN | | | | | 45,0 | 20,0 | 10,0 | 8,0 | 16,0 | 20,38 |
| PCD | | | | | | | 7,45 | - | - | - |
| LCC | | | | | | | 63,0 | 30,0 | - | - |
| MHTL | | | | | | | | 147,0 | 100,0 | 155,0 |
| LAT | | | | | | | | - | - | - |
| VCL | | | | | | | | | 13,14 | 12,5 |
| LALCO | | | | | | | | | - | - |

